# ຄໍານໍາ

ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ສະບັບເລກທີ 05/ນຍ, ລົງວັນທີ 21 ພຶດສະພາ 2019.

ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງແຜນພັດທະນາວຽກງານ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ 5 ປີ (2021-2025) ສະບັບເລກທີ 749/ຖວທ, ລົງວັນທີ 05 ສິງຫາ 2019.

ຄະນະນໍາກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວໄດ້ມອບໃຫ້ ທ່ານ ບົດເງິນ ຊາພູວົງ ຮອງລັດຖະມົນຕີ ເປັນຜູ້ຊີ້ນໍາການຄົ້ນຄວ້າ ໃນການສ້າງແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ 5 ປີ (2021-2025). ຄະນະປະກອບດ້ວຍອານຸກໍາມະການເນື້ອໃນ, ກອງເລຂາ ແລະ ມີພະນັກງານຈາກກົມ, ກອງຕ່າງໆ ພາຍໃນກະຊວງ ເຂົ້າຮ່ວມໃນການສ້າງແຜນຂັ້ນສູນກາງ ທັງໝົດ 87 ທ່ານ, ການສ້າງແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ເດືອນ ສິງຫາ 2019; ຂະບວນການສ້າງແຜນພັດທະນາ ວຽກງານ ຖວທ ໃນເບື້ອງຕົ້ນແມ່ນໄດ້ຈັດຕັ້ງການສໍາມະນາ ແລະ ທົບທວນຄືນການຂຽນແຜນຍຸດທະສາດພັດທະນາໂດຍລວມ ໃຫ້ປະຕິບັດຫຼັກການສ້າງແຜນຢ່າງມີຈຸດສຸມ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້. ຈາກນັ້ນກໍ່ໄດ້ມີການແບ່ງຄວາມຮັບຜິດຊອບໃຫ້ບັນດາກົມ, ກອງໄປຄົ້ນຄວ້າ ສັງລວມຂໍ້ມູນໃນຂະແໜງການຕົນ ກ່ຽວກັບຜົນສໍາເລັດ, ຈຸດອ່ອນຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານຜ່ານມາ ແລະ ສັງລວມເປັນແຜນກິດຈະກໍາທີ່ຈະປະຕິບັດໃນຕໍ່ໜ້າ. ສໍາລັບຂະແໜງການທ່ອງທ່ຽວ ແມ່ນໄດ້ອີງໃສ່ ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 2006-2020 ຂອງ ສປປ ລາວ ທີ່ລັດຖະບານໄດ້ຮັບຮອງ ແລະປະກາດໃຊ້ຕາມດໍາລັດເລກທີ 96/ນຍ, ລົງວັນທີ

20/03/2007 ແລະ ເອກະສານແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ 2011-2020 (ສະບັບປັບປຸງ).

ເນື້ອໃນເອກະສານ ແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຜ່ານການຄົ້ນຄວ້າ ແລະ ປັບປຸງຫຼາຍຄັ້ງຈາກແຕ່ລະກົມກອງ ແລ້ວສັງລວມເປັນຂະແໜງການ ແລະ ໄດ້ຜ່ານຂະແໜງການກ່ຽວຂ້ອງແລ້ວຈຶ່ງໄດ້ສັງລວມເປັນສະບັບສົມບູນ ເພື່ອຂໍການຮັບຮອງຈາກທ່ານລັດຖະມົນຕີ.

ຜ່ານການຈັດຕັ້ງປະຕິບັດໂຄງການ ສ້າງແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຊ່ວຍສ້າງທັກສະທາງດ້ານວິຊາການໃນການວາງແຜນໃຫ້ພະນັກງານວິຊາການຂອງກົມກອງອ້ອມຂ້າງກະຊວງໄດ້ຮັບການພັດທະນາດີຂຶ້ນ ໂດຍສາມາດຄົ້ນຄວ້າ,ສັງລວມບັນດາກິດຈະກຳ ທີ່ຕິດພັນກັບວຽກວິຊາການຂອງຕົນ ມາເປັນເປົ້າໝາຍ, ວຽກງານຈຸດສຸມ ແລະ ໂຄງການ ທີ່ແທດເໝາະກັບສະພາບຕົວຈິງຂອງວຽກງານ. ນອກນີ້, ຍັງໄດ້ຊ່ວຍໃຫ້ພະນັກງານວິຊາການທີ່ກ່ຽວຂ້ອງຂອງແຕ່ລະກົມກອງ ມີຄວາມເຂົ້າໃຈເລິກເຊິ່ງໃນການກຳນົດແຜນພັດທະນາວຽກງານທີ່ຕິດພັນກັບວຽກວິຊາການຂອງຕົນ, ພ້ອມກັນນັ້ນກໍ່ເຮັດໃຫ້ທຸກພາກສ່ວນມີຄວາມຮັບຜິດຊອບສູງ ໃນການກຳນົດວຽກງານຈຸດສຸມໃຫ້ມີຄວາມສອດຄ່ອງ ໃນສະພາບທີ່ປະເທດເຮົາກຳລັງປະເຊີນໜ້າກັບຄວາມທ້າທາຍທາງດ້ານເສດ ຖະກິດ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງມີປະສິດທິພາບ ແລະ ປະສິດທິຜົນ.

ຜົນສຳເລັດຂອງການສ້າງແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 2021-2025 ແມ່ນຍ້ອນໄດ້ຮັບການຊີ້ນຳຢ່າງໃກ້ຊິດຕິດແທດ ຈາກການນຳກະຊວງ ແລະ ພະນັກງານທີ່ໄດ້ຮັບການແຕ່ງຕັ້ງໄດ້ເສຍ ສະຫຼະເວລາ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງ ເຊິ່ງເຮັດໃຫ້ການຈັດຕັ້ງປະຕິບັດການສ້າງແຜນດັ່ງກ່າວ ສຳເລັດໄດ້ຕາມຄາດໝາຍ.

ຕາງໜ້າ ຄະນະນຳກະຊວງ ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈມາຍັງ ບັນດາກົມກອງວິຊາການ ພາຍໃນກະຊວງ ທີ່ເປັນເຈົ້າການໃນການເກັບກຳສັງລວມເນື້ອໃນ, ຂໍ້ມູນທັງໝົດ ເພື່ອຄົ້ນຄວ້າວິໄຈ ແລະ ເປັນເຈົ້າການກຳນົດບັນດາວຽກງານຈຸດສຸມ ໂດຍຜ່ານກອງປະຊຸມວິຊາການຫຼາຍຄັ້ງ ເຮັດໃຫ້ແຜນພັດທະນາວຽກງານ ຖວທ 5 ປີ (2021-2025) ມີເນື້ອໃນສອດຄ່ອງກັບສະພາບຕົວຈິງ. ເອກະສານດັ່ງກ່າວນີ້ຈະເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການ ໂດຍຜັນຂະຫຍາຍວຽກງານຈຸດສຸມ, ໂຄງການພັດທະນາໃນຂົງເຂດວຽກງານຖະແຫຼງຂ່າວ, ວັດທະ ນະທຳ ແລະ ທ່ອງທ່ຽວ ໃນໄລຍະ 2021-2025 ເປັນພື້ນຖານ ໃນການສ້າງຄວາມເຂັ້ມແຂງເພື່ອສູ້ຊົນເຮັດໃຫ້ວິໄສທັດ ຮອດປີ 2030 ຂອງຂະແໜງການໄດ້ຮັບຜົນສຳເລັດ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດໃຫ້ໄດ້ຕາມຄາດໝາຍ ທີ່ກຳນົດໄວ້.

ຮອງລັດຖະມົນຕີ

ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຜູ້ຊີ້ນຳສ້າງເອກະສານ

ບົວເງິນ ຊາພູວົງ

# ສາລະບານ

ຄຳນຳ.......................................................................................................i

ສາລະບານ ...............................................................................................iii

**ພາກທີ I** .......................................................................................................1

ສະພາບການລວມ .....................................................................................................1

I. ສະພາບຂອງພາກພື້ນ ແລະ ສາກົນ ............................................................................ 1

II. ສະພາບພາຍໃນປະເທດ ........................................................................................ 3

**ພາກທີ II** .......................................................................................................7

ສະຫຼຸບການຈັດຕັ້ງປະຕິບັດວຽກງານ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ 2016-2020 .......................7

**I. ວຽກງານຖະແຫຼງຂ່າວ-ສື່ມວນຊົນ** ............................................................................ 7

1. ວຽກການໂຄສະນາ.......................................................................................... 7
2. ວຽກງານການຄຸ້ມຄອງ........................................................................................ 8
3. ວຽກພັດທະນາເຕັກນິກ ໂຄງລ່າງພື້ນຖານ........................................................................ 9
4. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ.................................. 11
5. ຈຸດອ່ອນ ແລະ ຂໍ້ຄົງຄ້າງ .................................................................................. 13

**II. ວຽກງານວັດທະນະທຳ**...................................................................................... 14

1. ວຽກສິລະປະການສະແດງ .................................................................................. 14
2. ວຽກວັດທະນະທຳມະຫາຊົນ................................................................................ 15
3. ວຽກພິມຈຳໜ່າຍ........................................................................................... 16
4. ວຽກມໍຣະດົກ ............................................................................................. 17
5. ວຽກວິຈິດສິນ ............................................................................................. 18
6. ວຽກຮູບເງົາ ................................................................................................ 19
7. ວຽກງານສະມາຄົມວິຊາຊີບວັດທະນະທຳ..................................................................... 19
8. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງວັດທະນະທຳ.............................................. 20
9. ຈຸດອ່ອນ ແລະ ຂໍ້ຄົງຄ້າງ .................................................................................. 21

**III. ວຽກງານທ່ອງທ່ຽວ** ........................................................................................ 21

1. ວຽກງານພັດທະນາການທ່ອງທ່ຽວ........................................................................... 21
2. ວຽກງານໂຄສະນາການທ່ອງທ່ຽວ............................................................................ 24

3. ວຽກງານຄຸ້ມຄອງການທ່ອງທ່ຽວ........................................................................................ 26
4. ວຽກງານພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ ................................................. 30
5. ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ................................................. 31
6. ການຈັດຕັ້ງປະຕິບັດແຜນການລົງທຶນ ໃນວຽກງານທ່ອງທ່ຽວ. ................................................ 32
7. ຈຸດອ່ອນ ແລະ ຂໍ້ຄົງຄ້າງ .................................................................................................. 33

**IV. ວຽກງານເສນາທິການ** ................................................................................................ 34

1. ວຽກງານຫ້ອງການ............................................................................................................ 35
2. ວຽກງານຈັດຕັ້ງພະນັກງານ................................................................................................. 36
3. ວຽກງານແຜນການ-ການເງິນ .............................................................................................. 36
4. ວຽກງານຮ່ວມມືສາກົນ....................................................................................................... 38
5. ວຽກງານນິຕິກຳ............................................................................................................... 39
6. ວຽກງານກວດກາ. ............................................................................................................ 40
7. ວຽກງານພັດທະນາບຸກຄະລາກອນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ............................. 41
8. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງເສນາທິການ..................................................... 42
9. ຈຸດອ່ອນ ແລະ ຂໍ້ຄົງຄ້າງ .................................................................................................. 43

V. **ສາເຫດທີ່ພາໃຫ້ມີຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້**............................................... 43

1. ສາເຫດທີ່ພາໃຫ້ມີຈຸດດີ...................................................................................................... 43
2. ສາເຫດທີ່ພາໃຫ້ມີຈຸດອ່ອນ.................................................................................................. 44
3. ບົດຮຽນທີ່ຖອດຖອນໄດ້...................................................................................................... 45

**ພາກທີ III .......................................................................................................................49**

**ແຜນພັດທະນາວຽກງານ ຖວທ 5 ປີ (2021-2025) ..................................................................49**

**I. ບ່ອນອີງ ............................................................................................................................49**

**II. ການວິເຄາະຈຸດດີ, ຈຸດອ່ອນ, ກາລະໂອກາດ ແລະ ສິ່ງທ້າທາຍ.................................................49**

1. ຈຸດດີ:.............................................................................................................................. 49
2. ຈຸດອ່ອນ:......................................................................................................................... 50
3. ກາລະໂອກາດ .................................................................................................................. 51
4. ສິ່ງທ້າທ້າຍ ...................................................................................................................... 52

**III. ຈຸດໝາຍລວມ, ເປົ້າໝາຍ, ຄາດໝາຍຕົ້ນຕໍ ແລະ ແຜນວຽກຈຸດສຸມ** ........................................... **53**

**❖ ຈຸດໝາຍລວມຂອງ ຖວທ ..................................................................................................53**

**1. ວຽກງານຖະແຫຼງຂ່າວ.........................................................................................................53**

1.1 ຈຸດໝາຍລວມຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ ........................................................... 53
1.2 ເປົ້າໝາຍຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ ................................................................. 53
1.3 ຄາດໝາຍຕົ້ນຕໍຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ ........................................................ 54
1.4 ວຽກງານຈຸດສຸມຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ....................................................... 55

1.5 ແຜນການຈັດຕັ້ງປະຕິບັດ ແລະ ເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນ 5 ປີ (2021-2025) ........ 57
1.6 ແຜນການລົງທຶນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ ........ 57
**2. ວຽກງານວັດທະນະທຳ........ 58**
2.1 ຈຸດໝາຍລວມຂອງວຽກງານວັດທະນະທຳ ........ 58
2.2 ເປົ້າໝາຍຂອງວຽກງານວັດທະນະທຳ........ 58
2.3 ຄາດໝາຍຕົ້ນຕໍຂອງວຽກງານວັດທະນະທຳ........ 59
2.4 ວຽກງານຈຸດສຸມຂອງວຽກງານວັດທະນະທຳ ........ 61
2.5 ແຜນການຈັດຕັ້ງປະຕິບັດ ແລະ ເຊື່ອມສານເປົ້າໝາຍ ການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)........ 63
2.6 ແຜນການລົງທຶນໃນຂະແໜງວັດທະນະທຳ........ 64
**3. ວຽກງານທ່ອງທ່ຽວ........ 65**
3.1 ຈຸດໝາຍລວມຂອງວຽກງານທ່ອງທ່ຽວ ........ 65
3.2 ເປົ້າໝາຍຂອງວຽກງານທ່ອງທ່ຽວ........ 65
3.3 ຄາດໝາຍຕົ້ນຕໍຂອງວຽກງານທ່ອງທ່ຽວ ........ 65
3.4 ວຽກງານຈຸດສຸມຂອງວຽກງານທ່ອງທ່ຽວ ........ 67
3.5 ແຜນການຈັດຕັ້ງປະຕິບັດ ແລະເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນ 5 ປີຄັ້ງທີ IX........ 69
3.6 ແຜນການລົງທຶນໃນຂະແໜງການທ່ອງທ່ຽວ........ 70
**4. ວຽກງານເສນາທິການ ........ 71**
4.1 ຈຸດໝາຍລວມຂອງວຽກງານເສນາທິການ........ 71
4.2 ເປົ້າໝາຍຂອງວຽກງານເສນາທິການ ........ 71
4.3. ຄາດໝາຍຕົ້ນຕໍຂອງວຽກງານເສນາທິການ ........ 71
4.4 ວຽກງານຈຸດສຸມຂອງວຽກງານເສນາທິການ........ 72
4.5 ແຜນການລົງທຶນໃນຂະແໜງການເສນາທິການ ........ 74
**ພາກທີ IV........ 75**
**ກົນໄກ, ມາດຕະການ ແລະການຕິດຕາມກວດກາ-ປະເມີນຜົນ ........ 75**
1. ກົນໄກໃນການຈັດຕັ້ງປະຕິບັດ........ 75
2. ມາດຕະການໃນການຈັດຕັ້ງປະຕິບັດ........ 76
3. ການຕິດຕາມ, ກວດກາ ແລະ ປະເມີນຜົນ ........ 77
**ເອກະສານຊ້ອນທ້າຍ........**

# ພາກທີ I
# ສະພາບການລວມ

## I. ສະພາບຂອງພາກພື້ນ ແລະ ສາກົນ

ປັດຈຸບັນ ແມ່ນຍຸກໂລກາພິວັດ, ຍຸກຂອງການເຊື່ອມໂຍງ ແລະ ເປັນຍຸກແຫ່ງການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ບໍ່ສະເພາະແຕ່ເຄືອຂ່າຍການຖ່າຍທອດ ແລະ ສິ່ງຂໍ້ມູນຂ່າວສານເທົ່ານັ້ນ, ແຕ່ຄວາມກ້າວໜ້າດັ່ງກ່າວຍັງໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງໄປໃນທຸກຂົງເຂດວຽກງານ ແລະ ໄດ້ກາຍເປັນກຳລັງແຮງຊຸກຍູ້ເຮັດໃຫ້ການພັດທະນາເສດຖະກິດ ແລະ ສັງຄົມຂອງໂລກໄດ້ຮັບຜົນກະ ທົບຮອບດ້ານທັງໃນດ້ານບວກ ແລະດ້ານລົບ.

ວຽກງານຖະແຫຼງຂ່າວ-ສື່ມວນຊົນເປັນຂະແໜງການໜຶ່ງທີ່ມີຄວາມສຳຄັນແລະຈຳເປັນໃນປັດຈຸບັນເພາະມັນເປັນກະບອກສຽງຂອງສັງຄົມ, ສື່ສານທຸກເຫດການທີ່ເກີດຂຶ້ນຢູ່ພາຍໃນປະເທດ ແລະ ທົ່ວໂລກໃຫ້ສັງຄົມໄດ້ຮັບຊາບຢ່າງທັນການ; ໄດ້ຮັບຮູ້,ຊື່ນຊົມ ແລະ ຍິນດີກັບຂ່າວດີ ເຊັ່ນ: ຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມ, ການຄິດຄົ້ນນະວັດຕະກຳໃໝ່ໆ, ຂ່າວກິລາ, ຂ່າວບັນເທີງ ແລະ ຂໍ້ມູນຂ່າວສານດ້ານອື່ນໆ. ນອກນັ້ນ, ຍັງເຮັດໃຫ້ສັງຄົມໄດ້ຮັບຮູ້ເຫດການທີ່ມີຜົນກະທົບທາງດ້ານລົບ: ອຸທົກກະໄພທາງທຳມະຊາດ, ການລະບາດຂອງພະຍາດ, ອຸປະຕິເຫດ, ການຈາລະຈົນ, ສົງຄາມ ແລະ ອື່ນໆ; ໃນຍຸກການແຂ່ງຂັນດ້ານການຕະຫຼາດ ສື່ສັງຄົມອອນລາຍ ມີບົດບາດສາຄັນໃນການຂັບເຄື່ອນລະບົບເສດຖະກິດ ເຊິ່ງໄດ້ສະທ້ອນໃຫ້ເຫັນຄວາມເປັນຈິງຂອງສັງຄົມ.

ວຽກງານວັດທະນະທຳເປັນໃຈກາງແຫ່ງການສື່ສານຄວາມສຳພັນຂອງບັນດາປະເທດໃນເວທີຕ່າງໆຂອງພາກພື້ນ ແລະ ສາກົນຢ່າງຕໍ່ເນື່ອງ, ໃນຂະບວນການອານຸລັກຮັກສາ ແລະ ສົ່ງເສີມວິຖີຊີວິດວັດທະນະທຳຂອງມວນມະນຸດໃນໂລກທີ່ມີຄວາມຫຼາກຫຼາຍທາງເຊື້ອຊາດ, ຄວາມເຊື່ອຖື, ສາສະໜາ, ຮີດຄອງປະເພນີ, ເອກະລັກຂອງແຕ່ລະປະເທດ ແລະ ອື່ນໆ ບົນພື້ນຖານການເຄົາລົບອະທິປະໄຕຂອງແຕ່ລະຊາດ, ເຖິງແມ່ນວ່າໂລກປັດຈຸບັນຈະມີຄວາມຈະເລີນທາງດ້ານວັດຖຸຫຼາຍປານໃດກໍຕາມແຕ່ຈິດໃຈຄົນຊໍ້າພັດເສື່ອມຖອຍເກີດມີປະກົດການຫຍໍ້ທໍ້ທີ່ໜ້າເປັນຫ່ວງເຊັ່ນ:

- ດ້ານສັງຄົມ: ເກີດມີການບຽດບຽນເອົາລັດເອົາປຽບກັນ, ເກີດມີການໃຊ້ຄວາມຮຸນແຮງຫຼາຍຂຶ້ນໃນສັງຄົມ; ພ້ອມກັນນັ້ນ, ເກີດມີການແຜ່ລະບາດຂອງພະຍາດໄປທົ່ວໂລກເຊັ່ນ: ການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ຊຶ່ງເຮັດໃຫ້ປະຊາກອນຂອງໂລກເສຍຊີວິດເປັນຈຳນວນຫຼວງຫຼາຍ; ມີຜົນກະທົບດ້ານລົບຕໍ່ເສດຖະກິດ ແລະ ສັງຄົມຢ່າງຮ້າຍແຮງ; ຄວາມ

ຂັດແຍ່ງລະຫວ່າງກຸ່ມປະເທດ; ການກໍ່ອາຊະຍາກຳ, ບັນຫາຢາເສບຕິດ, ການຄ້າມະນຸດ,ສົງຄາມ ແລະ ການກໍ່ການຮ້າຍ;

- ດ້ານຈິດໃຈ: ບັນຫາຈິດໃຈຂອງຄົນຢູ່ໃນໂລກ ມີຄວາມວິຕົກກັງວົນເຖິງຈະມີວັດຖຸເງິນຄຳຢ່າງພຽງພໍກໍຕາມແຕ່ກໍບໍ່ສາມາດມີຄວາມສຸກກົງກັນຂ້າມເຂົາເຈົ້າຍັງຮູ້ສຶກໂດດດ່ຽວ, ແຕກແຍກ, ຫງ່ອມເຫງົາເຊິ່ງສະແດງອອກໃນຈຳນວນຄົນຂ້າຕົວຕາຍເພີ່ມຂຶ້ນ, ສະນັ້ນຈຶ່ງເຫັນໄດ້ວ່າຂະບວນການພັດທະນາ ແລະ ຄວາມສີວິໄລທາງດ້ານວັດຖຸຍັງຂາດອົງປະກອບທີ່ເປັນປັດໄຈສຳຄັນທາງດ້ານວັດທະ ນະທຳ;
- ດ້ານທຳມະຊາດ-ສິ່ງແວດລ້ອມ: ຊັບພະຍາກອນເສື່ອມໂຊມປ່າໄມ້ຖືກທຳລາຍ, ເກີດໄພແຫ້ງແລ້ງ, ນ້ຳຖ້ວມ, ພາຍຸ, ດິນເຈື່ອນ-ເສື່ອມຄຸນ, ອາກາດເປັນພິດ, ນ້ຳເປື້ອນ, ພືດ ແລະ ສັດສູນພັນ, ລະບົບນິເວດກຳລັງພັງທະລາຍ, ຊັ້ນອາກາດປ່ຽນໄປໃນທາງອັນຕະລາຍ, ເກີດມີມົນລະພິດຢ່າງຫຼວງຫຼາຍ ເວົ້າລວມແລ້ວຄວາມເສື່ອມໂຊມຂອງທຳມະຊາດສ່ວນໜຶ່ງກໍມາຈາກ ການກະທຳຂອງມະນຸດ.

ອົງການສະຫະປະຊາຊາດຈຶ່ງໄດ້ພິຈາລະນາ ແລະ ມີມະຕິປະກາດ "ທົດສະວັດໂລກເພື່ອການພັດທະນາວັດທະ ນະທຳ" ໂດຍເນັ້ນ 4 ເນື້ອໃນຕົ້ນຕໍຄື:

1. ການຍອມຮັບປັດໄຈໃນດ້ານວັດທະນະທຳໃນການພັດທະນາ;
2. ການສົ່ງເສີມເອກະລັກທາງດ້ານວັດທະນະທຳ;
3. ການຂະຫຍາຍຂອບເຂດການຮ່ວມມືທີ່ມີສ່ວນຮ່ວມໃນກິດຈະການດ້ານວັດທະນະທຳ;
4. ການສົ່ງເສີມການຮ່ວມມືດ້ານວັດທະນະທຳລະຫວ່າງປະເທດ.

ຂະແໜງການທ່ອງທ່ຽວເປັນອຸດສາຫະກຳໜຶ່ງທີ່ມີການຂະຫຍາຍຕົວຢ່າງວ່ອງໄວ, ຫຼາຍປະເທດໃນໂລກໄດ້ເອົາ ໃຈໃສ່ເປັນພິເສດຕໍ່ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ; ໄດ້ຖືເປັນຂະແໜງການເສດຖະກິດບູລິມາສິດເພື່ອພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ອັດຕາການເຕີບໂຕທາງເສດຖະກິດສ່ວນໜຶ່ງແມ່ນອີງໃສ່ການຂະຫຍາຍຕົວຂອງອຸດສາຫະກຳການທ່ອງທ່ຽວເປັນຕົ້ນຕໍທັງນີ້ກໍຍ້ອນວ່າ: ການທ່ອງທ່ຽວໄດ້ສ້າງລາຍຮັບເປັນເງິນຕາຕ່າງປະເທດ; ຊຸກຍູ້ຂະແໜງການ, ທຸລະກິດທີ່ກ່ຽວຂ້ອງໂດຍທາງກົງ ແລະ ທາງອ້ອມ, ຊຸກຍູ້ການລົງທຶນ, ການກໍ່ສ້າງໂຄງລ່າງພື້ນຖານ, ການຜະລິດ, ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມ ແລະ ເປັນຂະແໜງການທີ່ສົ່ງອອກກັບທີ່; ພາໃຫ້ມີການສະສົມ ແລະ ໝູນວຽນຂອງເງິນຕາພາຍໃນປະເທດ, ກະຈາຍລາຍໄດ້ໄປສູ່ທ້ອງຖິ່ນ, ເຂດຊົນນະບົດຫ່າງໄກສອກຫຼີກ, ປະກອບ ສ່ວນເຂົ້າໃນການອານຸລັກຮັກສາສະພາບແວດລ້ອມທາງທຳມະຊາດ, ຊຸກຍູ້ສົ່ງເສີມການພັດທະນາແບບຍືນຍົງ, ສີຂຽວໃນທົ່ວໂລກໃຫ້ເປັນຮູບປະທຳຫຼາຍຂຶ້ນ.

ໃນແຕ່ລະປີຈຳນວນນັກທ່ອງທ່ຽວ ແລະ ລາຍໄດ້ຈາກການທ່ອງທ່ຽວທົ່ວໂລກເພີ່ມຂຶ້ນ, ປີ 2016 ຈຳນວນນັກທ່ອງທ່ຽວມີ 1.235 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 1.220 ຕື້ໂດລາສະຫະລັດ, ປີ 2017 ຈຳນວນນັກທ່ອງທ່ຽວມີ 1.332 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 1.350 ຕື້ໂດລາສະຫະລັດ, ປີ 2018 ຈຳນວນນັກທ່ອງທ່ຽວມີ 1.407 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 1.462 ຕື້ໂດລາສະຫະລັດ, ປີ 2019 ຈຳນວນນັກທ່ອງທ່ຽວມີ 1.461 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 1.500 ຕື້ໂດລາສະຫະລັດ. ການທ່ອງທ່ຽວໄດ້ປະກອບສ່ວນໃຫ້ແກ່ການເຕີບໂຕທາງເສດຖະກິດຂອງໂລກ (GDP), ປີ 2016 ໄດ້ 2,4 ພັນຕື້ໂດລາສະຫະລັດເທົ່າກັບ 3,2%; 2017 ໄດ້ 2.5 ພັນຕື້ໂດລາສະຫະລັດເທົ່າກັບ 3,2%; ປີ 2018ໄດ້ 2.7 ພັນຕື້ໂດລາສະຫະລັດເທົ່າກັບ 3,2% ແລະ ປີ 2019 ປະກອບສ່ວນ 2.9 ພັນຕື້ໂດລາສະຫະລັດເທົ່າກັບ 3,3%. ລາຍຮັບຈາກການທ່ອງທ່ຽວປະກອບສ່ວນເຂົ້າໃນ GDP ຫຼາຍທີ່ສຸດມີ 5 ປະເທດດັ່ງນີ້: 1) ປະເທດສະຫະລັດອາເມລິກາສ້າງລາຍຮັບໄດ້ 580.7 ຕື້ໂດລາສະຫະລັດ, 2) ປະເທດຈີນ 403.5 ຕື້ໂດລາສະຫະລັດ; 3) ປະເທດເຢຍລະມັນ 143.4 ຕື້ໂດລາສະຫະລັດ; 4) ປະເທດຍີ່ປຸ່ນ 126.3 ຕື້ໂດລາສະຫະລັດ ແລະ 5) ປະເທດອີຕາລີ 119.7 ຕື້ໂດລາສະຫະລັດ. ໃນທ້າຍປີ 2019 ຫາ 2020 ອັດຕາການເພີ່ມຂຶ້ນຂອງນັກທ່ອງທ່ຽວສາກົນມີທ່າອ່ຽງຫຼຸດລົງຍ້ອນມີຫຼາຍປັດໄຈກະທົບຕໍ່ການຕັດສິນໃຈຂອງນັກທ່ອງທ່ຽວເຊັ່ນ: ສະພາບຄວາມບໍ່ສະຫງົບທາງດ້ານການເມືອງ, ສະພາບທົດຖອຍທາງດ້ານເສດຖະກິດ ແລະ ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ເປັນຕົ້ນ. ອີງຕາມຂໍ້ມູນຈາກ ອົງການທ່ອງທ່ຽວໂລກ (UNWTO), ໃນປີ 2020 ຈຳນວນນັກທ່ອງທ່ຽວໃນທົ່ວໂລກ ຫຼຸດລົງຢູ່ໃນລະດັບ - 74% ຫຼື ຫຼຸດລົງຈາກ 1.5 ຕື້ເທື່ອຄົນໃນປີ 2019 ມາເປັນ 381 ລ້ານເທື່ອຄົນ, ສູນເສຍລາຍຮັບຈາກການທ່ອງທ່ຽວປະມານ 1.3 ພັນຕື້ໂດລາສະຫະລັດ; ໃນນີ້ ເຂດອາຊີປະຊີຟິກຫຼຸດລົງ - 84% ຫຼື ຫຼຸດລົງຈາກ 630 ລ້ານເທື່ອຄົນ ມາເປັນ 57 ລ້ານເທື່ອຄົນ ແລະ ຄາດວ່າໃນທົ່ວໂລກຈະມີຜູ້ຫວ່າງງານສູງເຖິງ 114 ລ້ານຄົນ.

## II. ສະພາບພາຍໃນປະເທດ

ອີງຕາມວິໄສທັດວຽກງານຖະແຫຼງຂ່າວຮອດປີ 2030 "ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ ທັງລວງເລິກ ແລະ ລວງກວ້າງ, ສ້າງຄວາມເຂັ້ມແຂງ ແລະ ຫັນໄປສູ່ກຸ້ມຕົນເອງເທື່ອລະກ້າວ; ພົວພັນເຊື່ອມໂຍງກັບສື່ມວນຊົນສາກົນ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ.

ໃນ 5 ປີຜ່ານມາສື່ມວນຊົນລາວ ຖືກທ້າທາຍຫຼາຍດ້ານຈາກສະພາບແວດລ້ອມພາກພື້ນ ແລະ ສາກົນ ແລະ ສະຖານະການພາຍໃນປະເທດ ແລະ ຈາກສື່ສັງຄົມທີ່ມີອິດທິພົນທົ່ວໂລກ ແຕ່ຍັງໄດ້ເຄື່ອນໄຫວຢ່າງຕັ້ງໜ້າຮັບໃຊ້ເປັນກະບອກສຽງໃຫ້ສັງຄົມ, ສາມາດເຮັດໜ້າທີ່ໃນການໂຄສະນາເຜີຍ

ແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ; ຜົນງານອັນພົ້ນເດັ່ນແມ່ນໂຄສະນາການຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ X, ຄວາມພະຍາຍາມສູ້ຊົນຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແລະ ຄວາມ ທຸກຍາກ, ການພົວພັນຮ່ວມມື ກໍ່ຄືການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ການແກ້ໄຂຜົນກະທົບຈາກຄູກັນນໍ້າເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍແຕກ, ການຮັບມືກັບໄພທໍາມະຊາດ (ແຫ້ງແລ້ງ, ນໍ້າຖ້ວມ ແລະ ອາກາດປ່ຽນແປງ) ແລະ ພະຍາດລະບາດເປັນຕົ້ນ: ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19). ໃນຂະນະດຽວກັນກໍໄດ້ເປັນເຈົ້າການຕິດຕາມຕອບໂຕ້ການໂຄສະນາໃສ່ຮ້າຍປ້າຍສີຂອງອິດທິກໍາລັງປໍລະປັກ, ຂ່າວປອມ ແລະ ປະກົດການຫຍໍ້ທໍ້ໃນດ້ານຕ່າງໆໄດ້ທັນເວລາ.

ໃນໄລຍະ 5 ປີຜ່ານມາໄດ້ມີເຫດການອັນສໍາຄັນຫຼາຍຢ່າງເກີດຂຶ້ນກັບ ສປປ ລາວ ເປັນຕົ້ນແມ່ນປີສາມັກຄີລາວ-ຫວຽດນາມ, ເປັນເຈົ້າພາບຈັດກອງປະຊຸມອາຊຽນ, ການນໍາຂັ້ນສູງຂອງສອງປະເທດໄດ້ມີການຢ້ຽມຢາມພົບປະປຶກສາຫາລື ແລະ ຕົກລົງຫຼາຍບັນຫາທີ່ສໍາຄັນຮ່ວມກັນເຊິ່ງເປັນບາດກ້າວໃໝ່ແຫ່ງການເສີມຂະຫຍາຍມູນເຊື້ອຄວາມສາມັກຄີພິເສດ ແລະ ການພົວພັນຮ່ວມມືຮອບດ້ານຂອງສອງພັກ-ລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ. ການຢ້ຽມຢາມທາງລັດຖະກິດຂອງສະຫາຍ ສີຈິ້ນຜິງ ເລຂາທິການໃຫຍ່ຄະນະກໍາມະການສູນກາງພັກກອມມູນິດຈີນປະທານປະເທດແຫ່ງສາທາລະນະລັດປະຊາຊົນຈີນໃນປີ 2017 ເຊິ່ງເປັນຂີດໝາຍອັນສໍາຄັນທາງປະຫວັດສາດແຫ່ງການຮັດແໜ້ນສາຍພົວພັນ ແລະ ເສີມຂະຫຍາຍເພື່ອນມິດຍຸດທະສາດ ຄູ່ຮ່ວມຊະຕາກໍາຮ່ວມກັນລະຫວ່າງສອງພັກ-ສອງລັດ, ໄດ້ເປີດປີທ່ອງທ່ຽວລາວ 2018 ແລະ ປີທ່ອງທ່ຽວລາວ-ຈີນປີ 2019 ເພື່ອດຶງດູດເອົານັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ. ສຽງແຄນເຊື້ອຊາດລາວຖືກຮັບຮອງເປັນມໍຣະດົກໂລກທາງດ້ານວັດທະນະທໍານາມມະທໍາຢ່າງເປັນທາງການໃນວັນທີ 7 ທັນວາ 2017 ຈາກອົງການສະຫະປະຊາຊາດເພື່ອສຶກສາວິທະຍາສາດ ແລະ ວັດທະນະທໍາ ຫຼື UNESCO ທີ່ປະເທດ ສ. ເກົາຫຼີ; ໃນເຫດການອັນສໍາຄັນນີ້ ສປປລາວຈຶ່ງໄດ້ຈັດງານສະເຫຼີມ ສະຫຼອງຢ່າງຍິ່ງໃຫຍ່ໃນກາງເດືອນ ເມສາ 2018 ຜ່ານມາ ເພື່ອປະກາດໃຫ້ປວງຊົນລາວທັງຊາດຕະຫຼອດຮອດຄົນລາວ ແລະ ຊາວຕ່າງປະເທດໃນທົ່ວໂລກໄດ້ຮັບຮູ້ເຖິງວັດທະນະທໍາອັນດີງາມຂອງຊາດລາວເຮົາ ແລະ ທົ່ງໄຫຫີນ ຊຽງຂວາງ ໄດ້ຖືກຮັບຮອງເປັນມໍຣະດົກໂລກທີ່ເປັນວັດຖຸ ແຫ່ງທີສາມ ຂອງ ສປປ ລາວ ໃນເດືອນ ກໍລະກົດ ປີ 2019.

ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກໄດ້ກໍານົດຢ່າງຈະແຈ້ງວ່າ: "ພັດທະນາອຸດສາຫະກໍາໃນຂະແໜງການທີ່ເປັນທ່າແຮງໄດ້ປຽບຕາມທິດມີຈຸດສຸມ, ມີປະສິດທິຜົນ, ທັນສະໄໝ, ເປັນມິດກັບສິ່ງແວດລ້ອມເພື່ອເປັນເສົາຄໍ້າໃຫ້ແກ່ເສດຖະກິດແຫ່ງຊາດທີ່ມີຄວາມອາດສາມາດໃນການແຂ່ງຂັນ

ເປັນຕົ້ນແມ່ນ: ອຸດສາຫະກຳການທ່ອງທ່ຽວ, ອຸດສາຫະ ກາການບໍລິການ ແລະ ອື່ນໆ; ລັດຖະບານໄດ້ ສົ່ງເສີມວຽກງານທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃຫ້ມີຄວາມຍືນ ຍົງ. ຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມໃນການທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ, ສົ່ງເສີມຜະ ລິດຕະພັນທ່ອງ ທ່ຽວ, ແຫຼ່ງທ່ອງທ່ຽວໃຫ້ມີລັກສະນະເພີ່ມຂຶ້ນ, ສົ່ງເສີມຜະລິດຕະພັນຫັດຖະກຳທີ່ເປັນເອກະລັກທ້ອງ ຖິ່ນ; ປັບປຸງຮ້ານອາຫານ, ໂຮງແຮມ, ຣີສອດ ແລະ ເຮືອນພັກໃຫ້ມີຄຸນນະພາບ; ເພີ່ມລາຍການນຳ ທ່ຽວໃຫ້ມີຫຼາຍຮູບແບບ ແລະ ຫຼາຍວິທີທັງນີ້ກໍເພື່ອຊຸກຍູ້ໃຫ້ວຽກງານການທ່ອງທ່ຽວກາຍເປັນຫົວຈັກ ໃນການຂັບເຄື່ອນຂົງເຂດເສດຖະ ກິດອື່ນໆ ໃຫ້ມີການຂະຫຍາຍຕົວ.

ລັດຖະບານໄດ້ຖືເອົາວຽກງານການພັດທະນາການທ່ອງທ່ຽວຕິດພັນກັບການພັດທະນາຂະແໜງ ການອື່ນໆ ທີ່ປິ່ນອ້ອມເນື່ອງຈາກວ່າການທ່ອງທ່ຽວເປັນຂະແໜງການທີ່ມີບົດບາດສຳຄັນໃນການຊຸກຍູ້ ແລະ ຂັບເຄື່ອນຂະແໜງການ ອື່ນໆໃຫ້ມີການພັດທະນາໂດຍທາງກົງ ແລະ ທາງອ້ອມເຊັ່ນ: ລະບົບ ຄົມມະນາຄົມຂົນສົ່ງ, ວຽກງານຊັບພະຍາກອນທຳ ມະຊາດ ແລະ ສິ່ງແວດລ້ອມ, ວຽກງານກະສິກຳ-ປ່າໄມ້, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານຫັດຖະກຳ, ວຽກງານສາທາລະນະ ສຸກ, ວຽກງານການສຶກສາ, ສາທາລະນູປະໂພກ, ໂທລະຄົມມະນາຄົມ, ການເງິນ-ການທະນາຄານ ແລະ ອື່ນໆ.

ພ້ອມນີ້, ລັດຖະບານໄດ້ມີນະໂຍບາຍສົ່ງເສີມການບໍລິການ ແລະ ການຈຳໜ່າຍສິນຄ້າພາຍໃນ ຢູ່ ກັບທີ່ເຊິ່ງເປັນການສ້າງລາຍໄດ້ໃຫ້ແກ່ປະຊາຊົນທ້ອງຖິ່ນ; ປັບປຸງ, ພັດທະນາແຫຼ່ງທ່ອງທ່ຽວ ແລະ ຂະແໜງການທ່ອງທ່ຽວໃຫ້ກາຍ ເປັນອຸດສາຫະກຳທີ່ຍືນຍົງ; ເປີດກວ້າງການມີສ່ວນຮ່ວມຂອງ ປະຊາຊົນ; ສົ່ງເສີມການລົງທຶນຂອງພາກທຸລະກິດຈາກພາຍໃນ ແລະ ຕ່າງປະເທດໂດຍມີນະໂຍບາຍທີ່ ແທດເໝາະກັບການຂະຫຍາຍຕົວຂອງຂະແໜງການໃນແຕ່ລະໄລຍະເພື່ອສ້າງສະພາບແວດລ້ອມທີ່ ເອື້ອອຳນວຍໃນການລົງທຶນໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການບໍລິການການລົງທຶນຜ່ານປະຕູດຽວ.

ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງໃຫ້ເປັນລະບົບ, ສ້າງພະນັກງານສືບທອດປ່ຽນແທນ ແລະ ພັດທະນາບຸກຄະລາກອນທາງດ້ານວິຊາການຂອງແຕ່ລະຂະແໜງການ, ສືບຕໍ່ວຽກງານສຶກສາອົບຮົມ ການເມືອງ-ແນວຄິດເປັນສຳຄັນ; ຮັບປະກັນໃຫ້ສະມາຊິກພັກ-ພະນັກງານທົ່ວກະຊວງ ຮັກສາໄດ້ຄຸນ ທາດການເມືອງໜັກແໜ້ນ, ເຊື່ອໝັ້ນຕໍ່ອຸດົມການຂອງພັກໃນການນຳພາປະເທດຊາດ ຫຼຸດພົ້ນອອກ ຈາກຄວາມດ້ອຍພັດທະນາ ກ້າວໄປຕາມເສັ້ນທາງສັງຄົມນິຍົມທີ່ພັກໄດ້ກຳນົດໄວ້. ຈັດຕັ້ງການຮ່ວມ ຊີວິດການເມືອງພັກ, ເຜີຍແຜ່ເຊື່ອມຊຶມມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ນິຕິກຳຕ່າງໆຂອງສູນກາງ ພັກ ແລະ ຂອງອົງຄະນະພັກກະຊວງ ເຮັດໃຫ້ຄະນະພັກ, ສະມາຊິກພັກ-ພະນັກງານ ແຕ່ລະກົມກອງ

ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດສູງຂຶ້ນກວ່າເກົ່າ, ມີຄວາມສາມັກຄີເປັນປຶກແຜ່ນ ມີຄວາມເປັນເອກະພາບສູງພ້ອມກັນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ຄັ້ງທີ IV ຂອງອົງຄະນະພັກກະຊວງ ຖວທ ສໍາເລັດຜົນເປັນກ້າວໆມາ.

ເປັນເສນາທິການ ໃນການຊຸກຍູ້, ກວດກາ, ຕິດຕາມ ແລະ ປະເມີນຜົນ ການຜັນຂະຫຍາຍແຜນພັດທະນາວຽກງານ ຖວທ 2016-2020, ການປະຕິບັດສັນຍາຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ປະເທດຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ; ເປັນເຈົ້າການໃນການຄຸ້ມຄອງການໃຊ້ຈ່າຍງົບປະມານຂອງລັດໃຫ້ມີປະສິດທິຜົນ ແລະ ສາມາດກວດສອບໄດ້.

# ພາກທີ II
# ສະຫຼຸບການຈັດຕັ້ງປະຕິບັດວຽກງານ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ 2016-2020

## I. ວຽກງານຖະແຫຼງຂ່າວ-ສື່ມວນຊົນ

ສື່ມວນຊົນປະເພດຕ່າງໆໄດ້ເຕີບໃຫຍ່ ຂະຫຍາຍຕົວ, ພັດທະນາທັງດ້ານປະລິມານ ແລະ ຄຸນນະພາບ, ມີບົດ ບາດສູງຂຶ້ນ ແລະ ໄດ້ຮັບຄວາມເຊື່ອຖືຈາກສັງຄົມ, ເປັນກະບອກສຽງຂອງພັກ-ລັດໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຖືກຕ້ອງຕາມກົດໝາຍວ່າດ້ວຍສື່ມວນຊົນກໍຄືລັກສະນະ ແລະ ວິຊາການສື່ມວນຊົນ, ທັງສຶກສາອົບຮົມ, ປຸກລະດົມ ແລະ ຕໍ່ສູ້ ໂດຍການສົ່ງຂໍ້ມູນຂ່າວ ສານ, ສາລະຄວາມຮູ້ ແລະ ການບັນເທີງໄປເຖິງເປົ້າໝາຍທັງຢູ່ພາຍໃນ ແລະ ຕ່າງປະເທດ ຜ່ານຫຼາຍປະຕູ, ເວທີ, ເຄືອຂ່າຍ ແລະ ເສັ້ນທາງຕ່າງໆ ດ້ວຍຄວາມວ່ອງໄວ, ຊັດເຈນ, ທົ່ວເຖິງກວ່າເກົ່າ, ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານ 5 ປີ ຜ່ານມາມີດັ່ງນີ້:

### 1. ວຽກການໂຄສະນາ

ເນື້ອໃນ ແລະ ຮູບແບບໃນການເຜີຍແຜ່ໄດ້ຮັບການປັບປຸງ ແລະ ພັດທະນາໄປສູ່ຄຸນນະພາບ, ສາມາດເຊື່ອມໂຍງກັບສື່ມວນຊົນໃນພາກພື້ນ ແລະ ສາກົນ. ສື່ມວນຊົນລາວໄດ້ເຮັດບົດບາດໜ້າທີ່ສ້າງຄວາມຮັບຮູ້ຄວາມເຂົ້າໃຈໃຫ້ປະຊາຊົນຕໍ່ເຫດການ, ສະພາບການຕ່າງໆໃນຊີວິດປະຈຳວັນກ່ຽວກັບດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ເອົາໃຈໃສ່ໂຄສະນາການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII, ວຽກງານ 3 ສ້າງ, ວຽກງານຈຸດສຸມຂອງລັດຖະບານໂດຍສະເພາະຜົນກອງປະຊຸມລັດຖະບານສະໄໝສາມັນປະຈຳແຕ່ລະເດືອນ, ຄຳສັ່ງຕ່າງໆຂອງລັດຖະບານ, ໂຄສະນາວຽກງານຂອງສະພາແຫ່ງຊາດ, ສ່ອງແສງການເຄື່ອນໄຫວຂອງຄະນະນຳພັກ-ລັດຖະບານໃນທຸກດ້ານ ແລະ ວຽກງານຂອງຂະແໜງການຕ່າງໆເຊັ່ນ: ໄດ້ໂຄສະນາໃຫ້ແກ່ວັນສຳຄັນຕ່າງໆຂອງຊາດ ແລະ ສາກົນເປັນຕົ້ນວັນສ້າງຕັ້ງກອງທັບຄົບຮອບ 70 ປີ, ວັນຊາດທີ 2 ທັນວາ, ບຸນປະເພນີຕ່າງໆ, ປີທ່ອງທ່ຽວລາວ 2018, ປີທ່ອງທ່ຽວລາວ-ຈີນ 2019, ສປປ ລາວ ເປັນເຈົ້າພາບກອງປະຊຸມ ASEAN Summit 2016, ການສັບຊ້ອນພະນັກງານໃນແຕ່ລະຂັ້ນ, ການລົງເຄື່ອນໄຫວຢູ່ສູນກາງ ແລະ ທ້ອງຖິ່ນ, ການພົວພັນຮ່ວມມືກັບຕ່າງປະເທດ, ວຽກງານກວດກາ, ຕ້ານການສໍ້ລາດບັງຫຼວງ, ການເກັບລາຍຮັບພາສີ-ອາກອນ, ການສົ່ງເສີມຄອບຄົວຕົວແບບການຜະລິດເປັນສິນຄ້າ, ວຽກງານການສຶກສາ-ກິລາ, ໄດ້ແຈ້ງເຕືອນການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ, ພະຍາດໝູອາຟຣິກາ, ພະຍາດອັກເສບປອດຈາກເຊື້ອ

ຈຸລະໂລກສາຍພັນໃໝ່ (COVID-19), ການແຜ່ລະບາດຂອງສັດຕູພືດ, ການລາຍງານສະພາບດິນຟ້າອາກາດແລະ ຕອບໂຕ້ຕິຖອຍຖ້ອຍທໍານອງໂຄສະນາໂຈມຕີ ໃສ່ຮ້າຍປ້າຍສີຂອງຜູ້ທີ່ບໍ່ຫວັງດີ.

**2. ວຽກງານການຄຸ້ມຄອງ**

ໄລຍະ 5 ປີຜ່ານມາ, ການຄຸ້ມຄອງວຽກງານຖະແຫຼງຂ່າວ-ສື່ມວນຊົນ ໃນທົ່ວປະເທດເຮັດໄດ້ດີພໍສົມຄວນ. ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ພາຍໃຕ້ການຊີ້ນໍາຂອງຄະນະໂຄສະນາອົບຮົມສູນກາງພັກໄດ້ເອົາໃຈ ໃສ່ຊຸກຍູ້ສົ່ງເສີມ, ຕິດຕາມກວດກາວຽກງານຖະແຫຼງຂ່າວ-ສື່ມວນຊົນ ຢ່າງເປັນລະບົບ ແລະ ປະສານສົມທົບຢ່າງໃກ້ ຊິດກັບອໍານາດການປົກຄອງທ້ອງຖິ່ນ ເຮັດໃຫ້ການຈັດຕັ້ງຜັນຂະຫຍາຍນະໂຍບາຍແຜນການໂຄງການຕ່າງໆໃນໄລຍະຜ່ານມາໄດ້ຮັບຜົນສໍາເລັດດີພໍສົມຄວນ.

ການຄຸ້ມຄອງບຸກຄະລາກອນ: ປັດຈຸບັນ ສປປ ລາວ ມີບຸກຄະລາກອນສື່ມວນຊົນ 3.000 ກວ່າຄົນ ໃນນັ້ນເປັນນັກຂ່າວ 1.400 ຄົນ, ມີຜູ້ໄດ້ຮັບສິດຖືບັດນັກຂ່າວ 324 ຄົນ. ໃນແຕ່ລະປີ ສະຖາບັນສື່ມວນຊົນ, ວັດທະນະທໍາ ແລະ ທ່ອງທ່ຽວ, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນໃນການຍົກລະດັບຄວາມຮູ້ຄວາມສາມາດຕາມແຜນການທີ່ໄດ້ກໍານົດໄວ້ ແລະ ໄດ້ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ, ປະເທດສະມາຊິກອາຊຽນ ແລະ ອົງການຈັດຕັ້ງສາກົນອື່ນໆ ໄດ້ 1.370 ເທື່ອຄົນ; ໃນນັ້ນເປັນຍິງ 394 ເທື່ອຄົນ.

ການຕິດຕາມກວດກາ: ອົງການຄຸ້ມຄອງສື່ມວນຊົນແຕ່ລະຂັ້ນໄດ້ຕິດຕາມກວດກາ, ແນະນໍາການເຄື່ອນໄຫວຂອງບັນດາສື່ມວນຊົນທີ່ຂຶ້ນກັບຕົນໃນຂອບເຂດທົ່ວປະເທດ ເຮັດໜ້າທີ່ການເມືອງໃນການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຕາມການຊີ້ນໍາຂອງຂັ້ນເທິງ, ໄດ້ລາຍງານເປັນປະຈໍາວັນ, ອາທິດ, ເດືອນ ຕາມກົນໄກທີ່ມີຢ່າງສະໝໍ່າສະເໝີ ແລະ ມີປະສິດທິພາບ.

ວຽກນິຕິກໍາ: ເພື່ອໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ທັນກັບສະພາບການຂະ ຫຍາຍຕົວດ້ານເຕັກໂນໂລຊີຂໍ້ມູນຂ່າວສານແຫ່ງຍຸກສະໄໝ, ປີ 2016 ກະຊວງ ຖວທ ໄດ້ປັບປຸງກົດໝາຍວ່າດ້ວຍສື່ມວນຊົນສະບັບເດີມ, ໄດ້ສ້າງນິຕິກໍາໃຕ້ກົດໝາຍຈໍານວນໜຶ່ງເຊັ່ນ: ອອກຂໍ້ຕົກລົງເພື່ອຄວບຄຸມການນໍາເຂົ້າເຄື່ອງຮັບສັນຍານໂທລະພາບຜ່ານດາວທຽມ; ອອກແຈ້ງການຕ່າງໆເຊັ່ນ: ການລົງທະບຽນການເຄື່ອນໄຫວ ແລະ ຕໍ່ອາຍຸຂອງສື່ມວນຊົນທຸກປະເພດ, ການຈັດຊ່ອງລາຍການໂທລະພາບໃຫ້ເປັນລະບຽບໃນທົ່ວປະເທດ, ຫ້າມການໂຄສະນາທຸກປະ ເພດທີ່ເກີນຄວາມເປັນຈິງຜ່ານສື່ມວນຊົນທຸກປະເພດ.

## 3. ວຽກພັດທະນາເຕັກນິກ ໂຄງລ່າງພື້ນຖານ

ວຽກຖະແຫຼງຂ່າວ-ສື່ມວນຊົນລາວໄດ້ມີ ໂຄງລ່າງພື້ນຖານວັດຖຸເຕັກນິກການໃຫ້ບໍລິການທຸກຮູບແບບສື່ມວນຊົນທຸກປະເພດ ແລະ ຮອງຮັບການພັດທະນາເຂົ້າສູ່ຄວາມທັນສະໄໝທັນໄປສູ່ລະບົບດີຈີຕອນເທື່ອລະກ້າວ, ຍົກຄຸນນະພາບສຽງ ແລະ ພາບໄດ້ຊັດເຈນກວ່າເກົ່າ, ສາມາດໄປເຖິງຜູ້ຊົມໃຊ້ທັງພາຍໃນ ແລະ ຕ່າງປະເທດໄດ້ຕາມເປົ້າໝາຍທີ່ວາງໄວ້. ມາຮອດປັດຈຸບັນ, ສື່ມວນຊົນລາວທຸກປະເພດໄດ້ພັດທະນາທາງດ້ານປະລິມານ ແລະ ຄຸນນະພາບ ກ້າວໄປເຖິງການແຂ່ງຂັນເຊື່ອມສານ ດ້ວຍເຕັກໂນໂລຊີທີ່ທັນສະໄໝ ແລະ ທັນໄປສູ່ຄວາມເປັນມືອາຊີບທາງດ້ານວິຊາສະເພາະເຮັດໃຫ້ສັງຄົມມີຫຼາຍທາງເລືອກໃນການຊົມໃຊ້ຜະລິດຕະພັນສື່ມວນຊົນ ເຊິ່ງສາມາດສັງລວມຜົນງານຂອງແຕ່ລະປະເພດ ສີ່ໄດ້ດັ່ງນີ້:

### 3.1 ສື່ສິ່ງພິມ

ໃນທົ່ວປະເທດມີສື່ສິ່ງພິມທີ່ໄດ້ລົງທະບຽນຈຳນວນ 152 ສະບັບ,ໃນນີ້ເປັນຂອງລັດມີ 102, ເອກະຊົນມີ 50 ສະບັບໃນນີ້ມີ: ປະເພດໜັງສືພິມລາຍວັນ 11 ສະບັບທີ່ເປັນພາສາລາວ, ພາສາອັງກິດ ແລະ ພາສາຝຣັ່ງ, ນອກນັ້ນຍັງມີໜັງສືພິມປະເພດອອກເປັນລາຍອາທິດ 8 ສະບັບ, ລາຍປັກ 10 ສະບັບ, ລາຍເດືອນ 4 ສະບັບ; ວາລະສານ 115 ສະບັບ, ໃບຂ່າວມີ 4 ສະບັບ. ປັດຈຸບັນສື່ສິ່ງພິມທັງໝົດທີ່ກ່າວມານັ້ນຍັງມີການເຄື່ອນໄຫວພຽງແຕ່ 106 ສະບັບ.

### 3.2 ສື່ເອເລັກໂຕຣນິກ

ວິທະຍຸກະຈາຍສຽງ: ໃນທົ່ວປະເທດມີສະຖານີວິທະຍຸກະຈາຍສຽງ 82 ສະຖານີ, ນີ້ຕັ້ງຢູ່ສູນກາງ **3** ສະຖານີ, ທ້ອງຖິ່ນ 79 ສະຖານີ. ໃນໄລຍະ 5 ປີ ຜ່ານມາມີສະຖານີວິທະຍຸກະຈາຍສຽງເພີ່ມຂຶ້ນ 13 ສະຖານີທຽບໃສ່ 5 ປີ ຜ່ານມາ ແລະ ສະຖານີເຄືອຂ່າຍສິ່ງຕໍ່ 82 ສະຖານີ (ກອງທັບມີ 73 ສະຖານີ, ປ້ອງກັນຄວາມສະຫງົບມີ 5 ສະຖານີ ແລະ ວິທະຍຸກະຈາຍສຽງແຫ່ງຊາດມີ 4 ສະຖານີ). ມາຮອດປັດຈຸບັນຍັງເຄື່ອນໄຫວອອກອາກາດ 63 ສະຖານີ, ສ່ວນທີ່ເຫຼືອບໍ່ໄດ້ອອກອາກາດຍ້ອນອຸປະກອນເກົ່າແກ່, ເປ່ເພ ແລະ ຂາດງົບປະມານໃນການສ້ອມແປງ. ການກະຈາຍສຽງທາງພາກພື້ນດິນທັງໃນລະບົບເອເອັມ (AM) ແລະ ເອັບເອັມ (FM) ກວມ 95% ຂອງທີ່ຢູ່ອາໄສຂອງປະຊາກອນ, ການກະຈາຍຜ່ານດາວທຽມກວມ 100% ຂອງພື້ນທີ່ທົ່ວປະເທດ ແລະ ການກະຈາຍຂ່າວຜ່ານເຄືອຂ່າຍອິນເຕີເນັດໃນຕົວເມືອງໃຫຍ່ ແລະ ອອກສູ່ຕ່າງປະເທດໃນທົ່ວໂລກ. ວິທະຍຸກະຈາຍສຽງແຫ່ງຊາດໄດ້ກະຈາຍເປັນພາສາຕ່າງປະເທດລວມມີພາສາຫວຽດນາມ, ອັງກິດ, ຝຣັ່ງ, ກຳປູເຈຍ, ໄທ ແລະ ກະຈາຍເປັນພາສາຊົນເຜົ່າລວມມີພາສາມົ້ງ ແລະ ກຶມມຸ. ນອກນັ້ນ, ສະຖານີ FM ຖ່າຍທອດຕໍ່ວິທະຍຸສາກົນແຫ່ງປະເທດຈີນ (CRI), ຝຣັ່ງ ແລະ ອິດສະຕຣາລີ.

ໂທລະພາບ: ທົ່ວປະເທດມີ 44 ສະຖານີ, ສູນກາງ 7 ແຫ່ງ ແລະ ທ້ອງຖິ່ນ 37 ແຫ່ງ, ໃນນີ້ມີສະຖານີເອກະຊົນ 3 ແຫ່ງ. ມາຮອດປັດຈຸບັນສະຖານີໂທລະພາບທີ່ກະຈາຍເປັນລະບົບອານາລອກແບບເດີມມີ 34 ສະຖານີ ແລະ ກະ ຈາຍເປັນລະບົບດິຈິຕອນ 10 ສະຖານີ. ສະຖານີໂທລະພາບອານາລອກບາງແຫ່ງໄດ້ຄ່ອຍຫັນໄປກະຈາຍນຳຜູ້ປະກອບກິດຈະການໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ (ໂທລະພາບດິຈິຕອນພາກພື້ນດິນ, ໂທລະພາບຜ່ານດາວທຽມ, ເຄືອຂ່າຍອິນເຕີເນັດ) ຕາມເງື່ອນໄຂຄວາມອາດສາມາດຂອງແຕ່ລະແຂວງ.

ປີ 2019 ຜ່ານມາ ລັດຖະບານ ສ ປ ຈີນ ໄດ້ໃຫ້ການຊ່ວຍເຫຼືອໃນການປັບປຸງສະຖານີໂທລະພາບ ທຊລ 3 ຄືການປ່ຽນຖ່າຍຈາກລະບົບ SD ເປັນລະບົບ HD ສຳເລັດ, ສຳລັບສະຖານີໂທລະພາບແຫ່ງຊາດ ທຊລ 1 ເຮັດບົດບາດໜ້າທີ່ດ້ານຂ່າວ, ການເມືອງ; ນອກຈາກອອກອາກາດເປັນພາສາລາວແລ້ວຍັງອອກອາກາດຂ່າວເປັນພາສາອັງກິດ, ຝຣັ່ງ, ຫວຽດນາມ, ມົ້ງ ແລະ ກຶມມຸ, ສັນຍານໂທລະພາບລາວສາມາດເຂົ້າເຖິງ 85% ຂອງປະຊາກອນທົ່ວປະເທດ ແລະໄປຮອດເປົ້າໝາຍຫຼາຍປະເທດໃນໂລກໂດຍຜ່ານເຄືອຂ່າຍອິນເຕີເນັດ (IPTV). ນອກຈາກໂທລະພາບແຫ່ງຊາດລາວ ກໍຍັງມີສະຖານີໂທລະພາບອື່ນໆທີ່ເຮັດບົດບາດໜ້າທີ່ຕາມຂະແໜງການ ແລະ ຕາມການອະນຸຍາດເຊັ່ນ: ສະຖານີໂທລະພາບ ປກສ, ກອງທັບ, ນະຄອນຫຼວງ, ລາວສະຕາຣ໌, ເອັມວີລາວ, ທີວີລາວ ແລະ ຍັງມີສະຖານີຖ່າຍທອດໂທລະພາບຂອງຕ່າງປະເທດ ເຊັ່ນ: VTV4 ຂອງ ສສ ຫວຽດນາມ, ໂທລະພາບ CCTV4 ແລະ CCTV-News ຂອງ ສປ ຈີນ.

ໂຄງການກໍ່ສ້າງສະຖານນີຖ່າຍທອດຕໍ່ວິທະຍຸ-ໂທລະພາບເຂດ ແລະ ວິທະຍຸກະຈາຍສຽງທ້ອງຖິ່ນ, ໂດຍການຊ່ວຍເຫຼືອລ້າຈາກລັດຖະບານຫວຽດນາມພວກເຮົາໄດ້ສາເລັດໂຄງການສ້າງສະຖານີຖ່າຍທອດຕໍ່ວິທະຍຸ-ໂທລະພາບ ເຂດ 4 ເຂດ ຢູ່ແຂວງຈາປາສັກ, ຫຼວງພະບາງ, ອຸດົມໄຊ ແລະ ແຂວງສະຫວັນນະເຂດ. ໄດ້ນຳໃຊ້ຖ່າຍທອດຕໍ່ລາຍການວິທະຍຸກະຈາຍສຽງແຫ່ງຊາດ ແລະ ໂທລະພາບແຫ່ງຊາດ, ແລະ ກຳລັງກໍ່ສ້າງຢູ່ 2 ແຂວງ ຄື: ແຂວງບໍ່ແກ້ວ ແລະ ແຂວງ ໄຊສົມບູນ.

ການຕິດຕັ້ງລະບົບໂທລະໂຄ່ງໃນຂອບເຂດທົ່ວປະເທດ ມາຮອດປັດຈຸບັນ ຫຼື ປີ 2020 ປະຕິບັດໄດ້ 5.840 ຊຸດ ຫຼື ບ້ານ ຈາກທັງໝົດ 8.443 ບ້ານ, ໃນນີ້ລະບົບໂທລະໂຄ່ງທີ່ໄດ້ຮັບການຕອບສະໜອງໂດຍກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມມາດຕະຖານເຕັກນິກຈຳນວນ 326 ຊຸດ.

3.3 ສື່ແບບໃໝ່ (ສື່ສັງຄົມອອນລາຍ)

ປັດຈຸບັນ ທຸກອົງການສື່ມວນຊົນແມ່ນນໍາໃຊ້ທ່າແຮງຂອງສື່ແບບໃໝ່ໃນທຸກຮູບແບບເຊັ່ນ: ເວັບໄຊ, ໜ້າເວັບ, ເຟຊບຸກ ແລະ ຢູທູບ ໃນການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຄຽງຄູ່ກັນໄປກັບການນໍາໃຊ້ສື່ແບບເດີມ. ນອກຈາກອົງການສື່ມວນຊົນຫຼັກແລ້ວ, ອົງການຈັດຕັ້ງຂອງພາກລັດ ແລະ ເອກະຊົນຍັງໄດ້ນໍາໃຊ້ສື່ແບບໃໝ່ເຄື່ອນໄຫວເຜີຍແຜ່ໂຄສະນາຂໍ້ມູນຂ່າວສານຂອງຕົນນັບມື້ນັບຫຼາຍຂຶ້ນ ແລະມີປະສິດທິພາບຂຶ້ນກວ່າເກົ່າເຮັດໃຫ້ການໂຄສະນາເຜີຍແຜ່ຂ່າວມີຄວາມວ່ອງໄວທັນເຫດການ.

ໃນ 5 ປີຜ່ານມາຜູ້ປະກອບກິດຈະການໃນສື່ແບບໃໝ່ມີທ່າອ່ຽງເພີ່ມຂຶ້ນ ເຊິ່ງໄດ້ມີການເຄື່ອນໄຫວສອດຄ່ອງກັບລະບຽບກົດໝາຍ. ອົງການຄຸ້ມຄອງສື່ມວນຊົນໄດ້ຈັດສໍາມະນາແລກປ່ຽນປຶກສາຫາລື, ໃຫ້ຄໍາແນະນໍາຕໍ່ຜູ້ນໍາໃຊ້ສື່ແບບໃໝ່ໃຫ້ເຂົ້າໃຈ ແລະໄດ້ຊຸກຍູ້ສົ່ງເສີມວຽກງານດັ່ງກ່າວໃຫ້ມີຄຸນນະພາບ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ເຄົາລົບກົດໝາຍ ແລະຈັນຍາບັນນັກຂ່າວເພື່ອຜົນປະໂຫຍດສູງສຸດຂອງປະເທດຊາດ ແລະ ບໍ່ສ້າງຄວາມແຕກແຍກໃຫ້ສັງຄົມ.

ແຕ່ເຖິງຢ່າງໃດກໍຕາມ, ການນໍາໃຊ້ສື່ສັງຄົມອອນລາຍຢູ່ພາຍໃນປະເທດພວກເຮົາກໍມີສິ່ງທ້າທາຍ, ບັນຫາຫຍໍ້ທໍ້ຫຼາຍອັນທີ່ເກີດຂຶ້ນບໍ່ໜ້ອຍເປັນຕົ້ນບັນຫາຂ່າວປອມ, ຂ່າວປັ່ນປ່ວນສັງຄົມ,ການໃສ່ຮ້າຍປ້າຍສີບຸກຄົນ ແລະການຈັດຕັ້ງຂ່າວບິດເບືອນຄວາມຈິງ. ຕໍ່ກັບບັນຫາທີ່ເກີດຂຶ້ນນີ້, ພາກສ່ວນຮັບຜິດຊອບກໍຄືໜ່ວຍງານຄຸ້ມຄອງສື່ສັງຄົມອອນລາຍຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດໄດ້ເອົາໃຈໃສ່ແກ້ໄຂບັນຫາຢ່າງຕັ້ງໜ້າ ເຊິ່ງສະແດງອອກໃນແຕ່ລະເຫດການພາກສ່ວນຄຸ້ມຄອງ ແລະ ພາກສ່ວນກ່ຽວຂ້ອງໄດ້ປະສານສົມທົບກັນແກ້ບັນຫາ ແລະ ຕອບໂຕ້ຢ່າງທັນການເປັນຕົ້ນໃນໄລຍະໄພພິບັດນໍ້າຖ້ວມ, ອຸປະຕິເຫດຄູກັນນໍ້າເຂື່ອນເຊປຽນ-ເຊນໍ້ານ້ອຍແຕກ, ບັນຫາພະຍາດລະບາດເປັນ ຕົ້ນພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ແລະ ຂ່າວອື່ນໆ. ນອກນັ້ນ, ຍັງໄດ້ອອກນິຕິກໍາເປັນຕົ້ນແຈ້ງການຂຶ້ນທະບຽນໜ້າຂ່າວສື່ອອນລາຍທີ່ບໍລິການຂ່າວໃຫ້ແກ່ສັງຄົມພາຍໃນ ສປປ ລາວ ແມ່ນຕ້ອງໄດ້ລົງທະບຽນ ເຊິ່ງມາຮອດປັດຈຸບັນນີ້ໄດ້ມີຜູ້ມາລົງທະບຽນທີ່ມາຈາກທັງພາກລັດ ແລະ ເອກະຊົນແລ້ວມີຈໍານວນ 14 ເພຈ.

## 4. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ

4.1. ການລົງທຶນຈາກງົບປະມານຂອງລັດ

ໃນໄລຍະ 5 ປີ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດວຽກງານຖະແຫຼງຂ່າວ-ສື່ມວນຊົນມີຈໍານວນ 10 ໂຄງການມູນຄ່າທັງໝົດປະມານ 26.720,00 ລ້ານກີບ ເຊິ່ງບັນດາໂຄງການຈໍານວນໜຶ່ງແມ່ນໄດ້ຈັດຕັ້ງປະຕິບັດສໍາເລັດແຕ່ການຊໍາລະງົບປະມານຍັງບໍ່ທັນສໍາເລັດຕາມສັນຍາ ແລະ ໂຄງການຈໍານວນໜຶ່ງຈະສໍາເລັດໃນແຜນການ 5 ປີຄັ້ງຕໍ່ໄປ.

4.2. ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA) ມີຈຳນວນ 5 ໂຄງການຄື:

1) ໂຄງການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນຜ່ານວິທະຍຸຊຸມຊົນ(ຊຸມຊົນ) ມູນຄ່າ 3.000.000 ໂດລາສະຫະລັດມີໄລຍະເວລາການຈັດຕັ້ງປະຕິບັດ 5 ປີ 2017-2021 ເຊິ່ງໄດ້ຮັບການຊ່ວຍເຫຼືອລ້າຈາກອົງການສະຫະປະຊາຊາດເພື່ອການພັດທະນາ (UNDP);
2) ໂຄງການປັບປຸງຍົກລະດັບເຕັກນິກໂທລະພາບແຫ່ງຊາດລາວຊ່ອງ 3 ມູນຄ່າ 54 ລ້ານຢວນມີໄລຍະເວລາຈັດຕັ້ງປະຕິບັດ 2 ປີ 2018-2019 ເຊິ່ງເປັນໂຄງການຊ່ວຍເຫຼືອລ້າ ຈາກ ສປ ຈີນ;
3) ໂຄງການກໍ່ສ້າງສະຖານີວິທະຍຸກະຈາຍສຽງແລະໂທລະພາບແຂວງໄຊສົມບູນມູນຄ່າ 118.950.817.000 ດົງໃນນີ້ມີທຶນສົມທົບຈາກລັດຖະບານລາວຈຳນວນ 3.865.817.012 ດົງມີໄລຍະເວລາຂອງການຈັດຕັ້ງປະຕິບັດ 4 ປີ 2018-2021 ເປັນໂຄງການຊ່ວຍເຫຼືອລ້າຈາກ ສສ ຫວຽດນາມ;
4) ໂຄງການກໍ່ສ້າງສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບແຂວງບໍ່ແກ້ວມູນຄ່າ 116.669.057.637 ດົງ ໃນນີ້ ມີທຶນສົມທົບຈາກລັດຖະບານລາວ ຈຳນວນ 3.748.124.451 ດົງ ມີໄລຍະເວລາຂອງການຈັດຕັ້ງປະຕິບັດ 5 ປີ 2016-2020 ເປັນໂຄງການຊ່ວຍເຫຼືອລ້າຈາກ ສສ ຫວຽດນາມ;
5) ໂຄງການກໍ່ສ້າງສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບແຂວງສະຫວັນນະເຂດມູນຄ່າ 115.795.147.896 ດົງ; ໄລຍະເວລາຂອງການຈັດຕັ້ງປະຕິບັດ 5 ປີ 2013-2017 ເປັນໂຄງການຊ່ວຍເຫຼືອລ້າຈາກລັດຖະບານສສຫວຽດນາມ.

4.3. ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ.

ອີງໃສ່ນະໂຍບາຍຂອງລັດຖະບານຕໍ່ວຽກງານສື່ມວນຊົນ, ລັດຊຸກຍູ້ ແລະ ເປີດກວ້າງໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດມີສ່ວນຮ່ວມໃນການພັດທະນາ ແລະ ລົງທຶນໃນວຽກງານສື່ມວນຊົນຕາມກົດໝາຍ ແລະ ລະບຽບການ. ມາຮອດປັດຈຸບັນນິຕິບຸກຄົນພາຍໃນປະເທດ ແລະ ຕ່າງປະເທດຈຳນວນໜຶ່ງ ທີ່ມີຄວາມສາມາດດ້ານບຸກຄະລາກອນ ແລະ ທຶນໄດ້ສົມທົບກັບລັດສ້າງສະຖານີໂທລະພາບ, ສະຖານີວິທະຍຸກະຈາຍສຽງ, ສະຖານີໂທລະພາບໃຊ້ສາຍ ແລະໂທລະພາບບໍ່ໃຊ້ສາຍໄດ້ຫຼາຍແຫ່ງ ເຊິ່ງຊ່ວຍແບ່ງເບົາລາຍຈ່າຍງົບປະມານຂອງລັດໄດ້ຫຼາຍສົມຄວນ.

ຈາກຜົນສຳເລັດໃນແຕ່ລະດ້ານທີ່ກ່າວມາຂ້າງເທິງນັ້ນ ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຄືດັ່ງນີ້:

## 5. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

1) ບາງອົງການສື່ມວນຊົນຍັງບໍ່ສາມາດນໍາເອົາເນື້ອໃນການຊີ້ນໍາຂອງຂັ້ນເທິງໄປຈັດຕັ້ງຜັນຂະຫຍາຍຢ່າງມີຫົວຄິດປະດິດສ້າງ ແລະ ທັນກັບສະພາບການ, ຂາດແຜນການຕິດຕາມເຫດການ ແລະ ບັນຫາເພື່ອໃຫ້ສະຫຼຸບໄດ້, ຍັງຂາດສະຕິໃນການບັນນາທິການ ແລະ ກວດສອບ ທາງດ້ານເນື້ອໃນ ແລະ ຮູບພາບເຊິ່ງເຮັດໃຫ້ຜິດພາດ, ຂາດຄວາມເຊື່ອໝັ້ນ ແລະ ຖືກຜູ້ບໍ່ຫວັງດີນາໄປສວຍໃຊ້ໂຈມຕີ, ປັ້ນປ່ອນ;
2) ການລາຍງານສະພາບການ, ການນໍາພາທາງສຽງສັງຄົມ ແລະ ການຕອບໂຕ້ຂ່າວລື, ຂ່າວປອມ ຍັງບໍ່ທັນເຮັດໄດ້ດີ ແລະ ທັນກັບສະພາບການ;
3) ບາງລາຍການໂທລະພາບ ຮູບແບບການນໍາສະເໜີ ຍັງບໍ່ສ້າງຄວາມດຶງດູດໃຫ້ຜູ້ຊົມໄດ້ດີເທົ່າທີ່ຄວນ; ການສ້າງບຸກຄະລາກອນທີ່ຈະມາສືບທອດປ່ຽນແທນໃນວຽກງານຖະແຫຼງຂ່າວ-ສື່ມວນຊົນຍັງເຮັດໄດ້ໜ້ອຍບໍ່ທັນກັບສະພາບການປ່ຽນແປງ;
4) ການຍົກລະດັບຄວາມຮູ້,ຄວາມສາມາດໃຫ້ແກ່ນັກວິຊາການດ້ານສື່ມວນຊົນຍັງບໍ່ທົ່ວເຖິງນັບທັງສູນກາງ ແລະ ທ້ອງຖິ່ນ;
5) ຍັງຂາດການກໍານົດແຜນການລົງຊຸກຍູ້, ຕິດຕາມກວດກາ, ປະເມີນຜົນ, ປັບປຸງ, ແກ້ໄຂດ້ວຍມາດຕະການຕ່າງໆເພື່ອຍົກຄຸນນະພາບວຽກງານຖະແຫຼງຂ່າວ-ສື່ມວນຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
6) ການປະສານງານໃນຂະແໜງການຖະແຫຼງຂ່າວສື່ມວນຊົນລະຫວ່າງສູນກາງ ແລະ ທ້ອງຖິ່ນຍັງບໍ່ທັນຄ່ອງຕົວ ແລະ ບໍ່ທັນເປັນລະບົບຕໍ່ເນື່ອງ;
7) ການສ້າງນິຕິກໍາໃຕ້ກົດໝາຍ ແລະ ຄູ່ມືເພື່ອຮັບໃຊ້ວຽກງານສື່ມວນຊົນຍັງມີຄວາມຊັກຊ້າ, ບໍ່ທັນກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ;
8) ການພັດທະນາໂຄງລ່າງພື້ນຖານ, ອຸປະກອນເຕັກນິກ ແລະ ພາຫະນະສື່ມວນຊົນ ຍັງບໍ່ທັນພຽງພໍ ແລະ ບໍ່ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ;
9) ການສ້າງ ແລະ ບໍາລຸງຄວາມຮູ້ຄວາມສາມາດໃຫ້ແກ່ນັກວິຊາການດ້ານເຕັກນິກສື່ມວນຊົນຍັງບໍ່ທັນພຽງພໍດ້ານປະລິມານ ແລະ ຄຸນນະພາບ;
10) ການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດໃນຂະແໜງສື່ມວນຊົນ ຍັງມີຈໍານວນໜ້ອຍ ແລະ ການຂຶ້ນແຜນໂຄງການລົງທຶນຂອງລັດບໍ່ທັນມີການຄົ້ນຄວ້າຢ່າງລະອຽດຖີ່ຖ້ວນເຮັດໃຫ້ບາງໂຄງການບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນທີ່ວາງໄວ້, ພ້ອມກັນນັ້ນບາງໂຄງການທີ່ໄດ້ຈັດຕັ້ງໄປແລ້ວນັ້ນຍັງບໍ່ທັນມີຄຸນນະພາບ ແລະ ບໍ່ມີປະສິດທິຜົນດີເທົ່າທີ່ຄວນ.

## II. ວຽກງານວັດທະນະທຳ

ໄດ້ເອົາໃຈໃສ່ຊີ້ນຳການເຄື່ອນໄຫວວຽກງານວັດທະນະທຳທີ່ມີລັກສະນະຊາດກ້າວໜ້າ ແລະ ມະຫາຊົນ, ນຳພາຈັດຕັ້ງຜັນຂະຫຍາຍນະໂຍບາຍສົ່ງເສີມການປົກປັກຮັກສາ, ພັດທະນາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມທີ່ເປັນເອກະລັກເປັນມໍຣະດົກອັນລ້ຳຄ່າຂອງຊາດ, ປ້ອງກັນ ແລະ ສະກັດກັ້ນກະແສວັດທະນະທຳທີ່ບໍ່ດີ, ເອົາໃຈໃສ່ສຶກສາອົບຮົມ,ໂຄສະນາເຜີຍແຜ່ວັດທະນະທຳລາວຢ່າງກວ້າງຂວາງທັງຢູ່ພາຍໃນ ແລະ ຕ່າງປະເທດດ້ວຍຫຼາຍຮູບຫຼາຍສີທີ່ມີຊີວິດຊີວາສາມາດຕອບສະໜອງຄວາມຕ້ອງການຂອງໜ້າທີ່ການເມືອງ, ສ້າງຄວາມເບີກບານມ່ວນຊື່ນ, ຄວາມສາມັກຄີປອງດອງ, ປຸກລະດົມໃຫ້ປະຊາຊົນໃນສັງຄົມມີຄວາມເຂັ້ມແຂງທາງດ້ານຈິດໃຈ ແລະ ສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນວັດທະນະທຳປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ບັນດາຜົນງານຕ່າງໆຂອງວຽກງານວັດທະນະທຳ ສາມາດສະຫຼຸບສັງລວມໄດ້ດັ່ງນີ້:

### 1. ວຽກສິລະປະການສະແດງ

ໄດ້ເອົາໃຈໃສ່ຊີ້ນຳ ແລະ ຊຸກຍູ້ສົ່ງເສີມຂະບວນການສິລະປະ-ວັນນະຄະດີ ທັງອາຊີບແລະ ສະໝັກຫຼິ້ນນັບແຕ່ຂັ້ນສູນກາງລົງເຖິງຂັ້ນຮາກຖານ, ພ້ອມດຽວກັນນີ້ ກໍ່ໄດ້ຈັດຕັ້ງນຳພາບັນດາກອງສະແດງເຄື່ອນໄຫວສະແດງຮັບໃຊ້ງານສຳຄັນຕ່າງໆຂອງຊາດພາຍໃນປະເທດ 1.816 ຄັ້ງ, ມີຜູ້ເຂົ້າຊົມ 1.866.954 ເທື່ອຄົນ, ສະແດງແລກປ່ຽນສິລະປະວັດທະນະທຳຢູ່ຕ່າງປະເທດ 301 ຄັ້ງ, ມີຜູ້ເຂົ້າຊົມ 484.643 ເທື່ອຄົນ, ປະດິດແຕ່ງບົດຟ້ອນໃໝ່ 60 ບົດຟ້ອນ, ບົດເພງ 24 ບົດເພງ, ບົດຂັບ-ລຳ 15 ບົດ, ປະດິດແຕ່ງລາຍການສະແດງກາຍະສິນ 20 ລາຍການ, ບົດລະຄອນເວທີ 41 ເລື່ອງ ແລະ ຮູບເງົາກອງລະຄອນເວົ້າໄດ້ 5 ເລື່ອງ, ບົດລະຄອນຕຸກກະຕາ 32 ເລື່ອງ, ຜະລິດຕຸກກະຕາ ແລະ ຫຸ່ນໄດ້ 185 ໂຕ,ຫໍວັດທະນະທຳແຫ່ງຊາດ ໄດ້ຮັບໃຊ້ໜ້າທີ່ການເມືອງຂອງພັກ-ລັດ 236 ຄັ້ງ ແລະ ໃຫ້ບໍລິການສະຖານທີ່ໃນງານຕ່າງໆ ຂອງສັງຄົມ 145 ຄັ້ງ, ໄດ້ຈັດງານແຂ່ງຂັນເສັງເພງນັກຮ້ອງສຽງດີ 3 ຄັ້ງ; ສຳເລັດຈັດຝຶກອົບຮົມການຟ້ອນລຳວົງລາວ 2 ຄັ້ງ, ມີວິທະຍາກອນເຂົ້າຮ່ວມ ແລະ ນັກສຳມະນາກອນທັງໝົດ 224 ທ່ານ; ຈັດຝຶກອົບຮົມການປະດິດແຕ່ງບົດຟ້ອນ ແລະ ກຳກັບການສະແດງຂອງສິລະປະລາວ ທົ່ວປະເທດ 1 ຄັ້ງ ໂດຍມີວິທະຍາກອນທີ່ມີປະສົບມາຈາກ ສສ ຫວຽດນາມ 3 ທ່ານ ແລະ ນັກສຳມະນາກອນເຂົ້າຮ່ວມທັງໝົດ 45 ທ່ານ; ໃນນັ້ນສາມາດປະດິດແຕ່ງບົດຟ້ອນໃໝ່ໄດ້ 37 ບົດຟ້ອນ; ພ້ອມນີ້ ກໍ່ໄດ້ຈັດກອງປະຊຸມສຳມະນາວິທະຍາສາດສຽງແຄນເຊື້ອຊາດລາວ, ເຊິ່ງປະກອບມີວິທະຍາກອນເຂົ້າຮ່ວມ 16 ທ່ານ, ມີນັກສຳມະນາກອນ ທັງໝົດ 1.120 ທ່ານ; ຈັດກອງປະຊຸມຄະນະກຳມະການດ້ານດົນຕີນາໆຊາດ ແລະ ກອງປະຊຸມສິລະປະວັດທະນະທຳໜ້າກາກສາກົນ 2 ຄັ້ງ ແລະ ສຳເລັດການສ້າງກົດໝາຍວ່າດ້ວຍສິລະປະການສະແດງ 1 ສະບັບ.

ໃນນີ້ກໍໄດ້ລິງເຄື່ອນໄຫວສະແດງຮັບໃຊ້ປະຊາຊົນທີ່ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມຢູ່ເມືອງສະໜາມໄຊແຂວງອັດຕະປື 17 ຄັ້ງ, ມີຜູ້ເຂົ້າຊົມ 30.850 ເທື່ອຄົນ, ບຳລຸງກໍ່ສ້າງນັກສິລະປະ, ນັກຮ້ອງ, ຂັບ-ລຳຕ່າງໆ,ນັກສະແດງ,ນັກດົນຕຣີ, ປະດິດແຕ່ງບົດເພງ, ລະຄອນ, ບົດຟ້ອນ ແລະ ອື່ນໆ ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອຮັບໃຊ້ໜ້າທີ່ການເມືອງ ແລະ ສັງຄົມ, ສ້າງຄວາມເບີກບານມ່ວນຊື່ນ ແລະຄຶກຄື້ນຍິ່ງໃຫຍ່ດ້ວຍການປະກອບແສງສີສຽງ ທີ່ທັນສະໄໝອັນເປັນທີ່ປະທັບໃຈ ແລະໄດ້ຮັບຄວາມນິຍົມຊົມຊອບຈາກທັງພາຍໃນ ແລະຕ່າງປະເທດ, ນອກຈາກນີ້ກໍໄດ້ຄົ້ນຄວ້າຟ້ອນລຳວົງລາວ ເພື່ອນຳສະເໜີເຂົ້າເປັນມໍຣະດົກໂລກທາງດ້ານວັດທະນະທຳນາມມະທຳຂອງມວນມະນຸດ.

**2. ວຽກວັດທະນະທຳມະຫາຊົນ**

ມາຮອດປັດຈຸບັນທົ່ວປະເທດມີຄອບຄົວວັດທະນະທຳທັງໝົດ 970.369 ຄອບຄົວ ສະເລ່ຍເທົ່າກັບ 76,97% ຂອງຈານວນຄອບຄົວທົ່ວປະເທດ ແລະ ບ້ານວັດທະນະທຳມີທັງໝົດ 6.548 ບ້ານກວມເອົາ 77,68% ຂອງຈຳນວນບ້ານທົ່ວປະເທດ (ຕົວເລກສະສົມ); ແຕ່ຖ້າສົມທຽບໂຕເລກ ຊຸກຍູ້ໃນການສ້າງ ຄອບຄົວ ແລະ ບ້ານວັດທະນະທຳ ໃນແຕ່ລະປີແມ່ນມີທ່າອ່ຽງຫຼຸດລົງ ເນື່ອງຈາກວ່າມີປັດໄຈຫຼາຍດ້ານກະທົບໃສ່ເປັນຕົ້ນ ດ້ານງົບປະມານ, ບຸກຄະລາກອນ,ໄພພິບັດ ແລະ ການລະບາດຂອງພະຍາດຕ່າງໆ ເຊິ່ງສະແດງອອກໃນຕົວເລກຄອບຄົວ ແລະ ບ້ານວັດທະນະທຳ ໃນໄລຍະການຈັດຕັ້ງປະຕິບັດແຜນການ 5 ປີ (2011-2015) ປະຕິບັດໄດ້ 765.303 ຄອບຄົວ ແລະ 4.821 ບ້ານ ແລະແຜນການ 5 ປີ (2016-2020) ປະຕິບັດໄດ້ 197.635 ຄອບຄົວ ຫຼື ເທົ່າກັບ 156% ທຽບໃສ່ແຜນ 5 ປີ ແລະ 1.703 ບ້ານ ຫຼື ເທົ່າກັບ 178% ທຽບໃສ່ແຜນ 5 ປີ. ສຳເລັດວຽກງານຂຸດຄົ້ນ, ຟື້ນຟູ ແລະໂຄສະນາຄຸນຄ່າວັດທະນະທຳອັນດີງາມຂອງບັນດາເຜົ່າຕາມຄາດໝາຍ,ສາມາດຜະລິດລາຍການໂທລະພາບອອກອາກາດໄດ້ 864 ຄັ້ງ/5ປີ ແລະ ອອກອາກາດລາຍການວິທະຍຸໄດ້ 144 ຄັ້ງ ຫຼື ບົດ, ບົດຄົ້ນຄວ້າ ແລະ ວິໄຈການສົ່ງເສີມ ແລະ ອະນຸລັກຄຸນຄ່າບຸນປະເພນີໄດ້ 9 ບົດ.

ວຽກງານສູນວັດທະນະທຳເດັກໄດ້ຈັດຕັ້ງເຄື່ອນໄຫວວຽກງານໃນຂອບເຂດທົ່ວປະເທດ, ປະຕິບັດໂຄງການຝຶກອົບຮົມບຸກຄະລາກອນ ແລະ ໂຄງການແລກປ່ຽນກິດຈະກາສູນວັດທະນະທຳເດັກຢູ່ບັນດາແຂວງ ແລະ ເມືອງຈຳນວນ 25 ຄັ້ງ, ຂະຫຍາຍສູນວັດທະນະທຳເດັກໄດ້ 8 ແຫ່ງ, ປັດຈຸບັນທົ່ວປະເທດມີສູນວັດທະນະທຳເດັກ ທັງໝົດ 48 ແຫ່ງ (ຕົວເລກສະສົມ) ແລະ ມີເດັກນ້ອຍເຂົ້າມາໃຊ້ບໍລິການທົ່ວປະເທດຈຳນວນ 51.305 ເທື່ອຄົນ ໃນແຕ່ລະປີສູນວັດທະນະທາເດັກໄດ້ສຳເລັດການປະກວດຮູບແຕ້ມຊີງລາງວັນຊະນະເລີດ ແລະ ນາພາເຂົ້າຮ່ວມຮັບລາງວັນໃນງານມະຫາກຳສິລະປະຂອງນັກຮຽນມັດທະຍົມຢູ່ປະເທດຍີ່ປຸ່ນຈຳນວນ 5 ຄົນ ແລະ ເຂົ້າຮ່ວມງານສະແດງ

ແລກປ່ຽນສິລະປະວັດທະນະທຳເດັກນ້ອຍອາຊຽນຢູ່ຕ່າງປະເທດ 8 ຄັ້ງ ແລະ 18 ເທື່ອຄົນ,ສະແດງຮັບໃຊ້ເນື່ອງໃນໂອກາດກິດຈະກຳ ແລະ ວັນສຳຄັນຂອງຊາດ 13 ຄັ້ງ, 182 ເທື່ອຄົນ (ສະເພາະນັກສະແດງ), ຈັດຝຶກອົບຮົມ ແລະ ສ້າງກິດຈະກຳແລກປ່ຽນສິ່ງເສີມຄວາມເຂົ້າໃຈໃນວັດທະນະທຳ, ຄຸນນະທຳຈະລິຍະທຳໃຫ້ເດັກຢູ່ບັນດາແຂວງພາຍໃນປະເທດ 18 ແຂວງ ມີຜູ້ເຂົ້າຮ່ວມຫຼາຍກວ່າ 800 ຄົນ.

ໄດ້ສຳເລັດການສ້າງກົດໝາຍ ວ່າດ້ວຍປ້າຍ ແລະ ຈັດຕັ້ງເຜີຍແຜ່ຢູ່ 3 ພາກ, ໂດຍມີບັນດາແຂວງທົ່ວປະເທດເຂົ້າຮ່ວມ; ພ້ອມນີ້ກໍໄດ້ແກ້ໄຂບັນຫາປະກົດການຫຍໍ້ທໍ້ເປັນຕົ້ນແມ່ນການຄຸ້ມຄອງປ້າຍໃຫ້ເຂົ້າສູ່ຄວາມເປັນລະບຽບໃນຂອບເຂດທົ່ວປະເທດໄດ້ 18 ຄັ້ງ ແລະ ໄດ້ລົງແກ້ໄຂບັນຫາຕູ້ເກມພະນັນທີ່ບໍ່ຖືກລະບຽບໄດ້ 15 ຄັ້ງ ແລະ ໄດ້ຄຸ້ມຄອງສັງຄົມໃນການຈັດງານບຸນປະເພນີ, ການຈັດກິດຈະກຳ, ພິທີກຳຕ່າງໆໄດ້ 20 ຄັ້ງ. ໄດ້ລົງເຜີຍແຜ່ວຽກງານວັດທະນະທຳມະຫາຊົນ ແລະ ການສ້າງຄອບຄົວ ແລະ ບ້ານວັດທະນະທຳ ຈຳນວນ 45 ຄັ້ງ, ມີຜູ້ເຂົ້າຮ່ວມຫຼາຍກວ່າ 500 ຄົນ.

### 3. ວຽກພິມຈຳໜ່າຍ

ປັດຈຸບັນພື້ນຖານໂຄງລ່າງເຕັກນິກການພິມ, ການອອກແບບສິ່ງພິມ, ການຜະລິດສິ່ງພິມຕ່າງໆຂອງບັນດາໂຮງພິມພາກລັດ ແລະ ເອກະຊົນ ໄດ້ຮັບການປັບປຸງຢ່າງຕໍ່ເນື່ອງໂດຍການນຳເຂົ້າເຕັກໂນໂລຊີ, ເຄື່ອງຈັກ ແລະ ເຄື່ອງມືດ້ານການພິມທີ່ທັນສະໄໝເຂົ້າໃນການຜະລິດເພື່ອບໍລິການສັງຄົມ, ສາມາດຕອບສະໜອງວຽກງານການພິມ ແລະ ການຈຳໜ່າຍສິ່ງພິມຕ່າງໆດ້ວຍປະລິມານ ແລະ ຄຸນນະພາບຢູ່ພາຍໃນປະເທດໄດ້ດີ. ທົ່ວປະເທດມີໂຮງພິມທັງໝົດ 78 ແຫ່ງ (ຕົວເລກສະສົມ), ໃນນັ້ນຂອງລັດ 7 ແຫ່ງ, ເອກະຊົນ 71 ແຫ່ງ, ສຳນັກພິມ 17 ແຫ່ງ (ລັດ 1 ແຫ່ງ). ໄດ້ຄຸ້ມຄອງຕິດຕາມກວດກາໂຮງພິມ , ສຳນັກພິມ, ການຈັດພິມ, ວັນນະຄະດີ ແລະ ແປພາສາ, ການອອກແບບໂຄສະນາຜ່ານສິ່ງພິມ, ການນຳເຂົ້າ - ສົ່ງອອກສິ່ງພິມຢູ່ພາຍໃນ ແລະຕ່າງປະເທດຢ່າງເປັນລະບົບໃນຂອບເຂດທົ່ວປະເທດ. ໄດ້ອອກອະນຸຍາດເລກທະບຽນການຈັດພິມ ແລະ ການຈຳໜ່າຍສິ່ງພິມໃຫ້ແກ່ບັນດາການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນໃນການພິມປຶ້ມເລື່ອງ, ແປປຶ້ມປະເພດຕ່າງໆໄດ້ຫຼາຍກວ່າ 1.127 ຫົວເລື່ອງ,ຈຳນວນພິມ 35.374.248 ເຫຼັ້ມ. ໄດ້ຈັດການຝຶກອົບຮົມສຳມະນາກ່ຽວກັບວຽກງານການພິມຈຳໜ່າຍ ແລະ ບັນນາທິການ ໃຫ້ແກ່ພະນັກງານສູນກາງ ແລະ ທ້ອງຖິ່ນ, ບັນດາຜູ້ປະກອບການບໍລິການດ້ານສິ່ງພິມຈຳນວນ 5 ຊຸດມີນັກສຳມະນາກອນເຂົ້າຮ່ວມຫຼາຍກວ່າ 400 ຄົນ.ໄດ້ຊຸກຍູ້ສົ່ງເສີມປະດິດຄິດແຕ່ງການປະພັນບົດເລື່ອງ,ຈັດຕັ້ງການແຂ່ງຂັນກວດສອບເລື່ອງສັ້ນ, ເລື່ອງຍາວ, ກາບກອນ, ກະວີ, ການຂຽນປຶ້ມ, ແປ ແລະ ພິມປຶ້ມວັນນະກຳ ແລະ ສາລະຄະດີຕ່າງໆ ເນື່ອງໃນບັ້ນປຸກລະດົມວັນສຳຄັນຕ່າງໆ

ຂອງຊາດໄດ້ຢ່າງເປັນຂະບວນຟົດຟື້ນ ໂດຍສະເພາະສຳນັກວາລະສານວັນນະສິນໄດ້ຈັດການກວດສອບບົດເລື່ອງຕ່າງໆໄດ້ 548 ບົດ, ຈັດພິມວາລະສານວັນນະສິນ 20 ສະບັບ, ຈຳນວນພິມ 20.000 ເຫຼັ້ມ. ພ້ອມດຽວກັນນີ້ໄດ້ສົ່ງບົດປະພັນໄປແຂ່ງຂັນຊີງເອົາລາງວັນລະດັບອາຊຽນ ແລະ ອະນຸພາກພື້ນ ເຊິ່ງໄດ້ຮັບລາງວັນຊີໄຣ 4 ທ່ານ, ລາງວັນແມ່ນ້ຳຂອງ 8 ທ່ານ, ລາງວັນສິນໄຊ 7 ທ່ານ ແລະ ລາງວັນອື່ນໆ. ມາຮອດປັດຈຸບັນມີນັກປະພັນ ແລະ ນັກຂຽນລວມທັງໝົດ 149 ຄົນ (ຕົວເລກສະສົມ), ສຳເລັດການຈັດຕັ້ງປະຕິບັດໂຄງການຝຶກອົບຮົມການປະດິດຄິດແຕ່ງບົດປະພັນວັນນະຄະດີ ຈຳນວນ 4 ຄັ້ງ ມີຜູ້ເຂົ້າຮ່ວມ 421 ທ່ານ.

ໄດ້ສຳເລັດການກໍ່ສ້າງຫໍສະໝຸດແຫ່ງຊາດຫຼັງໃໝ່ພ້ອມທັງປະກອບວັດຖຸອຸປະກອນເຕັກນິກ ທີ່ສາມາດເຊື່ອມຕໍ່ກັບເຄືອຂ່າຍອິນເຕີເນັດ ແລະ ເປີດບໍລິການຮັບໃຊ້ນັກຮຽນ, ນັກສຶກສາ, ປັນຍາຊົນ, ປະຊາຊົນ ແລະ ຜູ້ທີ່ສົນໃຈອື່ນໆ, ຄຽງຄູ່ກັນນັ້ນກໍໄດ້ເອົາໃຈໃສ່ປັບປຸງຂະຫຍາຍຫໍສະໝຸດ, ຫ້ອງສະໝຸດ, ຫ້ອງອ່ານໜັງສື, ລົດສະໝຸດ, ເຮືອສະໝຸດເຄື່ອນທີ່ຢູ່ຂັ້ນທ້ອງຖິ່ນໃຫ້ມີການເຄື່ອນໄຫວຢ່າງຕັ້ງໜ້າ. ປັດຈຸບັນມີຫໍສະໝຸດແຫ່ງຊາດ ແລະ ຂັ້ນແຂວງ 12 ແຫ່ງ ເພີ່ມຂຶ້ນ 1 ແຫ່ງ, ຫ້ອງສະໝຸດຂັ້ນມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນ ແລະ ໂຮງຮຽນມີ 99 ແຫ່ງ ແລະ ຫ້ອງອ່ານມີ 1.628 ຫ້ອງ ສາມາດສະໜອງຂໍ້ມູນປະເພດຕ່າງໆໃຫ້ແກ່ຜູ້ອ່ານ ແລະ ຜູ້ທີ່ຄວາມສົນໃຈໄດ້ດີ ແລະ ສະດວກຂຶ້ນເປັນກ້າວໆ. ການປົກປັກຮັກສາໜັງສືບູຮານທີ່ຫາຍາກເຊັ່ນ: ໜັງສືຜູກໃບລານ 368.260 ຜູກ ແລະ ໜັງສືພັບສາ 8.973 ຫົວ ພ້ອມດຽວກັນໄດ້ປະລິວັດໜັງສືໃບລານຈາກຕົ້ນສະບັບທີ່ເປັນອັກສອນທຳ ແລະ ລາວບູຮານມາເປັນອັກສອນລາວ ສະໄໝໃໝ່ເຊິ່ງໄດ້ບັນທຶກໄວ້ໃນຮູບແບບໄມໂຄຣຟິມ ແລະ ເປີດ“ເວັບໄຊ”ເພື່ອໃຫ້ບໍລິການແກ່ສັງຄົມ.

**4. ວຽກມໍຣະດົກ**

ໄດ້ເອົາໃຈໃສ່ການປົກປັກຮັກສາມໍຣະດົກໂລກ, ມໍຣະດົກລະດັບຊາດ ແລະ ແຫຼ່ງມໍຣະດົກທ້ອງຖິ່ນ, ສຳເລັດການບູລະນະພຣະທາດຫຼວງວຽງຈັນ, ການກໍ່ສ້າງຫໍພິພິທະພັນແຫ່ງຊາດຫຼັງໃໝ່, ສຽງແຄນເຊື້ອຊາດລາວໄດ້ຖືກຮັບຮອງເປັນມໍຣະດົກໂລກທາງດ້ານວັດທະນະທຳນາມມະທຳຂອງມວນມະນຸດ ແລະ ທົ່ງໄຫຫີນແຂວງຊຽງຂວາງໄດ້ຖືກຮັບຮອງເປັນມໍຣະດົກໂລກທາງດ້ານວັດທະນະທຳ, ສຸມໃສ່ການປົກປັກຮັກສາ, ການຂຶ້ນທະບຽນ ແລະ ຄຸ້ມຄອງພຣະພຸດທະຮູບ, ແຫຼ່ງບູຮານສະຖານ, ບູຮານວັດຖຸທີ່ຄົ້ນພົບໃໝ່, ຫໍວາງສະແດງມູນເຊື້ອຢູ່ສູນກາງ ແລະ ແຂວງເພື່ອບໍລິການຮັບໃຊ້ປະຊາຊົນ, ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ສົມທົບກັບທ້ອງຖິ່ນສຳຫຼວດ, ຄົ້ນຄວ້າ ແລະ ຂຶ້ນທະບຽນ ເພື່ອຄຸ້ມຄອງສະຖານບູຮານທີ່ພົບໃໝ່ ແລະ ປະຕິສັງຂອນສະຖານບູຮານທີ່ເກົ່າແກ່ສຳຫຼວດແຫຼ່ງວັດທະນະທຳຮ່ອງຮອຍປະຫວັດສາດເມືອງເກົ່າສຸວັນນະໂຄມຄຳແຂວງບໍ່ແກ້ວ ເພື່ອສະເໜີເຂົ້າເປັນ

ມໍຣະດົກແຫ່ງຊາດ, ພ້ອມນັ້ນ ກໍໄດ້ຄົ້ນຄວ້າກະກຽມ ນໍາສະເໜີເອົາປ່າສະຫງວນແຫ່ງຊາດຫີນໜາມໜໍ່ ແຂວງຄໍາມ່ວນເຂົ້າເປັນມໍຣະດົກໂລກທາງດ້ານທໍາມະຊາດແຫ່ງທໍາອິດຂອງ ສປປ ລາວ ໃນຕໍ່ໜ້າ. ມາຮອດປັດຈຸບັນມີມໍຣະດົກໂລກທີ່ເປັນວັດຖຸຈໍານວນ 3 ແຫ່ງ ເພີ່ມຂຶ້ນ 1 ແຫ່ງ, ມໍຣະດົກໂລກທີ່ບໍ່ເປັນວັດຖຸ 1 ລາຍການ, ມໍຣະດົກລະພາກພື້ນ 1 ແຫ່ງ ແລະ ມໍຣະດົກແຫ່ງຊາດ 15 ແຫ່ງ (ຕົວເລກສະສົມ). ນອກນັ້ນ, ໃນໄລຍະ 5 ປີຜ່ານມາ ກອງບູຮານວິທະຍາໄດ້ຈັດຕັ້ງປະຕິບັດການສໍາຫຼວດທາງດ້ານບູຮານວິທະຍາໄດ້ 33 ຄັ້ງ ຢູ່ໃນ 5 ແຂວງຄື: ແຂວງຫົວພັນ, ແຂວງຜົ້ງສາລີ , ແຂວງໄຊສົມບູນ, ແຂວງອັດຕະປື ແລະ ແຂວງອຸດົມໄຊ. ໄດ້ຈັດຕັ້ງປະຕິບັດການຂຶ້ນທະບຽນວັດຖຸບູຮານໄດ້ 3 ແຂວງຄື: ແຂວງວຽງຈັນ 1 ຄັ້ງ, ແຂວງສະຫວັນນະເຂດ 1 ຄັ້ງ, ແຂວງໄຊສົມບູນ 1 ຄັ້ງ ແລະ ຍັງສືບຕໍ່ການສໍາຫຼວດ, ຂຶ້ນທະບຽນຈານວນ 14 ຄັ້ງ ແລະ ຍັງໄດ້ເຄື່ອນໄຫວຕິດຕາມພາກສະໜາມຢູ່ບໍລິສັດ ລ້ານຊ້າງ ມິເນີໂຣ ບໍ່ຄໍາ-ບໍ່ທອງ ເຊໂປນ ເປັນປົກກະຕິ ພ້ອມທັງກອບກູ້ ອະນຸລັກ ແລະ ຂຶ້ນທະບຽນບັນຊີວັດຖຸບູຮານທີ່ໄດ້ຄົ້ນພົບ.

## 5. ວຽກວິຈິດສິນ

ສໍາເລັດການແຕ້ມແບບພຣະພຸດທະຮູບ (ພະເຈົ້າໃຫຍ່) ຢູ່ແຂວງບໍ່ແກ້ວ ແລະ ພຸດທະສິມມາຢູ່ແຂວງວຽງຈັນ, ເອົາໃຈ ໃສ່ຄຸ້ມຄອງ, ຊີ້ນໍາການສ້າງອານຸສາວະລີ, ບັນພະບຸລຸດວິລະຊົນຂອງຊາດ, ການກໍ່ສ້າງອະນຸສາວະລີ, ການກໍ່ສ້າງພຣະພຸດທະຮູບ, ການຟື້ນຟູສິລະປະວິຈິດສິນພື້ນເມືອງ, ການອອກແບບເສົາຫຼັກເມືອງ, ຫໍແຈກ, ຫໍກອງ, ກຸດຕິ, ທາດ ແລະ ປະຕູໂຂງ, ສົ່ງເສີມສີໄມ້ລາຍມື, ການແຕ້ມ, ການປັ້ນ-ຫຼໍ່, ການຄວັດແກະສະຫຼັກ, ການຕິດເຄື່ອງປະດັບດ້ວຍເງິນ, ທອງ, ຄໍາ, ສິລະປະຫັດຖະກໍາການຕໍ່າຫູກ, ຫໍໄໝປັກດິ້ງ, ການວາງສະແດງວຽກງານວິຈິດສິນ ແລະ ກິດຈະກາຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ຊຸກຍູ້ຜູ້ປະກອບການເຮັດໃຫ້ຜະລິດຕະພັນວິຈິດສິນ ກາຍເປັນສິນຄ້ານໍາລາຍໄດ້ມາໃຫ້ສັງຄົມ ທັງເປັນການສົ່ງເສີມວຽກງານວິຈິດສິນຕິດພັນກັບການປົກປັກຮັກສາຮີດຄອງປະເພນີອັນດີງາມຂອງຊາດໄວ້ໃຫ້ມີຄວາມຍືນຍົງ. ພ້ອມກັນນັ້ນ ສະຖາບັນວິຈິດສິນແຫ່ງຊາດ ແລະວິທະຍາໄລວິຈິດສິນຢູ່ທ້ອງຖິ່ນ 3 ແຫ່ງ ຍັງໄດ້ດໍາເນີນການສິດສອນຢ່າງເປັນປົກກະຕິ ໂດຍສະເພາະສະຖາບັນວິຈິດສິນແຫ່ງຊາດ ຍັງໄດ້ເປີດຫຼັກສູດການສຶກສາລະດັບປະລິນຍາໂທ, ພ້ອມດຽວກັນນັ້ນກໍຍັງໄດ້ມີການຮ່ວມມືແລກປ່ຽນຂໍ້ມູນການສຶກສາ ແລະ ກິດຈະກໍາວາງສະແດງດ້ານວິຈິດສິນ ຢູ່ທັງພາຍໃນ ແລະ ຕ່າງປະເທດ.

**6. ວຽກຮູບເງົາ**

ຄຸ້ມຄອງ, ນຳພາການຖ່າຍທຳບັນທຶກ ແລະ ສຳເນົາການເຄື່ອນໄຫວຂອງຜູ້ນຳຂັ້ນສູງ ແລະ ກິດຈະກຳຕ່າງໆທີ່ເປັນເຫດການສຳຄັນຂອງຊາດມີທັງໝົດ 52 ຄັ້ງ, ການເຄື່ອນໄຫວສາຍຮູບເງົາຮັບໃຊ້ໜ້າທີ່ການເມືອງ, ວັນສຳຄັນຕ່າງໆຂອງຊາດ ແລະ ແລກປ່ຽນວັດທະນະທຳກັບຕ່າງປະເທດໄດ້ທັງໝົດ 353 ຄັ້ງ; ປົກປັກຮັກສາສຳເນົາຟິມໂດຍການປ້ອນຂໍ້ມູນເຂົ້າຄອມພິວເຕີຈຳນວນ 3.207 ມ້ວນ, ການຈັດຕັ້ງສັບປະດາຮູບເງົາ, ງານມະໂຫລານຮູບເງົາ 6 ຄັ້ງ; ຈັດຕັ້ງພິທີປະກາດ ຜົນການແຂ່ງຂັ້ນຮູບເງົາເລື່ອງສັ້ນ ແລະ ສາລະຄະດີທົ່ວປະເທດພາຍໃຕ້ຫົວຂໍ້ຕ່າງໆ, ການຈັດງານສະເຫຼີມສະຫຼອງວັນມໍຣະດົກພາບ-ສຽງໂລກ, ການມອບລາງວັນຜູ້ມີຜົນງານດ້ານວຽກງານສຳເນົາພາບ-ສຽງ ແລະ ການນຳພານັກຮຽນມ.ຕົ້ນ - ມ.ປາຍ ສົ່ງຟິມເລື່ອງສັ້ນໄປແຂ່ງຂັນຢູ່ຕ່າງປະເທດ, ສ້າງສາລະຄະດີທົ່ວໄປ ໄດ້ທັງໝົດ 25 ເລື່ອງສາລະຄະດີກະກຽມສະເໜີເຂົ້າເປັນມໍຣະດົກໂລກນາມມະທຳໄດ້ 6 ເລື່ອງ, ໂຄສະນາຮູບເງົາສາລະຄະດີ ແລະ ເອກະສານຜ່ານສື່ເອເລັກໂຕຣນິກ, ຕິດຕາມກວດກາເນື້ອໃນ, ການອະນຸຍາດຖ່າຍທຳຮູບເງົາ ແລະ ພ້ອມທັງເຮັດໜ້າທີ່ໂຄສະນາການເຄື່ອນໄຫວຮູບເງົາລາວ, ຮູບເງົາຕ່າງປະເທດຜ່ານທາງອິນເຕີເນັດໂດຍມີຈຳນວນຜູ້ເຂົ້າຊົມຜ່ານ ເວັບໄຊ້, ຢູທູບ ແລະ ເຟຊບຸກຈຳນວນ 1.865.537 ເທື່ອຄົນ. ມາຮອດປັດຈຸບັນ ມີຫົວໜ່ວຍຜະລິດຮູບເງົາທັງໝົດ 28 ຫົວໜ່ວຍ; ໃນນັ້ນ ລວມມີພາກລັດ 19 ຫົວໜ່ວຍ ແລະ ພາກເອກະຊົນ 9 ຫົວໜ່ວຍ; ຜົນຜະລິດຕະພັນຮູບເງົາຕົ້ນສະບັບປະເພດຕ່າງໆ ລວມມີ 100 ເລື່ອງ, ໃນນັ້ນເປັນຂອງລັດ 25 ເລື່ອງ ແລະ ພາກເອກະຊົນ 75 ເລື່ອງ; ໃນທົ່ວປະເທດມີໂຮງສາຍຮູບເງົາທັງໝົດ 4 ແຫ່ງ, ຮູບເງົາທີ່ ເຂົ້າສາຍທັງໝົດມີ 200 ເລື່ອງ ໃນນັ້ນຮູບເງົາລາວ 6 ເລື່ອງ ແລະ ຕ່າງປະເທດ 194 ເລື່ອງ, ນອກນັ້ນກໍໄດ້ຮ່ວມມືກັບ ສປຈີນ ໃນການຜະລິດຮູບເງົາ ແລະ ການຮ່ວມມືດ້ານວິຊາການໃນວຽກງານຮູບເງົາຈຳນວນໜຶ່ງ.

**7. ວຽກງານສະມາຄົມວິຊາຊີບວັດທະນະທຳ**

ໃນຊຸມປີຜ່ານມາ ສະມາຄົມວິຊາຊີບວັດທະນະທຳເຊັ່ນ: ສະມາຄົມນັກປະພັນ, ສະມາຄົມສິລະປິນ, ສະມາຄົມວິຈິດສິນ, ສະມາຄົມການພິມ, ສະມາຄົມຫໍສະໝຸດ ແລະ ສະມາຄົມແຄນລາວ ໄດ້ເຄື່ອນໄຫວ ກ່ຽວກັບວັດທະນະທຳຂະແໜງຕ່າງໆ ແລະ ໄດ້ເຕົ້າໂຮມຄວາມສາມັກຄີລະດົມຫົວຄິດປະດິດສ້າງ, ພັດທະນາຜະລິດທະພັນວັດທະນະທຳ ແລະ ສ້າງສັນຜົນງານຕ່າງໆ ພາຍໃຕ້ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ສອດຄ່ອງກັບມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຕອບສະໜອງຄວາມຕ້ອງການຂອງສັງຄົມທັງພາຍໃນ ແລະ ຕ່າງປະເທດນັບມື້ມີຄວາມອຸດົມສົມບູນ ແລະ ດີຂຶ້ນເປັນກ້າວໆ.

## 8. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງວັດທະນະທຳ

8.1. ການລົງທຶນຈາກງົບປະມານຂອງລັດ

ໃນໄລຍະ 5 ປີ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດວຽກງານວັດທະນະທຳມີຈຳນວນ 16 ໂຄງ ການມູນຄ່າທັງໝົດປະມານ 77.730,00 ລ້ານກີບ ເຊິ່ງບັນດາໂຄງການຈານວນໜຶ່ງແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ ແຕ່ການຊຳລະງົບປະມານຍັງບໍ່ທັນສຳເລັດຕາມສັນຍາ ແລະ ໂຄງການຈຳນວນໜຶ່ງຈະສຳເລັດໃນແຜນການ 5 ປີຄັ້ງຕໍ່ໄປ.

8.2. ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA) ມີຈຳນວນ 3 ໂຄງການຄື:

1.) ໂຄງການສ້າງສາລະຄະດີເປັນວີດີໂອກ່ຽວກັບວັດທະນະທຳນາມມະທຳເພື່ອນຳສະເໜີເຂົ້າເປັນມໍຣະດົກວັດທະ ນະທຳຂອງມອນມະນຸດມູນຄ່າ 42.000 ໂດລາສະຫະລັດ ໄລຍະປະຕິບັດປີ 2018-2019 ເປັນໂຄງການຊ່ວຍເຫຼືອລ້າຂອງ ອົງການອິສແດບ (ICHCAP);

2.) ໂຄງການບູລະນະປະຕິສັງຂອນ ໂຮງນາງສີດາ ວັດພູຈຳປາສັກ ມໍຣະດົກ (ໂຄງການສືບຕໍ່ ໄລຍະສອງຂອງລັດຖະ ບານ ສ. ເກົາຫຼີ ມູນຄ່າທັງໝົດ 7.000.000 ໂດລາສະຫະລັດ);

3.) ໂຄງການບູລະນະປະຕິສັງຂອນໂຮງຊາວ, ວັດພູຈາປາສັກ ມໍຣະດົກໂລກ (ໂຄງການສືບຕໍ່ໄລຍະສອງຂອງລັດຖະ ບານອິນເດຍ ກຳນົດເວລາ 10 ປີ; ມູນຄ່າລວມທັງໝົດ 3.500.000 ໂດລາສະຫະລັດ).

8.3. ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ.

ອີງໃສ່ນະໂຍບາຍຂອງລັດຖະບານຕໍ່ວຽກງານວັດທະນະທຳ, ລັດຊຸກຍູ້ ແລະ ເປີດກວ້າງໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດມີສ່ວນຮ່ວມ ແລະ ລົງທຶນເຂົ້າໃນການພັດທະນາວຽກງານວັດທະນະທຳຕາມກົດໝາຍ ແລະ ລະບຽບການ. ມາຮອດປັດຈຸບັນນິຕິບຸກຄົນພາຍໃນປະເທດ ແລະ ຕ່າງປະເທດ ຈຳນວນໜຶ່ງທີ່ມີຄວາມສາມາດດ້ານບຸກຄະລາກອນ ແລະ ທຶນຮອນໄດ້ປະກອບສ່ວນສົມທົບກັບລັດຖະບານ ໃນການບູລະນະປະຕິສັງຂອນສະຖາປະຕິຍະກຳທາງດ້ານວັດທະນະທຳ; ພັດທະນາ, ປະດິດຄິດແຕ່ງບົດປະພັນ, ບົດຟ້ອນ, ບົດເພງ, ບົດຂັບ-ລຳ, ບົດລະຄອນ-ຮູບເງົາຕ່າງໆ ເຊິ່ງເປັນການໂຄສະນາດ້ານວຽກງານວັດທະນະທຳ ແລະ ເພື່ອຮັບໃຊ້ສັງຄົມ.

ຈາກຜົນສຳເລັດໃນແຕ່ລະດ້ານທີ່ກ່າວມາຂ້າງເທິງນັ້ນ ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຄືດັ່ງນີ້

## 9. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

1) ການປະດິດຄິດແຕ່ງ ບົດປະພັນວັນນະຄະດີ, ເພງຮ້ອງ, ຂັບລຳ, ລະຄອນ, ຮູບເງົາ ແລະ ລາຍການສະແດງຕ່າງໆຈຳນວນໜຶ່ງຍັງບໍ່ທັນສອດຄ່ອງກັບແນວທາງນະໂຍບາຍວັດທະນະທຳຂອງພັກໃນໄລຍະໃໝ່, ຮູບການ ແລະເນື້ອໃນຍັງບໍ່ມີຄວາມອຸດົມສົມບູນ, ບໍ່ຫຼາກຫຼາຍສີສັນ ແລະ ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ;
2) ປະສານສົມທົບໃນການຄຸ້ມຄອງ ແລະ ແກ້ໄຂປະກົດການຫຍໍ້ທໍ້ທາງດ້ານວັດທະນະທາໃນສັງຄົມລະຫວ່າງພາກສ່ວນ ແລະ ຂັ້ນຕ່າງໆຍັງບໍ່ທັນເລິກເຊິ່ງ, ລຽນຕິດ ແລະ ເຂັ້ມງວດ. ຍັງມີປະກົດການຖິ້ມຄວາມຮັບຜິດຊອບໃຫ້ກັນ ແລະ ກັນ ໂດຍສະເພາະແມ່ນບັນຫາທີ່ເກີດຂຶ້ນຢູ່ຕາມໂຮງແຮມ, ເຮືອນພັກ, ສະຖານບັນເທີງ, ປ້າຍໂຄສະນາ, ຕູ້ເກມ ແລະ ການເຄື່ອນໄຫວວັດທະນະທຳ ຕາມສະຖານທີ່ສາທາລະນະຕ່າງໆ;
3) ການເຜີຍແຜ່ບັນດານິຕິກຳທາງດ້ານວັດທະນະທຳຍັງບໍ່ທັນທົ່ວເຖິງ, ການຄຸ້ມຄອງຍັງບໍ່ທັນຮັດກຸມ, ບໍ່ຕໍ່ເນື່ອງພາໃຫ້ມີຊ່ອງຫວ່າງ ແລະ ການຕິດຕາມກວດກາຍັງບໍ່ທັນເຂັ້ມງວດ;
4) ກົດໝາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງດ້ານວັດທະນະທຳຢູ່ໃນສັງຄົມ ຍັງບໍ່ທັນຄົບຊຸດ ແລະ ຍັງມີການເຄື່ອນໄຫວທີ່ຂັດກັບລະບຽບກົດໝາຍ ແລະ ມູນເຊື້ອວັດທະນະທຳ ອັນດີງາມຂອງຊາດ:
5) ຍັງຂາດການກຳນົດແຜນການລົງຊຸກຍູ້, ຕິດຕາມກວດກາ, ປະເມີນຜົນດ້ວຍມາດຕະການຕ່າງໆເພື່ອປັບປຸງ, ແກ້ໄຂ ແລະ ຍົກລະດັບວຽກງານວັດທະນະທຳໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
6) ການຄຸ້ມຄອງການລົງທຶນ ແລະ ການຊ່ວຍເຫຼືອເພື່ອການພັດທະນາໃນຂະແໜງວັດທະນະທຳ ຍັງບໍ່ທັນເປັນລະບົບຜ່ານປະຕູດຽວ; ການຂຶ້ນແຜນໂຄງການລົງທຶນຂອງລັດຍັງຂາດການຄົ້ນຄວ້າຢ່າງລະອຽດຖີ່ຖ້ວນ, ບາງໂຄງການທີ່ໄດ້ຈັດຕັ້ງໄປແລ້ວນັ້ນບໍ່ທັນມີຄຸນນະພາບ ແລະ ບໍ່ມີປະສິດທິຜົນດີເທົ່າທີ່ຄວນ.

## III. ວຽກງານທ່ອງທ່ຽວ

ປະຕິບັດຕາມແນວທາງນະໂຍບາຍອັນຖືກຕ້ອງຂອງລັດຖະບານແຕ່ລະໄລຍະໃນການພັດທະນາການທ່ອງທ່ຽວຢູ່ປະເທດເຮົາ ໄດ້ມີຜົນສຳເລັດໃນແຕ່ລະດ້ານດັ່ງລຸ່ມນີ້:

### 1. ວຽກງານພັດທະນາການທ່ອງທ່ຽວ

ການສ້າງແຜນພັດທະນາການທ່ອງທ່ຽວ: ສຳເລັດການສ້າງແຜນພັດທະການທ່ອງທ່ຽວລະດັບພາກແຕ່ປີ 2016-2020 ສຳລັບ 3 ພາກ; ສຳເລັດການສ້າງແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ; ສຳເລັດການສ້າງແຜນພັດທະນາ ແລະ ຄຸ້ມຄອງ

ການທ່ອງທ່ຽວ 2 ແຫ່ງຄື: ແຫຼ່ງທ່ອງທ່ຽວປະຫວັດສາດພູກູດຈອມເຫຼັກ ແຂວງຊຽງຂວາງ ແລະ ສະຖານທີ່ທ່ອງທ່ຽວຖ້ຳນອນ ເມືອງວັງວຽງ ແຂວງວຽງຈັນ.

ການພັດທະນາແຫຼ່ງທ່ອງທ່ຽວ: ໃນຈຳນວນແຫຼ່ງທ່ອງທ່ຽວ 2.208 ແຫ່ງໃນທົ່ວປະເທດນັ້ນ, ມີແຫຼ່ງທ່ອງທ່ຽວທາງທຳມະຊາດ 1.318 ແຫ່ງ, ວັດທະນະທຳ 596 ແຫ່ງ, ປະຫວັດສາດ 294 ແຫ່ງ. ໃນນັ້ນ,ໄດ້ສຳຫຼວດຂັ້ນພື້ນຖານແລ້ວຈຳນວນ 1.040 ແຫ່ງ, ໄດ້ເປີດບໍລິການແລ້ວຈຳນວນ 817 ແຫ່ງ, ໄດ້ຮັບການພັດທະນາສ່ວນໃດໜຶ່ງຈຳນວນ 590 ແຫ່ງ; ສຳເລັດການສຳຫຼວດຈັດສັນ-ກຳນົດຂອບເຂດ ແລະ ກຳນົດແນວຄວາມຄິດການພັດທະນາແລ້ວຈຳນວນ 42 ແຫ່ງ, ໃນນີ້ສຳເລັດການປັກຫຼັກໝາຍ 20 ແຫ່ງ.

ການພັດທະນາໂຄງລ່າງພື້ນຖານການທ່ອງທ່ຽວ: ໄດ້ເອົາໃຈໃສ່ຍົກລະດັບພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກເພື່ອຮັບໃຊ້ການທ່ອງທ່ຽວ, ມາຮອດປັດຈຸບັນທົ່ວປະເທດມີດ່ານສາກົນ 27 ດ່ານ, ສາມາດເອົາວີຊ່າກັບດ່ານໄດ້ 14 ດ່ານ, ມີສະໜາມບິນສາກົນ 4 ແຫ່ງ (ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ, ສະຫວັນນະເຂດ ແລະ ແຂວງ ຈຳປາສັກ). ໄດ້ປັບປຸງ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ 28 ແຫ່ງ, ສ້າງຫ້ອງນ້ຳສາທາລະນະຢູ່ສະຖານທີ່ທ່ອງທ່ຽວ 18 ແຫ່ງ, ສ້າງສະຖານທີ່ຈອດລົດຢູ່ສະຖານທີ່ທ່ອງທ່ຽວໄດ້ 8 ແຫ່ງ, ສ້າງກະດານຂໍ້ມູນຂ່າວສານຢູ່ສະຖານທີ່ທ່ອງທ່ຽວໄດ້ 10 ແຫ່ງ, ສ້າງສາລາຊົມວິວ 8 ແຫ່ງ, ສ້າງທ່າເຮືອ , ຂັ້ນໄດຂຶ້ນ-ລົງເຮືອໄດ້ 8 ຈຸດ ແລະ ສ້າງສູນຫັດຖະກຳໄດ້ 8 ແຫ່ງ.

ການພັດທະນາຜະລິດຕະພັນການທ່ອງທ່ຽວ: ການພັດທະນາຮູບແບບການທ່ອງທ່ຽວປະຊາຊົນມີສ່ວນຮ່ວມຢູ່ແຕ່ລະທ້ອງຖິ່ນທົ່ວປະເທດມີຈຳນວນ 91 ລາຍການ (ກວມເອົາ 69 ບ້ານ, 44 ເມືອງ, 16 ແຂວງ ຍົກເວັ້ນນະຄອນ ຫຼວງວຽງຈັນ ແລະ ແຂວງໄຊສົມບູນ).ໃນນີ້ມີ 5 ລາຍການໄດ້ຖືກຮັບຮອງເປັນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນຄື: 1) ບ້ານກອງລໍ ເມືອງຄູນຄຳ ແຂວງຄຳມ່ວນ; 2) ການທ່ອງທ່ຽວເທິງຕົ້ນໄມ້ (Tree Top Experience) ບ້ານໜອງຫຼວງ ເມືອງປາກຊ່ອງ ແຂວງຈຳປາສັກ; 3) ບ້ານນາລັນ ເມືອງນ້ຳທາ ແຂວງຫຼວງນ້ຳທາ; 4) ກິດຈະກຳການທ່ອງທ່ຽວ ໃນເຂດປ່າສະຫງວນແຫ່ງຊາດນ້ຳກ່ານ (The Gibbon Experience); 5) ຣີສອດນ້ຳກັດຍໍລະປາ ເມືອງໄຊ ແຂວງ ອຸດົມໄຊ.

ການພັດທະນາເຮືອນພັກແຮມປະຊາຊົນ (ໂຮມສະເຕ): ທົ່ວປະເທດມີຈຳນວນ 240 ຫຼັງ, ກວມເອົາ 27 ບ້ານ, 21 ເມືອງ ຍົກເວັ້ນນະຄອນຫຼວງວຽງຈັນ ແລະ ແຂວງໄຊສົມບູນ. ໃນນັ້ນມີ 4 ບ້ານໄດ້ຖືກຮັບຮອງເປັນບ້ານທີ່ໄດ້ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນຄື: 1) ບ້ານນາດ້ວງ ເມືອງ

ວັງວຽງ ແຂວງວຽງຈັນ, 2) ບ້ານດອນໂຄ ເມືອງຊະນະສົມບູນ ແຂວງຈຳປາສັກ, 3) ບ້ານດອນແດງ ເມືອງປະທຸມພອນ ແຂວງຈຳປາສັກ, 4) ບ້ານວຽງເໜືອ ເມືອງນໍ້າທາ ແຂວງຫຼວງນໍ້າທາ.

ທັງພາກລັດ, ພາກທຸລະກິດ, ອົງການຈັດຕັ້ງຕ່າງໆ ແລະ ປະຊາຊົນທ້ອງຖິ່ນ ໄດ້ເປັນເຈົ້າການທັງດ້ານວິຊາການ ແລະ ທຶນຮອນສຸມໃສ່ການພັດທະນາແຫຼ່ງທ່ອງທ່ຽວໃໝ່ຫຼາຍແຫ່ງເຮັດໃຫ້ ສປປ ລາວ ໄດ້ຮັບລາງວັນການທ່ອງທ່ຽວດີເດັ່ນຈາກພາຍໃນ ແລະ ຕ່າງປະເທດຈຳນວນຫຼາຍລາງວັນເປັນຕົ້ນແມ່ນ ອຸທິຍານນໍ້າຕົກຕາດຄອນພະເພັງ, ນໍ້າຕົກຕາດເຍືອງ ແຂວງຈຳປາສັກ; ນໍ້າກັດຍໍລະປາ ແຂວງອຸດົມໄຊ; ສວນຊຽງຄວນ, ສວນພຶກສາ ແລະ ສວນດອກຈຳປາ ນະຄອນ ຫຼວງວຽງຈັນ; ພູຜາມ່ານ ແຂວງຄຳມ່ວນ; ສວນຮ້ອຍຄົວ ແລະ ຟາມຄວາຍແຂວງ ຫຼວງພະບາງ ແລະ ບ່ອນອື່ນໆ.

ວຽກສະຖິຕິ ແລະ ການວິໄຈການຕະຫຼາດການທ່ອງທ່ຽວ: ສຳລັບສະຖິຕິນັກທ່ອງທ່ຽວສາກົນ ແລະ ລາຍຮັບ: ປີ 2016 ໄດ້ຕ້ອນຮັບນັກທ່ອງທ່ຽວສາກົນຈຳນວນ 4.239.047 ເທື່ອຄົນ, ສ້າງລາຍຮັບໄດ້ຫຼາຍກວ່າ 724 ລ້ານໂດລາສະຫະລັດ, ໄລຍະພັກເຊົາສະເລ່ຍ 7,5 ວັນ/ຄົນ, ລາຍຈ່າຍສະເລ່ຍ 171 ໂດລາສະຫະລັດ/ຄົນ/ຄັ້ງ. ມາຮອດປີ 2019 ນັກທ່ອງທ່ຽວສາກົນມີ 4.791.065 ເທື່ອຄົນເພີ່ມຂຶ້ນ 14% ທຽບໃສ່ປີ 2018, ສ້າງລາຍຮັບໄດ້ຫຼາຍກວ່າ 917 ລ້ານໂດລາສະຫະລັດ; ໄລຍະພັກເຊົາສະເລ່ຍ 5 ວັນ/ຄົນ, ລາຍຈ່າຍສະເລ່ຍຫຼາຍກວ່າ 194 ໂດລາສະຫະລັດ/ຄົນ/ຄັ້ງ. ໃນນີ້ນັກທ່ອງທ່ຽວຈາກພາກພື້ນອາຊີ-ປາຊີຟິກເພີ່ມຂຶ້ນ 14,5% ເປັນຕົ້ນນັກທ່ອງທ່ຽວຈາກໄທເພີ່ມຂຶ້ນ 12%, ສປ ຈີນ ເພີ່ມຂຶ້ນ 27%, ສ.ເກົາຫຼີເພີ່ມຂຶ້ນ 17%. ພ້ອມດຽວກັນນີ້, ຕະຫຼາດກຸ່ມເປົ້າໝາຍຈາກທະວີບເອີຣົບກໍເພີ່ມຂຶ້ນ 10%, ໃນນີ້ຝຣັ່ງເພີ່ມຂຶ້ນ 13%, ອັງກິດເພີ່ມຂຶ້ນ 19%, ເຢຍລະມັນເພີ່ມຂຶ້ນ 10% ແລະ ລັດເຊຍເພີ່ມຂຶ້ນ 34%. ສຳລັບນັກທ່ອງທ່ຽວທີ່ມາຈາກທະວີບອາເມລິກາເພີ່ມຂຶ້ນ 19,6%, ໃນນີ້ອາເມລິກາເພີ່ມຂຶ້ນ 24%, ການາດາເພີ່ມຂຶ້ນ 20%. ສາເຫດຕົ້ນຕໍທີ່ນັກທ່ອງທ່ຽວເພີ່ມຂຶ້ນໃນປີ 2019 ແມ່ນຍ້ອນມີການໂຄສະນາເຂົ້າເຖິງກຸ່ມຕະຫຼາດທັງພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ ໂດຍສະເພາະແມ່ນການໂຄສະນາປີທ່ອງທ່ຽວລາວໃນປີ 2018, ການໂຄສະນາປີທ່ອງທ່ຽວລາວ-ຈີນປີ 2019 ແລະ ການເຂົ້າຮ່ວມງານວາງສະແດງການທ່ອງທ່ຽວສາກົນຢູ່ຫຼາຍປະເທດຄື: ຝຣັ່ງ, ອັງກິດ, ສປ ຈີນ ແລະ ບັນດາປະເທດສະມາຊິກອາຊຽນ.

ໃນປີ 2020 ສາມາດດຶງດູດນັກທ່ອງທ່ຽວໄດ້ 886.447 ເທື່ອຄົນ ເຊິ່ງເຫັນວ່າຫຼຸດລົງ -86.97% ທຽບໃສ່ປີຜ່ານມາ ແລະ ສ້າງລາຍຮັບໄດ້ພຽງ 213 ກວ່າລ້ານໂດລາສະຫະລັດ ຖ້າທຽບກັບປີຜ່ານມາແມ່ນຫຼຸດລົງ -80.58%. ສາເຫດເຮັດໃຫ້ຕົວເລກຫຼຸດລົງແມ່ນຍ້ອນຜົນກະທົບຂອງການລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ເຮັດນັກທ່ອງທ່ຽວ, ຜູ້ເດີນທາງ ແລະ ສາຍການບິນທົ່ວໂລກຢຸດຕິການໃຫ້ບໍລິການ ແລະ ການເດີນທາງ. ນອກຈາກນັ້ນ ຫົວໜ່ວຍທຸລະກິດທ່ອງທ່ຽວ ແລະ ເຄືອຂ່າຍສະໜອງ

ການທ່ອງທ່ຽວອື່ນໆ ໃນຂອບເຂດທົ່ວປະເທດ ກໍ່ໄດ້ຮັບຜົນກະທົບຢ່າງຫຼີກລ່ຽງບໍ່ໄດ້. ພ້ອມນີ້, ກິດຈະກຳການທ່ອງທ່ຽວ ທັງໝົດກໍໄດ້ໂຈະ ແລະ ເລື່ອນການຈັດຕັ້ງປະຕິບັດ. ມາຮອດປັດຈຸບັນນີ້, ຖືວ່າບໍ່ມີນັກທ່ອງທ່ຽວສາກົນ ແລະ ຄາດວ່າສະຖານະການດັ່ງກ່າວນີ້ຍັງຄົງຈະສືບຕໍ່ໄປອີກໄລຍະໜຶ່ງ.

ຜ່ານການວິເຄາະຂອງຂະແໜງການທ່ອງທ່ຽວສາມາດເຫັນໄດ້ກຸ່ມນັກທ່ອງທ່ຽວຫຼັກທີ່ເຂົ້າມາ ສປປ ລາວ ມີດັ່ງນີ້: 1.)ນັກທ່ອງທ່ຽວສາກົນທີ່ມີຄຸນນະພາບ (ກຸ່ມໃຫຍ່, ກຸ່ມນ້ອຍ, ແບບອິດສະຫຼະ); 2.)ນັກທ່ອງທ່ຽວລ່ອງເຮືອສຳລານຕາມລຳແມ່ນ້ຳຂອງ; 3.)ນັກທ່ອງທ່ຽວໄທມາເປັນກຸ່ມ; 4.)ນັກທ່ອງທ່ຽວ ສ. ເກົາຫຼີມາເປັນກຸ່ມ; 5.)ນັກທ່ອງທ່ຽວຈີນມາເປັນກຸ່ມທາງເຮືອບິນ; 6.)ນັກທ່ອງທ່ຽວຄາລາວານລົດໃຫຍ່ຈາກ ສປ ຈີນ; 7.)ນັກທ່ອງທ່ຽວໃນຮູບແບບກອງປະຊຸມ(MICE); 8.)ນັກທ່ອງທ່ຽວພາຍໃນ.

## 2. ວຽກງານໂຄສະນາການທ່ອງທ່ຽວ

ການຈັດຕັ້ງປະຕິບັດໂຄສະນາຂໍ້ມູນການທ່ອງທ່ຽວຢ່າງກວ້າງຂວາງ ແລະ ເລິກເຊິ່ງດ້ານເນື້ອໃນ ແລະ ຮູບແບບທັງຢູ່ພາຍໃນ ແລະ ຕ່າງປະເທດໂດຍຜ່ານສື່ຕ່າງໆ, ເຂົ້າຮ່ວມງານເທດສະການ, ງານບຸນປະເພນີ, ການເຂົ້າງານວາງສະ ແດງການທ່ອງທ່ຽວສາກົນ ແລະ ພາກພື້ນ.

ການໂຄສະນາຜ່ານສື່ສິ່ງພິມ: ໄດ້ຜະລິດສິ່ງພິມໂຄສະນາການທ່ອງທ່ຽວ, ຜະລິດ ສິ່ງພິມໂຄສະນາການທ່ອງທ່ຽວລາວແຈກຢາຍໃຫ້ແກ່ບັນດາກະຊວງຕ່າງໆ, ງານວາງສະແດງການທ່ອງທ່ຽວສາກົນ, ກອງປະຊຸມ ແລະ ງານອື່ນໆໃນນັ້ນມີປຶ້ມຄູ່ມືການທ່ອງທ່ຽວພາສາອັງກິດ, ຝຣັ່ງ ແລະ ຍີ່ປຸ່ນ; ປຶ້ມທ່ຽວທົ່ວລາວ, ຜະລິດແຜ່ນພັບ,ໃບປິວ, ແຜນທີ່ທ່ອງທ່ຽວທົ່ວປະເທດ, ແຜນທີ່ທ່ອງທ່ຽວ 7 ຕົວເມືອງໃຫຍ່, ແຜນທີ່ທ່ອງທ່ຽວນະຄອນຫຼວງວຽງຈັນ, ແຜນທີ່ທ່ອງທ່ຽວ 3 ຕົວເມືອງ: ນະຄອນຫຼວງວຽງຈັນ , ຫຼວງພະບາງ ແລະ ຈຳປາສັກ, ວີດີໂອໂຄສະນາການທ່ອງທ່ຽວ, ໄດ້ຜະລິດໂປດສະເຕີຮູບພາບແຫຼ່ງທ່ອງທ່ຽວທີ່ໂດດເດັ່ນ, ເຄື່ອງທີ່ລະນຶກຈຳນວນໜຶ່ງເພື່ອໂຄສະນາການທ່ອງທ່ຽວລາວ;

ການໂຄສະນາຜ່ານສື່ອອນລາຍ:ໂຄສະນາການທ່ອງທ່ຽວລາວຜ່ານເວບໄຊ www.tourismlaos.org ພ້ອມທັງເຊື່ອມໂຍງເວັບໄຊດັ່ງກ່າວໄປຍັງເວັບໄຊອາຊຽນ ແລະ ພາກພື້ນ, ໂຄສະນາການທ່ອງທ່ຽວລາວໃຫ້ບັນດາກຸ່ມນັກທ່ອງທ່ຽວຕະຫຼາດພາຍໃນ ແລະ ຕ່າງປະເທດຜ່ານບັນດາສື່ສັງຄົມອອນລາຍພາຍໃຕ້ເຄື່ອງໝາຍສັນຍາລັກ Laos Simply Beautiful;

ການໂຄສະນາຜ່ານສື່ຕ່າງປະເທດ: ໂຄສະນາຜ່ານສື່ມວນຊົນຕ່າງປະເທດເຊັ່ນ: ສື່ອອນລາຍ, ເວັບໄຊ,ວາລະສານຂອງບໍລິສັດ International BIZ News ຂອງປະເທດເຢຍລະມັນ; ໂທລະພາບ CNN

ໂດຍສະເພາະແມ່ນກິດຈະກຳປີທ່ອງທ່ຽວລາວ 2018; ໄດ້ສົມທົບກັບບັນດາສື່ມວນຊົນຂອງຫວຽດ ນາມ, ຈີນ, ຍີ່ປຸ່ນ, ໄທ ແລະ ສ.ເກົາຫຼີ ຢ່າງກວ້າງຂວາງ;

ການເຂົ້າຮ່ວມງານວາງສະແດງ: ໄດ້ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວສາກົນ, ຈັດງານລາຕີ ລາວ (Lao Night) ເພື່ອເຜີຍແຜ່ໂຄສະນາການທ່ອງທ່ຽວລາວທີ່ປະເທດຈີນ, ຫວຽດນາມ, ໄທ, ສິງກະໂປ, ຍີ່ປຸ່ນ, ເຢຍລະມັນ, ຝຣັ່ງ ແລະ ປະເທດອື່ນໆ;

ການຈັດລາຍການຢ້ຽມຢາມແຫຼ່ງທ່ອງທ່ຽວ: ໄດ້ຕິດຕາມ ແລະ ນຳພາສື່ມວນຊົນຕ່າງປະເທດຈຳ ນວນ 7 ປະເທດ ແລະ ສື່ມວນຊົນພາຍໃນ ຖ່າຍທຳສະຖານທີ່ທ່ອງທ່ຽວທີ່ໂດດເດັ່ນ ຫຼາຍແຫ່ງໃນ ຂອບເຂດທົ່ວປະເທດ ເພື່ອໂຄສະນາການທ່ອງທ່ຽວລາວຜ່ານ ສື່ຕ່າງໆຈຳນວນ 8 ຄັ້ງ; ນອກນັ້ນຍັງໄດ້ ຈັດການຢ້ຽມຢາມແຫຼ່ງທ່ອງທ່ຽວໃຫ້ແກ່ບັນດາສື່ມວນຊົນ ແລະ ບໍລິສັດທ່ອງທ່ຽວຂອງປະເທດ ສະມາຊິກອາຊຽນ, ອາຊຽນ+3 ແລະ ຈັດກິດຈະກຳອື່ນໆ.

ການພັດທະນາໂຄງລ່າງພື້ນຖານດ້ານຂໍ້ມູນຂ່າວສານການທ່ອງທ່ຽວ: ປັບປຸງຫ້ອງຂໍ້ມູນຂ່າວສານ ການທ່ອງທ່ຽວຢູ່ສູນກາງ, ບັນດາແຂວງ, ເມືອງ ແລະ ດ່ານສາກົນຈຳນວນ 27 ແຫ່ງເພື່ອໃຫ້ການ ບໍລິການສະໜອງຂໍ້ມູນຂ່າວສານການທ່ອງທ່ຽວແກ່ນັກທ່ອງທ່ຽວ ແລະ ຫຼາຍແຫ່ງກໍ່ໄດ້ເປີດໃຫ້ ບໍລິການທັງວັນພັກລັດຖະການ.

ກິດຈະກຳປີທ່ອງທ່ຽວລາວ 2018 ແລະ ປີທ່ອງທ່ຽວລາວ-ຈີນ 2019: ໃນປີ 2018 ປີທ່ອງທ່ຽວ ລາວກໍມີຫຼາຍກິດຈະກຳຕ່າງໆຢູ່ໃນພາຍໃນ ແລະ ຕ່າງປະເທດໂດຍສະເພາະແມ່ນການໂຄສະນາ ສະປອດວີດີໂອການທ່ອງທ່ຽວລາວຜ່ານທາງໂທລະພາບ CNN, ເວັບໄຊຂອງ CNN, ວາລະສານ BIZ ຂອງປະເທດເຢຍລະມັນ, ສຳລັບຢູ່ພາຍໃນປະເທດແມ່ນໄດ້ໂຄສະນາການທ່ອງທ່ຽວລາວຜ່ານ ທາງໂທລະພາບ, ວິທະຍຸ, ປ້າຍໂຄສະນາຕາມສະໜາມບິນສາກົນ, ດ່ານສາກົນໃນຂອບເຂດທົ່ວປະ ເທດ ແລະ ຈຸດເຊື່ອມຕໍ່ລະຫວ່າງແຂວງຕໍ່ແຂວງ; ຜ່ານໜັງສືພິມ, ວາລະສານ, ບົດເພັງ ແລະ ອື່ນໆ ນອກນັ້ນ, ລັດຖະບານຂອງສອງປະເທດລາວ-ຈີນກໍໄດ້ຕົກລົງເປັນເອກະພາບກັນຈັດປີທ່ອງທ່ຽວລາວ-ຈີນ 2019 ແນ່ໃສ່ສົ່ງເສີມການໄປມາຫາສູ່ກັນລະຫວ່າງປະຊາຊົນຂອງສອງປະເທດ ແລະ ພ້ອມດຽວ ກັນກໍເປັນການໂຄສະນາເພື່ອດຶງດູດໃຫ້ນັກທ່ອງທ່ຽວຈາກ ສປ ຈີນ ແລະ ຈາກຕ່າງປະເທດຜູ້ທີ່ສົນໃຈ ເຂົ້າມາທ່ຽວ ສປປ ລາວໃຫ້ນັບມື້ນັບຫຼາຍຂຶ້ນ.

ສຳເລັດການຮ່າງແຜນຍຸດທະສາດການຕະຫຼາດການທ່ອງທ່ຽວລາວສຳລັບປີ 2020-2025 ເຊິ່ງ ສະໜັບສະໜູນໂດຍໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ (TIIG/ADB), ອົງການສະວິດຄອນແທັກແລະ ໂຄງການສົ່ງເສີມກິດຈະກຳການທ່ອງທ່ຽວ (NZAid).

ການຮ່ວມມືລະຫວ່າງພາກລັດກັບພາກເອກະຊົນ: ພາກສ່ວນທຸລະກິດໃນຂະແໜງການທ່ອງທ່ຽວກໍໄດ້ເອົາໃຈໃສ່ໂຄສະນາກ່ຽວກັບຜະລິດຕະພັນການທ່ອງທ່ຽວ ແລະ ການບໍລິການທ່ອງທ່ຽວຂອງຕົນຢ່າງກວ້າງຂວາງຜ່ານສື່ຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ການເຂົ້າຮ່ວມງານເທດສະການ ແລະ ງານວາງສະແດງທັງພາຍໃນ ແລະ ຕ່າງປະເທດເຊິ່ງລ້ວນແລ້ວແຕ່ເປັນການປະກອບສ່ວນໂຄສະນາການທ່ອງທ່ຽວຂອງ ສປປ ລາວ.

## 3. ວຽກງານຄຸ້ມຄອງການທ່ອງທ່ຽວ

- ການສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳ

- ສຳເລັດການສ້າງນິຕິກຳໃຕ້ກົດໝາຍ ແລະ ລົງເຜີຍແຜ່ຢູ່ບັນດາແຂວງໃນຂອບເຂດທົ່ວປະເທດເຊັ່ນ: ດຳລັດ ວ່າດ້ວຍກອງທຶນການທ່ອງທ່ຽວ ສະບັບເລກທີ 119/ລບ, ລົງວັນທີ 10/04/2017, ດຳລັດ ວ່າດ້ວຍການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 02/10/2017, ຂໍ້ຕົກລົງວ່າດ້ວຍການທ່ອງທ່ຽວ ປອດຄວັນຢາສູບ ສະບັບເລກທີ 1154/ຖວທ, ລົງວັນທີ 6/11/2019;
- ສຳເລັດການສ້າງລະບົບຖານຂໍ້ມູນແບບອອນລາຍ ທີ່ສັງລວມເອົາສະຖິຕິການລົງທຶນໃນຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນ: ສະຖິຕິໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ, ພັດຕະຄານ, ຮ້ານກິນດື່ມ, ຮ້ານບັນເທີງ, ບໍລິສັດທ່ອງທ່ຽວ, ພະນັກງານນຳທ່ຽວ ແລະ ສະຖິຕິແຫຼ່ງທ່ອງທ່ຽວ. ພ້ອມທັງ ຈັດຝຶກອົບຮົມການນຳໃຊ້ລະບົບຖານຂໍ້ມູນໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວຢູ່ພະແນກ ຖວທ ແຂວງ/ນະຄອນ ຫຼວງ ໃນຂອບເຂດທົ່ວປະເທດ;
- ສຳເລັດການສ້າງ Website ຂອງກົມຄຸ້ມຄອງການທ່ອງທ່ຽວ ທີ່ໄດ້ບັນຈຸເອົາບັນດາເອກະສານຕ່າງໆທີ່ກ່ຽວຂ້ອງກັບວຽກງານການຄຸ້ມຄອງການທ່ອງທ່ຽວເປັນຕົ້ນແມ່ນ: ນິຕິກຳຕ່າງໆ, ບັນດາມາດຕະຖານການທ່ອງທ່ຽວທັງຂອງ ສປປ ລາວ, ອາຊຽນ, ປຶ້ມຄູ່ມືຕ່າງໆ ແລະ ຂໍ້ມູນອື່ນໆ ທີ່ຕິດພັນກັບວຽກງານຄຸ້ມຄອງການທ່ອງທ່ຽວ;
- ສຳເລັດການຈັດຝຶກອົບຮົມກ່ຽວກັບວຽກງານການອອກອະນຸຍາດໃຫ້ແກ່ບັນດາຫົວໜ່ວຍທຸລະກິດໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ຮ້ານບັນເທີງ ໃຫ້ແກ່ໃຫ້ແກ່ພະນັກງານ ພະແນກ ຖວທ 18 ແຂວງທົ່ວປະເທດ;
- ໄດ້ປັບປຸງມາດຕະຖານສະຖານທີ່ພັກແຮມເຊັ່ນ: ໂຮງແຮມ,ຣີສອດ ແລະ ເຮືອນພັກເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງການຂະຫຍາຍຕົວທາງດ້ານທຸລະກິດທີ່ພັກແຮມທີ່ນັບມື້ນັບເພີ່ມຂຶ້ນ. ພ້ອມນີ້, ກໍໄດ້ມີການສ້າງປຶ້ມຄູ່ມືມາດຕະຖານສະຖານທີ່ພັກແຮມຢູ່ ສປປ ລາວ;

- ສຳເລັດການຈັດກອງປະຊຸມເຜີຍແຜ່ປຶ້ມມາດຕະຖານການບໍລິການຮ້ານອາຫານສະອາດ ແລະ ປອດໄພ, ສ້າງແບບ ຟອມຈັດລະດັບມາດຕະຖານຮ້ານອາຫານສະອາດ ແລະ ປອດໄພ;

▪ ການຄຸ້ມຄອງຫົວໜ່ວຍທຸລະກິດບໍລິການການທ່ອງທ່ຽວ

- ສຳເລັດການເກັບກຳຂໍ້ມູນສະຖິຕິສະຖານທີ່ພັກແຮມໃນຂອບເຂດທົ່ວປະເທດເຊິ່ງມາຮອດປັດຈຸບັນໃນຂອບເຂດທົ່ວປະເທດມີສະຖານທີ່ພັກແຮມຈຳນວນທັງໝົດ 3.095 ແຫ່ງ, ມີ 53.819 ຫ້ອງນອນ, ໂຮງແຮມມີຈຳນວນທັງໝົດ 665 ແຫ່ງ , ມີ 23.187 ຫ້ອງນອນ, ເຮືອນພັກ ແລະ ຣີສອດມີຈຳນວນທັງໝົດ 2.430 ແຫ່ງ, ມີ 30.632 ຫ້ອງນອນ; ການຈັດຂັ້ນໂຮງແຮມ ແລະ ເຮືອນພັກໄດ້ທັງໝົດ 130 ແຫ່ງ, ໃນນັ້ນມີໂຮງແຮມຈຳນວນ 73 ແຫ່ງ, ເຮືອນພັກ 57 ແຫ່ງ, ໂຮງແຮມລະດັບ 5 ດາວມີ 7 ແຫ່ງ, ໂຮງແຮມ 4 ດາວມີ 11 ແຫ່ງ, ໂຮງແຮມ 3 ດາວມີ 24 ແຫ່ງ, ໂຮງແຮມ 2 ດາວມີ 17 ແຫ່ງ, ໂຮງແຮມ 1 ດາວມີ 14 ແຫ່ງ, ສ່ວນເຮືອນພັກ 3 ດອກຈຳປາມີ 11 ແຫ່ງ, 2 ດອກຈຳປາມີ 26 ແຫ່ງ ແລະ 1 ດອກຈຳປາມີ 20 ແຫ່ງ;
- ມາຮອດປັດຈຸບັນ ປີ 2019 ໃນທົ່ວປະເທດມີ: ພັດຕາຄານທັງໝົດ 6 ແຫ່ງ, ຮ້ານອາຫານຈຳນວນທັງໝົດ 1.664 ແຫ່ງ, ຮ້ານບັນເທີງຈຳນວນ 164 ແຫ່ງ, ຮ້ານກິນດື່ມຈຳນວນທັງໝົດ 1.217 ແຫ່ງ ແລະ ຮ້ານຄາຣາໂອເກະຈຳນວນທັງໝົດ 195 ແຫ່ງ; ສຳລັບຮ້ານອາຫານ ແລະ ຮ້ານບັນເທີງ ຖ້າສົມທຽບກັບແຜນການ 5 ປີ (2011-2015) ຜ່ານມາ ແມ່ນເພີ່ມຂຶ້ນຄືຮ້ານອາຫານ ເພີ່ມຂຶ້ນ 274 ແຫ່ງ ແລະ ຮ້ານບັນເທີງເພີ່ມຂຶ້ນ 55 ແຫ່ງ.
- ມາຮອດປີ 2019 ໃນທົ່ວປະເທດ ມີບໍລິສັດທ່ອງທ່ຽວ 433 ບໍລິສັດ, ໃນນັ້ນມີບໍລິສັດແມ່ 391 ບໍລິສັດ, 49 ສາຂາ; ບໍລິສັດທ່ອງທ່ຽວ; ຈຳນວນພະນັກງານນຳທ່ຽວທົ່ວປະເທດມີ 1.275 ທ່ານ, ພາສາທີ່ໄດ້ອອກບັດພະນັກງານນຳທ່ຽວມີທັງໝົດ 12 ພາສາຄື: ອັງກິດ, ແອດສປາຍໂຍນ, ຝຣັ່ງ, ເຢຍລະມັນ, ອີຕາລີ, ຍີ່ປຸ່ນ, ຈີນ, ຫວຽດນາມ, ເກົາຫຼີ, ໄທ, ບາຮາຊາອິນໂດເນເຊຍ ແລະ ລັດເຊຍ. ຖ້າສົມທຽບກັບແຜນການ 5 ປີ (2011-2015) ຜ່ານມາ, ຈຳນວນບໍລິສັດທ່ອງທ່ຽວ ເພີ່ມຂຶ້ນ 152 ບໍລິສັດ, ສາຂາ ເພີ່ມຂຶ້ນ 61 ສາຂາ ແລະ ພະນັກງານນຳທ່ຽວ ເພີ່ມຂຶ້ນ 235 ທ່ານ.

▪ ການຄຸ້ມຄອງການລົງທຶນ ໃນຂະແໜງການທ່ອງທ່ຽວ

- ສຳເລັດການອອກອະນຸຍາດດຳເນີນທຸລະກິດໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດທັງໝົດຢູ່ຂັ້ນທ້ອງຖິ່ນມີໂຮງແຮມ 670 ແຫ່ງ, ເຮືອນພັກ 2.432 ແຫ່ງ, ຮ້ານອາຫານ 2.646 ແຫ່ງ, ຮ້ານບັນເທີງ 305 ແຫ່ງ ແລະ ບໍລິສັດທ່ອງທ່ຽວ 503 ແຫ່ງ; ເຊິ່ງບັນດາທຸລະກິດທີ່ກ່າວມາຂ້າງເທິງແມ່ນມີຈຳນວນເພີ່ມຂຶ້ນຖ້າສົມທຽບກັບແຜນການ 5 ປີ (2011-2015) ຜ່ານມາຄື: ໂຮງແຮມເພີ່ມຂຶ້ນ 155 ແຫ່ງ, ເຮືອນພັກ 521 ແຫ່ງ, ຮ້ານອາຫານ 274 ແຫ່ງ, ຮ້ານບັນເທີງ 55 ແຫ່ງ ແລະ ບໍລິສັດທ່ອງທ່ຽວ 193 ບໍລິສັດ.

- ການແກ້ໄຂປະກົດການຫຍໍ້ທໍ້

- ໄດ້ລົງເກັບກຳຂໍ້ມູນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຂົງເຂດວຽກງານການທ່ອງທ່ຽວໃນຂອບເຂດທົ່ວປະເທດເປັນຕົ້ນແມ່ນ: ການເປີດກາຍເວລາທີ່ກຳນົດໄວ້, ບັນຫາສຽງດັງເນືອງນັນ, ການມົ້ວສຸມຢາເສບຕິດ, ອາລະວາດຕີກັນ, ການເກີດອຸປະຕິເຫດຂອງລົດບໍລິການນຳທ່ຽວ, ການເສຍຊີວິດຂອງນັກທ່ອງທ່ຽວຢູ່ຕາມສະຖານທີ່ພັກແຮມ ແລະ ແຫຼ່ງທ່ອງທ່ຽວຕ່າງໆ; ພ້ອມທັງໄດ້ກວດກາບັນຫາທາງສຽງຂອງປະຊາຊົນຂອງສາຍດ່ວນລັດຖະບານ ເພື່ອແກ້ໄຂປະກົດການຫຍໍ້ທໍ້ບັນດາຮ້ານອາຫານ ແລະ ການບັນເທີງ.
- ໄດ້ສັ່ງປິດກິດຈະການຮ້ານອາຫານເພື່ອປັບປຸງໃຫ້ຖືກຕ້ອງຕາມລະບຽບກົດໝາຍຈຳນວນ 8 ຮ້ານ, ສັ່ງໂຈະກິດຈະ ການໂຮງແຮມຈຳນວນ 1 ແຫ່ງ; ບັນດາທຸລະກິດເຫຼົ່ານີ້ແມ່ນຢູ່ສະເພາະພາຍໃນນະຄອນຫຼວງວຽງຈັນ;
- ໄດ້ແກ້ໄຂລົດຂົນສົ່ງນັກທ່ອງທ່ຽວຕົກເຫວເຂດເມືອງນານ, ແຂວງຫຼວງພະບາງໂດຍການໃຫ້ບໍລິສັດທ່ອງທ່ຽວລາວຕົງນານ ແລະ ບໍລິສັດທ່ອງທ່ຽວນິວມີເລນຽມໂຈະການເຄື່ອນໄຫວເປັນໄລຍະ 6 ເດືອນເພື່ອແກ້ໄຂຄະດີ ແລະ ທົດແທນຄ່າເສຍຫາຍທີ່ເກີດຂຶ້ນໃຫ້ຜູ້ທີ່ຖືກເສຍຫາຍຕາມລະບຽບກົດໝາຍ;

- ການຄຸ້ມຄອງສະມາຄົມ ແລະ ກຸ່ມບໍລິການການທ່ອງທ່ຽວ

- ສຳເລັດການຈັດຕັ້ງ ກຸ່ມພະນັກງານນຳທ່ຽວຢູ່ບັນດາແຂວງທົ່ວປະເທດ; ສຳເລັດການສ້າງຕັ້ງກຸ່ມພະນັກງານນຳທ່ຽວໄດ້ 7 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ, ແຂວງຊຽງຂວາງ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ;

- ການຄຸ້ມຄອງມາດຕະຖານ ແລະ ລາງວັນການທ່ອງທ່ຽວ

- ສຳເລັດການປະເມີນຄັດເລືອກບັນດາຫົວໜ່ວຍທຸລະກິດດີເດັ່ນ ທີ່ເປັນຕົວແທນຂອງ ສປປ ລາວ ແລະ ໄດ້ຮັບລາງວັນມາດຕະຖານການທ່ອງທ່ຽວອາຊຽນຄື: ໄດ້ຮັບລາງວັນມາດຕະຖານໂຮງແຮມຂຽວອາຊຽນ 20 ແຫ່ງ, ລາງວັນມາດຕະຖານເຮືອນພັກແຮມປະຊາຊົນ (ໂຮມສະເຕ) ອາຊຽນ 7 ແຫ່ງ, ລາງວັນມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ 5 ແຫ່ງ, ລາງວັນມາດຕະຖານເມືອງທ່ອງທ່ຽວ ສະອາດອາຊຽນ 2 ລາງວັນ, ລາງວັນມາດຕະຖານສະຖານທີ່ຈັດງານອາຊຽນ 10 ແຫ່ງ, ລາງວັນມາດຕະຖານການບໍລິການສະປາອາຊຽນ 5 ແຫ່ງ, ລາງວັນມາດຕະຖານຫ້ອງນ້ຳສະອາດສາທາລະນະອາຊຽນ 4 ແຫ່ງ ແລະ ລາງວັນມາດຕະຖານການທ່ອງທ່ຽວແບບຍືນຍົງອາຊຽນ 4 ລາງວັນ; ; ທຽບໃສ່ 5 ປີ ທີ່ຜ່ານມາ ແມ່ນເທົ່າເກົ່າ ບໍ່ເພີ່ມຂຶ້ນ ແລະ ບໍ່ຫລຸດລົງ,

ເນື່ອງຈາກວ່າ ລາງວັນມາດຕະຖານການທ່ອງທ່ຽວອາຊຽນ ແມ່ນກຳນົດໃຫ້ມີການໃຫ້ລາງວັນ ເທົ່າເກົ່າໃນແຕ່ລະປີ.

- ສຳເລັດການປະເມີນຄັດເລືອກບັນດາຫົວໜ່ວຍທຸລະກິດດີເດັ່ນ ແລະ ມອບລາງວັນການທ່ອງທ່ຽວດີເດັ່ນ ແລະ ຍືນຍົງຂອງ ສປປ ລາວ ຈຳນວນ 127 ລາງວັນ ເນື່ອງໃນໂອກາດການສະຫຼຸບປີທ່ອງທ່ຽວລາວ 2018 ແລະ ເປັນການຈັດມອບ-ຮັບລາງວັນຄັ້ງທຳອິດ;
- ສຳເລັດການຜະລິດໃບຢັ້ງຢືນ ແລະ ເຄື່ອງໝາຍປ້າຍດາວ (3ດາວ) ໃຫ້ແກ່ໂຮງແຮມແສງອາລຸນຢູ່ແຂວງຈຳປາສັກ;ຜະລິດໃບຢັ້ງຢືນ,ເຄື່ອງໝາຍປ້າຍດາວ, ດອກຈຳປາໃຫ້ແກ່ໂຮງແຮມ, ເຮືອນພັກຢູ່ແຂວງຜົ້ງສາລີຈຳນວນ 3 ແຫ່ງ;
- ສຳເລັດການແປ ແລະ ຈັດພິມເອກະສານມາດຕະຖານໂຮງແຮມຂຽວອາຊຽນ ແລະ ການບໍລິການສະປາອາຊຽນ ສະບັບພາສາລາວຈຳນວນ 2.000 ເຫຼັ້ມ ພ້ອມທັງໄດ້ລົງເຜີຍແຜ່ມາດຕະຖານດັ່ງກ່າວຢູ່ບັນດາແຂວງເປົ້າໝາຍ;
- ສຳເລັດການສ້າງ ແລະ ຈັດພິມປື້ມຄູ່ມືຝຶກອົບຮົມ ການປະເມີນຜົນມາດຕະຖານໂຮງແຮມຂຽວອາຊຽນ ແລະ ການບໍລິການສະປາອາຊຽນ ລະດັບຊາດ ແລະ ລະດັບແຂວງຈຳນວນ 400 ເຫຼັ້ມ ແລະຝຶກອົບຮົມໃຫ້ແກ່ຄູຝຶກລະດັບຊາດ ແລະ ລະດັບແຂວງ ຢູ່ບັນດາແຂວງເປົ້າໝາຍ;
- ສຳເລັດການສ້າງ ແລະ ຈັດພິມປຶ້ມມາດຕະຖານສະຖານທີ່ພັກແຮມຂອງ ສປປ ລາວ ຈຳນວນ 1.000 ເຫຼັ້ມ, ປຶ້ມຄູ່ມືແນະນຳການບໍລິການລົດຂົນສົ່ງນັກທ່ອງທ່ຽວ ຈຳນວນ 1.000 ເຫຼັ້ມ, ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫຼ່ງທ່ອງທ່ຽວ ແລະ ປ້າຍນຳສະເໜີຂໍ້ມູນແຫຼ່ງທ່ອງທ່ຽວໃນ ສປປລາວ ຈຳນວນ 1.000 ເຫຼັ້ມ ແລະ ປຶ້ມຄູ່ມືການນຳໃຊ້ຖານຂໍ້ມູນສະຖິຕິການລົງທຶນໃນຂະແໜງການທ່ອງທ່ຽວ ຈຳນວນ 500 ເຫຼັ້ມ. ພ້ອມທັງສຳເລັດການຈັດກອງປະຊຸມເຜີຍແຜ່ປຶ້ມຄູ່ມືດັ່ງກ່າວຢູ່ບັນດາແຂວງເປົ້າໝາຍ. ນອກຈາກນີ້, ຍັງໄດ້ສ້າງ ແລະ ຜະລິດແຜ່ນວີດີໂອ (VDO) ມາດຕະຖານສະຖານທີ່ພັກແຮມ ຂອງ ສປປ ລາວ ຈຳນວນ 200 ແຜ່ນເພື່ອເປັນຊ່ອງທາງສື່ສານໜຶ່ງທີ່ຊ່ວຍໃຫ້ພາກທຸລະກິດການພັກແຮມຢູ່ ສປປ ລາວ ໄດ້ມີຄວາມຮັບຮູ້ ແລະ ມີຄວາມເຂົ້າໃຈຕໍ່ມາດຕະຖານດັ່ງກ່າວ ສະດວກວ່ອງໄວ ແລະ ເຂົ້າໃຈງ່າຍຂຶ້ນ.

▪ ການຮ່ວມມື ແລະ ການປະສານງານ

- ວຽກງານການຄຸ້ມຄອງສະຖານທີ່ທ່ອງທ່ຽວ ແລະ ບໍລິຫານງານ, ໄດ້ສົມທົບກັບບັນດາແຂວງ ແລະພາກທຸລະກິດລົງເກັບກຳຂໍ້ມູນຢູ່ແຫຼ່ງທ່ອງທ່ຽວ, ຄົ້ນຄວ້າບັນດາຂໍ້ສະເໜີຂອງພາກທຸລະກິດ ເພື່ອນາສະເໜີຕໍ່ລັດຖະບານໃນການແກ້ໄຂບັນຫາ, ຕິດຕາມ, ກວດກາ ແລະ ກຳນົດນະໂຍບາຍໃຫ້ສອດຄ່ອງກັບການຄຸ້ມຄອງບັນດາສະຖານທີ່ທ່ອງທ່ຽວຢູ່ທ້ອງຖິ່ນ;

- ຮ່ວມມືກັບບັນດາແຂວງໃນການປັບປຸງຄຸນນະພາບການບໍລິການຂອງພະນັກງານນໍາທ່ຽວ ແລະ ຜ່ານຮ່າງກົດລະບຽບຂອງກຸ່ມພະນັກງານນໍາທ່ຽວຢູ່ແຂວງບໍ່ແກ້ວ ແລະ ຫຼວງນໍ້າທາ; ຈັດຝຶກອົບຮົມກ່ຽວກັບຖານຂໍ້ມູນສະຖິຕິບັນດາຫົວ ໜ່ວຍທຸລະກິດການທ່ອງທ່ຽວເຂົ້າໃນລະບົບຢູ່ແຂວງຫຼວງພະບາງ ແລະ ແຂວງສະຫວັນນະເຂດ; ຈັດຝຶກອົບຮົມການຮັກສາຄຸນນະພາບການບໍລິການໃຫ້ແກ່ຜູ້ບໍລິຫານ, ຜູ້ຈັດການຂອງບໍລິສັດທ່ອງທ່ຽວຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຈໍາປາສັກ;
- ບັນດາຫົວໜ່ວຍທຸລະກິດພັກແຮມ ແລະ ທຸລະກິດທ່ອງທ່ຽວ, ທຸລະກິດຮ້ານອາຫານ ແລະ ການບັນເທີງກໍໄດ້ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດານິຕິກໍາຕ່າງໆ ແລະ ໄດ້ເປັນເຈົ້າການຜັນຂະຫຍາຍມາເປັນລະບຽບການສະເພາະຂອງຫົວໜ່ວຍທຸລະກິດຕົນເອງ;
- ຮ່ວມເຮັດວຽກກັບຄະນະກໍາມະການເຕັກນິກແຫ່ງຊາດ, ໜ່ວຍງານດ້ານການບໍລິການໂຮງແຮມ, ຮ້ານອາຫານ ແລະ ແຫຼ່ງທ່ອງທ່ຽວ, ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
- ໄດ້ປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອ ແກ້ໄຂບັນຫາ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ຕິດພັນກັບວຽກງານຄຸ້ມຄອງການທ່ອງທ່ຽວ.

**4. ວຽກງານພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ**

ໄດ້ເອົາໃຈໃສ່ປັບປຸງຫຼັກສູດຝຶກອົບຮົມໄລຍະສັ້ນ, ສ້າງຄູຝຶກ ແລະ ຈັດຕັ້ງຝຶກອົບຮົມໄລຍະສັ້ນກ່ຽວກັບ ການບໍລິການຫົວຂໍ້ຕ່າງໆໃຫ້ພາກລັດ ແລະ ພາກທຸລະກິດໃນຂະແໜງການທ່ອງທ່ຽວຄື:

- ສ້າງ ແລະ ປັບປຸງຫຼັກສູດໃໝ່ການຝຶກອົບຮົມໄລຍະສັ້ນຈໍານວນ 10 ຫຼັກສູດຄື: ການຕະຫຼາດທ່ອງທ່ຽວສໍາລັບທຸລະກິດຂະໜາດນ້ອຍ, ການບໍລິການອາຫານສະອາດ ແລະ ປອດໄພ, ການຍົກລະດັບຄຸນນະພາບການບໍລິການ ແລະການເອົາໃຈໃສ່ຕໍ່ລູກຄ້າສໍາລັບຜູ້ບໍລິຫານ ແລະ ສໍາລັບພະນັກງານບໍລິການ, ຫຼັກສູດການສົ່ງເສີມທັກສະການຂາຍ, ການກຽມຄວາມພ້ອມສໍາລັບບໍລິການຕະຫຼາດທ່ອງທ່ຽວຈີນ, ພະນັກງານນໍາທ່ຽວລະດັບຊາດ, ລະດັບແຂວງ, ລະດັບພື້ນທີ່ສະເພາະ ແລະ ຫຼັກສູດສໍາມະນາຍົກລະດັບພະນັກງານນໍາທ່ຽວເພື່ອຕໍ່ບັດໃໝ່;
- ສ້າງຄູຝຶກ ແລະຄູປະເມີນຜົນຕົ້ນແບບອາຊຽນຈໍານວນ 23 ຄົນ,ຄູຝຶກ ແລະຄູປະເມີນຜົນອາຊຽນລະດັບຊາດຈໍານວນ 116 ຄົນ, ສ້າງຄູຝຶກວິຊາການບໍລິການສ່ວນໜ້າ, ການບໍລິການອາຫານ ແລະ ເຄື່ອງດື່ມ ແລະການບໍລິການແມ່ເຮືອນຂັ້ນສູນກາງຈໍານວນ 12 ຄົນ, ຂັ້ນແຂວງຈໍານວນ 58 ຄົນ, ຄູຝຶກພະນັກງານນໍາທ່ຽວພະຈົນໄພໃນຖໍ້າ 18 ຄົນ;
- ຈັດຕັ້ງຝຶກອົບຮົມໄລຍະສັ້ນໃນຫົວຂໍ້ຕ່າງໆ ສໍາລັບທຸລະກິດບໍລິການທ່ອງທ່ຽວ, ໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານໃນຂອບເຂດທົ່ວປະເທດຈໍານວນ 42 ຄັ້ງມີຜູ້ເຂົ້າຮ່ວມການຝຶກອົບຮົມທັງໝົດ

1.197 ຄົນ. ຈັດຕັ້ງຝຶກອົບຮົມພະນັກງານນຳທ່ຽວລະດັບຊາດ, ພະນັກງານງານນຳທ່ຽວມໍຣະດົກທາງວັດທະນະທຳ, ພະນັກງານນຳທ່ຽວລະດັບແຂວງ ແລະ ລະດັບພື້ນທີ່ສະເພາະມາຮອດປະຈຸບັນໄດ້ຫຼາຍກວ່າ 2.000 ຄົນ;

- ວຽກງານຈັດຕັ້ງຜັນຂະຫຍາຍສັນຍາຮັບຮູ້ເຊິ່ງກັນ ແລະ ກັນກ່ຽວກັບວິຊາຊີບທ່ອງທ່ຽວອາຊຽນ, ຈັດຕັ້ງເຜີຍແຜ່ສັນຍາດັ່ງກ່າວໃນຂອບເຂດທົ່ວປະເທດມີຜູ້ເຂົ້າຮ່ວມ 3.000 ກວ່າຄົນ. ຈັດແປ ແລະ ພິມປຶ້ມຄູ່ມືຝຶກອົບຮົມວິຊາຊີບທ່ອງທ່ຽວອາຊຽນເປັນພາສາລາວຈຳນວນ 120 ມາດຕະຖານ;
- ວຽກງານຮ່ວມມືສາກົນດ້ານວຽກງານພັດທະນາບຸກຄະລາກອນທ່ອງທ່ຽວໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ສອງຝ່າຍ ຈຳນວນ 3 ສະບັບຄື: ຮ່ວມກັບວິທະຍາໄລວິຊາຊີບເຕັກໂນໂລຊີຂໍ້ມູນຂ່າວສານຈ່ຽງຊູ, ສປ ຈີນ 1 ສະບັບ, ມະຫາ ວິທະຍາໄລທ່ອງທ່ຽວຢຸນນານ, ສປ ຈີນ 1 ສະບັບ ແລະ ມະຫາວິທະຍາໄລຂອນແກ່ນ, ປະເທດໄທ 1 ສະບັບ;
- ສຳເລັດການສ້າງເວັບໄຊຂອງພະແນກຝຶກອົບຮົມວິຊາການທ່ອງທ່ຽວwww.imct-training.gov.la ເພື່ອຮັກສາ ແລະ ເຜີຍແຜ່ຄູ່ມືການຮຽນ-ການສອນວິຊາຊີບທ່ອງທ່ຽວອາຊຽນ, ຝຶກອົບຮົມພະນັກງານນຳທ່ຽວ ແລະ ຂໍ້ມູນຂ່າວສານການເຄື່ອນໄຫວຂອງວຽກງານຝຶກອົບຮົມການທ່ອງທ່ຽວ;
- ວຽກງານການສ້າງເຄືອຂ່າຍປະສານງານລະຫວ່າງພາກລັດ, ພາກທຸລະກິດ ແລະ ສະຖາບັນການສຶກສາ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງເຊັ່ນ: ກອບການຮ່ວມມືອາຊຽນ, ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມໃນການດຳເນີນການປຽບທຽບຂອບວຸດທິວິຊາຊີບ ແລະ ຮັບຮອງຫຼັກສູດວິຊາຊີບດ້ານການທ່ອງທ່ຽວ ແລະ ໂຮງແຮມແຫ່ງຊາດ, ຮ່ວມມືກັບໂຄງການທັກສະດ້ານການທ່ອງທ່ຽວລາວ/029 ຈັດຕັ້ງຝຶກອົບຮົມເຄື່ອນທີ່ໃນຂອບເຂດທົ່ວປະເທດ, ໂຄງ ການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໃນການຈັດຝຶກອົບຮົມສ້າງຫຼັກສູດ, ຝຶກຄູຝຶກໃນຂະແໜງການທ່ອງທ່ຽວ, ສົມທົບກັບມະຫາວິທະຍາໄລແຫ່ງຊາດໃນການປັບປຸງຫຼັກສູດຕຳລາການຮຽນ-ການສອນ ແລະການສ້າງຄວາມເຂັ້ມແຂງໃຫ້ແກ່ຄູຝຶກ ແລະ ຮ່ວມມືກັບຄູ່ຮ່ວມພັດທະນາອື່ນໆຈັດຕັ້ງການຝຶກອົບຮົມ, ແລກປ່ຽນທັດສະນະສຶກສາ.

## 5. ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ

ເປົ້າໝາຍການພັດທະນາການແບບຍືນຍົງ ແລະ ການເຕີບໂຕສີຂຽວ ທີ່ຕິດພັນກັບການທ່ອງທ່ຽວມີສອງເປົ້າ ໝາຍຫຼັກຄື: ການທ່ອງທ່ຽວຂອງ ສປປ ລາວ ຕ້ອງມີຄຸນນະພາບ, ໄດ້ມາດຕະຖານໄປຕາມທິດສີຂຽວຍືນຍົງ ແລະສາມາດແຂ່ງຂັນກັບພາກພື້ນ; ເຊິ່ງໃນໄລຍະທີ່ຜ່ານມາກໍໄດ້ຈັດກິດຈະກຳເພື່ອກະຕຸ້ນໃຫ້ແກ່ວຽກງານດັ່ງກ່າວເຊັ່ນ: ການຈັດງານງານສະແດງແນວທາງການພັດທະນາການທ່ອງ

ທ່ຽວແບບຍືນຍົງຄັ້ງທີ 1 (Sustainable Tourism Solution Expo) ຢູ່ທີ່ແຂວງຫຼວງພະບາງໃນປີ 2018 ແລະ ຄັ້ງທີ 2 ຢູ່ທີ່ນະຄອນຫຼວງວຽງຈັນໃນປີ 2019.

ນອກນັ້ນ, ຍັງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວອາຊຽນເພື່ອແນ່ໃສ່ການເຕີບໂຕສີຂຽວຂອງຂະແໜງການທ່ອງທ່ຽວ ມາຮອດປັດຈຸບັນສຳເລັດການສ້າງແລ້ວຈຳນວນ 9 ມາດຕະຖານ ດັ່ງນີ້: ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ; ມາດຕະຖານໂຮງແຮມຂຽວອາຊຽນ;ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ;ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ;ມາດຕະຖານນວດແຜນບູຮານອາຊຽນ; ມາດຕະຖານ ຫ້ອງນ້ຳສາທາລະນະສະອາດອາຊຽນ; ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວຂອງ ສ ປປລາວ ມາດຕະຖານຫ້ອງປະຊຸມ ສປປ ລາວ ແລະ ມາດຕະຖານບໍລິສັດທ່ອງທ່ຽວ (ນຳໃຊ້ເງື່ອນໄຂຂອງ GSTC).

## 6. ການຈັດຕັ້ງປະຕິບັດແຜນການລົງທຶນ ໃນວຽກງານທ່ອງທ່ຽວ.

6.1 ການລົງທຶນຈາກງົບປະມານຂອງລັດ

ໃນໄລຍະ 5 ປີ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດວຽກງານທ່ອງທ່ຽວມີຈຳນວນ 17 ໂຄງການມູນຄ່າທັງໝົດ 189.801 ລ້ານກີບ, ຊຶ່ງໃນນັ້ນເປັນທຶນການຊ່ວຍເຫຼືອຈາກຕ່າງປະເທດຈຳນວນ 179.657 ລ້ານກີບ; ສຳລັບໂຄງການລົງທຶນຂອງລັດຈານວນໜຶ່ງແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ ແຕ່ການຊຳລະງົບປະມານຍັງບໍ່ທັນສຳເລັດຕາມສັນຍາ ແລະ ໂຄງການຈານວນໜຶ່ງຈະສຳເລັດໃນແຜນການ 5 ປີຄັ້ງຕໍ່ໄປ.

6.2 ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA) ມີຈານວນ 3 ໂຄງການດັ່ງນີ້:

1) ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວແບບຍືນຍົງ (ADB) ທຶນກູ້ຢືມ (ໄລຍະ 1) ມູນຄ່າລວມທັງໝົດ ປະມານ 43.570.000 ໂດລາສະຫະລັດ; ໃນນີ້ ມີທຶນສົມທົບຂອງລັດຖະບານລາວ ປະມານ 3.570.000 ໂດລາສະຫະລັດ (ເປັນເງິນສົດ 800.000.000 ກີບ) ໄລຍະການຈັດຕັ້ງປະຕິບັດ 2015-2020;
2) ໂຄງການພັດທະນາ ໂຄງລ່າງພື້ນຖານເພື່ອສົ່ງເສີມ ການທ່ອງທ່ຽວແບບຍືນຍົງ (ADB) ທຶນຊ່ວຍເຫຼືອລ້າ (ໄລຍະ 2)ມູນຄ່າລວມທັງໝົດ ປະມານ 47.000.000 ໂດລາສະຫະລັດ ໄລຍະການຈັດຕັ້ງປະຕິບັດ 2019-2023;
3) ໂຄງການພັດທະນາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມເພື່ອຄວາມຍືນຍົງໄລຍະII (ຈາກລັດຖະບານ ນິວຊີແລນ) ເປັນໂຄງການຊ່ວຍເຫຼືອລ້າມູນຄ່າລວມທັງໝົດ ປະມານ 3.4 ລ້ານໂດລາສະຫະລັດໄລຍະການຈັດ ຕັ້ງປະຕິບັດ 2016-2020;

6.3 ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ

ຂະແໜງການທ່ອງທ່ຽວໄດ້ຮັບທຶນຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມຈາກອົງການຈັດຕັ້ງສາກົນຈໍານວນໜຶ່ງ ໂດຍສະເພາະແມ່ນການສະໜອງທຶນເພື່ອພັດທະນາໂຄງລ່າງພື້ນຖານສິ່ງອໍານວຍຄວາມສະດວກ ໃຫ້ແກ່ການທ່ອງທ່ຽວ.

ປັດຈຸບັນ ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ຕໍ່ວຽກງານພັດທະນາການທ່ອງ ທ່ຽວໃນຂອບເຂດທົ່ວປະເທດມີປະມານ 109 ໂຄງການ, ໃນມູນຄ່າລວມປະມານ 405.902.627.042 ກີບ ແລະ 241.312.594 ໂດລາສະຫະລັດ

ຈາກຜົນສໍາເລັດໃນແຕ່ລະດ້ານທີ່ກ່າວມາຂ້າງເທິງນັ້ນ ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຄືດັ່ງນີ້:

## 7. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

1) ດ້ານພື້ນຖານໂຄງລ່າງສິ່ງອໍານວຍຄວາມສະດວກບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນເປັນຕົ້ນ: ປ້າຍຊີ້ບອກ, ປ້າຍແນະນໍາແຫຼ່ງທ່ອງທ່ຽວ, ຫ້ອງຂໍ້ມູນຂ່າວສານ, ຫ້ອງນໍ້າສາທາລະນະ, ເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວຫຼາຍແຫ່ງຍັງຫຍຸ້ງຍາກ, ບາງແຫ່ງເຂົ້າເຖິງໄດ້ພຽງແຕ່ລະດູແລ້ງ, ເສັ້ນທາງເຊື່ອມຕໍ່ທາງບົກ ແລະ ສາຍການບິນໂດຍກົງກັບຕະຫຼາດເປົ້າໝາຍທາງໄກຍັງມີໜ້ອຍ;
2) ການພັດທະນາ ແລະ ປັບປຸງແຫຼ່ງທ່ອງທ່ຽວທີ່ໂດດເດັ່ນຢູ່ບັນດາແຂວງຍັງບໍ່ທັນມີຈຸດສຸມ, ຂາດການຄົ້ນຄວ້າໃນການນໍາເອົາຂໍ້ມູນປະຫວັດຂອງແຫຼ່ງທ່ອງທ່ຽວມາໂຄສະນາເຜີຍແຜ່;
3) ການຄຸ້ມຄອງ ແລະ ບໍລິຫານສະຖານທີ່ທ່ອງທ່ຽວຍັງບໍ່ທັນເປັນລະບົບ, ກິດຈະກໍາການທ່ອງທ່ຽວຍັງບໍ່ທັນຫຼາກຫຼາຍ, ການບໍລິການຍັງບໍ່ມີຄຸນນະພາບ ແລະ ໄດ້ມາດຕະຖານເທົ່າທີ່ຄວນ;
4) ການຮັກສາຄວາມສະອາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວຢູ່ບັນດາເຂດບໍລິການການທ່ອງທ່ຽວຍັງເຮັດບໍ່ໄດ້ດີ;
5) ການຈັດລະດັບມາດຕະຖານແຫຼ່ງທ່ອງທ່ຽວຍັງຊັກຊ້າ, ການພັດທະນາແຫຼ່ງທ່ອງທ່ຽວທີ່ໄດ້ກໍານົດຢູ່ໃນແຜນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນເປັນຕົ້ນ: ການສໍາຫຼວດ-ຈັດສັນ ແລະ ແຜນພັດທະນາແຫຼ່ງທ່ອງທ່ຽວຍັງປະຕິບັດໄດ້ໜ້ອຍຖ້າທຽບໃສ່ຄາດໝາຍສູ້ຊົນ, ເຮັດໃຫ້ແຫຼ່ງທ່ອງທ່ຽວຫຼາຍແຫ່ງໃນຂອບເຂດທົ່ວປະເທດຖືກບຸກລຸກ ແລະ ຖືກຈັບຈອງເນື້ອທີ່;
6) ການພັດທະນາຂົງເຂດເສດຖະກິດບາງຂະແໜງການໄດ້ສົ່ງຜົນກະທົບໂດຍກົງຕໍ່ແຫຼ່ງທ່ອງທ່ຽວເປັນຕົ້ນ: ການເຈາະ, ການລະເບີດຜາຫີນທໍາມະຊາດທີ່ສວຍງາມຢູ່ບາງແຂວງ, ການສ້າງເຂື່ອນທີ່ບໍ່ໄດ້ມາດຕະຖານ, ການນໍາໃຊ້ສານເຄມີທີ່ເປັນອັນຕະລາຍ ແລະ ການບຸກລຸກພື້ນທີ່ແຫຼ່ງທ່ອງທ່ຽວຜະລິດກະສິກໍາຍັງຊະຊາຍ;

7) ການສ້າງ, ປັບປຸງ ແລະ ເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານການທ່ອງທ່ຽວ ຍັງບໍ່ທັນພຽງພໍກັບຄວາມຕ້ອງການ;
8) ການເກັບລາຍຮັບການບໍລິການ ແລະ ການເກັບຄ່າທຳນຽມໃນການທ່ອງທ່ຽວຍັງບໍ່ທັນມີຄວາມເປັນເອກະພາບ ແລະ ພົບຄວາມຫຍຸ້ງຍາກ,ການຄຸ້ມຄອງດ້ານລາຄາການບໍລິການຍັງບໍ່ທັນເຂັ້ມງວດເຮັດໃຫ້ເກີດມີຊ່ອງຫວ່າງໃນການສວຍໂອກາດ;
9) ການບໍລິການໃຫ້ແກ່ນັກທ່ອງທ່ຽວຢູ່ບັນດາດ່ານສາກົນເຂົ້າ-ອອກເມືອງຕ່າງໆ ແລະ ເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງຫາແຂວງ ຍັງບໍ່ທັນສະດວກ, ຂາດການຕິດຕາມ, ກວດກາ ແລະ ມີມາດຕະການທີ່ເຂັ້ມງວດຕໍ່ຜູ້ດຳເນີນທຸລະກິດທ່ອງທ່ຽວທີ່ບໍ່ຖືກຕ້ອງຕາມກົດໝາຍ;
10) ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບທ້ອງຖິ່ນຍັງບໍ່ທັນສອດຄ່ອງສະພາບຄວາມເປັນຈິງຂອງການຂະຫຍາຍຕົວວຽກງານການທ່ອງທ່ຽວເຮັດໃຫ້ການຈັດຕັ້ງປະຕິບັດພົບຄວາມຫຍຸ້ງຍາກ;
11) ຍັງບໍ່ທັນໄດ້ຂຸດຄົ້ນທ່າແຮງທາງດ້ານການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ, ຍັງບໍ່ໄດ້ຮັບການເສີມຂະຫຍາຍໃຫ້ສົມຄູ່ກັບທ່າແຮງຂອງປະເທດ, ການປູກຈິດສຳນຶກດ້ານການທ່ອງທ່ຽວໃຫ້ປະຊາຊົນໃນທ້ອງຖິ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ;
12) ການໂຄສະນາດຶງດູດນັກທ່ອງທ່ຽວຈາກພາກພື້ນ ແລະ ສາກົນຍັງເນັ້ນດ້ານປະລິມານຫຼາຍກວ່າດ້ານຄຸນນະພາບ ແລະ ຍັງບໍ່ທັນເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍເທົ່າທີ່ຄວນ;
13) ຜູ້ປະກອບການທາງດ້ານທຸລະກິດການທ່ອງທ່ຽວທີ່ມີປະສົບການ ແລະ ເປັນມືອາຊີບ ຍັງມີຈຳນວນໜ້ອຍ, ຄຸນນະພາບໃນການບໍລິການຍັງບໍ່ທັນສູງ, ການລົງທຶນຢູ່ໃນຂະແໜງການທ່ອງທ່ຽວຍັງບໍ່ທັນສົມຄູ່ກັບການຂະ ຫຍາຍຕົວຂອງວຽກງານດັ່ງກ່າວ;
14) ກົນໄກການສ້າງ ແລະ ສົ່ງເສີມວິຊາຊີບສີມືແຮງງານໃນຂະແໜງທ່ອງທ່ຽວຍັງມີຈຳກັດ ແລະ ບໍ່ໄດ້ຄຸນນະພາບ.

## IV. ວຽກງານເສນາທິການ

ວຽກງານເສນາທິການເປັນວຽກໜຶ່ງທີ່ສຳຄັນໃນການປະສານງານເພື່ອຈັດຕັ້ງປະຕິບັດ ແລະ ເປັນບ່ອນອີງໃຫ້ຄະນະນຳກະຊວງໃນການຊີ້ນຳ-ນຳພາ ວຽກງານຕ່າງໆໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ໃນ 5 ປີທີ່ຜ່ານມາໄດ້ມີຜົນສຳເລັດໃນແຕ່ລະດ້ານຄືດັ່ງນີ້:

## 1. ວຽກງານຫ້ອງການ

ຕະຫຼອດໄລຍະເວລາ 5 ປີຜ່ານມາ ຫ້ອງການໄດ້ເຄື່ອນໄຫວປະຕິບັດວຽກງານວິຊາສະເພາະຕາມພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງເປັນຕົ້ນແມ່ນ:

- ໄດ້ປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ຄະນະພັກຄະນະນຳກະຊວງ ໂດຍໄດ້ຄົ້ນຄວ້າບັນດາເອກະສານ, ການສະ ເໜີຕ່າງໆ ເພື່ອລາຍງານຄະນະນາ ຂໍທິດຊີ້ນາ ແລະ ນາເອົາທິດຊີ້ນາ, ຄຳຄິດຄຳເຫັນຂອງຄະນະນຳກະຊວງ ເຖິງພາກສ່ວນທີ່ກ່ຽວຂ້ອງນຳໄປຈັດຕັ້ງປະຕິບັດ ແລະ ໄດ້ສ້າງເງື່ອນໄຂ , ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄະນະຕາມລະບຽບການ;
- ໄດ້ຂຶ້ນແຜນໃຊ້ຈ່າຍຮັບໃຊ້ການນຳ ແລະ ວຽກງານບໍລິຫານໃນແຕ່ລະປີ ແລະ ສະຫຼຸບລາຍຮັບ-ລາຍຈ່າຍຢ່າງຈະແຈ້ງພ້ອມທັງໄດ້ຊຸກຍູ້, ຕິດຕາມກວດກາການກໍ່ສ້າງໂຄງລ່າງພື້ນຖານຕ່າງໆເປັນຕົ້ນ: ຕຶກໃໝ່ກະຊວງ, ຫໍພິພິທະພັນແຫ່ງຊາດ, ຫໍສະໝຸດແຫ່ງຊາດ ແລະ ອື່ນໆ;
- ໄດ້ປະສານສົມທົບນັດໝາຍ ແລະ ຈັດສັນການເຂົ້າຢ້ຽມຢາມຄຳນັບ, ການພົບປະ ແລະ ຕິດຕາມບັນດາການນຳໄປເຄື່ອນໄຫວຢູ່ພາຍໃນປະເທດ ແລະ ຕ່າງປະເທດ;
- ໄດ້ປັບປຸງກົນໄກການປະສານງານ, ການຄຸ້ມຄອງເອກະສານເຂົ້າ-ອອກຜ່ານປະຕູດຽວ ດ້ວຍການຫັນມານຳໃຊ້ເຕັກໂນໂລຊີທີ່ທັນສະໄໝມາຄຸ້ມຄອງນຳໃຊ້ໄດ້ຢ່າງເປັນລະບົບ ແລະ ໄດ້ມີການຝຶກອົບຮົມການນຳໃຊ້ໃຫ້ບັນດາກົມກອງອ້ອມຂ້າງກະຊວງ ແລະ ພະແນກ ຖວທ ແຂວງໃນຂອບເຂດທົ່ວປະເທດ;
- ສົມທົບກັບກົມກ່ຽວຂ້ອງ ໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງຊັບສິນຕ່າງໆຂອງກະຊວງ , ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນສຳນັກງານ. ຕິດຕາມກວດກາການນຳໃຊ້ພະຫະນະ, ອຸປະກອນ ແລະ ເຄື່ອງຮັບໃຊ້ຕ່າງໆຂອງກະຊວງ;
- ສັງລວມບັນດານິຕິກຳ ແລະ ເອກະສານຕ່າງໆ ທີ່ສຳຄັນເຂົ້າໃນຖານຂໍ້ມູນຂອງກະຊວງ ເພື່ອເຮັດໃຫ້ພາກສ່ວນຕ່າງໆ ສາມາດນຳໄປໃຊ້ເຂົ້າໃນວຽກງານຕົວຈິງ; ພ້ອມນັ້ນ ໄດ້ມີການແຕ່ງຕັ້ງຜູ້ປະສານງານກັບບັນດາຂະແໜງການຕ່າງໆທັງພາຍໃນ ແລະ ພາຍນອກ;
- ວຽກງານພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍ ໄດ້ເອົາໃຈໃສ່ເຄື່ອນໄຫວຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດຕາມພາລະບົດບາດດ້ວຍຫຼາຍຮູບການຜ່ານຂະບວນການເຜີຍແຜ່ເອກະສານສຳຄັນຕ່າງໆທີ່ກ່ຽວຂ້ອງ, ການເຂົ້າຮ່ວມກອງປະຊຸມ, ການເຂົ້າຮ່ວມຝຶກອົບຮົມ ແລະ ການເຂົ້າຮ່ວມກິດຈະກຳຕ່າງໆ ເພື່ອໂຄສະນາທາງກວ້າງ ແລະ ທາງເລິກ ເພື່ອປູກຈິດສຳນຶກ ແລະ ສ້າງຂະບວນການຢ່າງກວ້າງຂວາງໃນທົ່ວສັງຄົມໄດ້ຮັບຮູ້.

## 2. ວຽກງານຈັດຕັ້ງພະນັກງານ

ໄດ້ປັບປຸງກົງຈັກການຈັດຕັ້ງການເຄື່ອນໄຫວ ໃນຂະແໜງ ຖວທ ທັງສູນກາງ ແລະ ທ້ອງຖິ່ນ, ຕິດຕາມ-ກວດກາການດັດແກ້ຊັ້ນ-ຂັ້ນເງິນເດືອນຕາມປົກກະຕິຕາມໃບປະກາດ, ການນໍາສົ່ງພະນັກງານຜູ້ທີ່ໄປຮຽນຕໍ່, ແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ ແລະ ຮັບເອົາພະນັກງານຮຽນຈົບກັບຄືນມາປະຈໍາການ, ປະຕິບັດນະໂຍບາຍຕໍ່ພະນັກງານໄດ້ຖືກຕ້ອງຕາມລະບຽບລັດຖະກອນ. ໄດ້ປະຕິບັດນະໂຍບາຍ ຍ້ອງຍໍສັນລະເສີນ, ເລື່ອນຊັ້ນ-ຂັ້ນ, ຍົກລະດັບທິດສະດີ, ວິຊາສະເພາະໃນລະດັບຕ່າງໆຢູ່ທັງພາຍໃນ ແລະ ຕ່າງປະເທດ. ທົ່ວຂະແໜງ ຖວທ ມີລັດຖະກອນທັງໝົດ ຈໍານວນ 4.665 ຄົນ, ຍິງ 1.804 ຄົນ, ຢູ່ສູນກາງ 1.549 ຄົນ ຍິງ 662 ຄົນ ຂັ້ນທ້ອງຖິ່ນ 3.116 ຍິງ 1.142 ຄົນ ໄດ້ນໍາພາປັ້ນດໍາເນີນຊີວິດການເມືອງຂອງພັກ ການຕີລາຄາແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກເຂັ້ມແຂງຮູ້ນໍາພາຮອບດ້ານ. ນໍາພາວຽກງານອົງການຈັດຕັ້ງມະຫາຊົນຊາວໜຸ່ມ, ແມ່ຍິງ, ກໍາມະບານໃຫ້ດໍາເນີນວຽກງານຕາມພາລະບົດບາດຂອງຕົນ. ນໍາພາວຽກງານປ້ອງກັນຄວາມສະຫງົບພາຍໃນສໍານັກງານ, ອົງການ ຢ່າງເປັນປົກກະຕິ.

## 3. ວຽກງານແຜນການ-ການເງິນ

ເປັນເຈົ້າການໃນການສ້າງແຜນພັດທະນາວຽກງານ ຖວທ 2016-2020, ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຖວທ ໃນແຕ່ລະໄລຍະໃຫ້ຄະນະນໍາ, ສະພາແຫ່ງຊາດ ແລະ ຂະແໜງການທີ່ກ່ຽວຂ້ອງ, ເອົາໃຈໃສ່ການປັບປຸງດັດແກ້ແຜນວຽກ, ແຜນງົບປະມານໃນແຕ່ລະໄລຍະຕາມສະພາບຕົວຈິງບົນພື້ນຖານການແນະນໍາຂອງຂະແໜງແຜນການ ແລະ ການເງິນ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງສ້າງ ແລະ ປັບປຸງລະບົບຖານຂໍ້ມູນສະຖິຕິ, ຄົ້ນຄວ້າກໍານົດຕົວຊີ້ບອກຂອງຂະແໜງການ. ເອົາໃຈໃສ່ ການສ້າງຊຸກຍູ້ການສ້າງລາຍຮັບວິຊາການ ຕາມມະຕິເລກທີ 36 ຂອງກົມການເມືອງສູນກາງພັກ ກໍຄືມະຕິ 7 ສະໄໝທີ VIII ຂອງສູນກາງພັກ; ກົມກອງວິຊາການຈໍານວນໜຶ່ງສາມາດກຸ້ມຕົນເອງໃນການນໍາໃຊ້ງົບປະມານສ່ວນໜຶ່ງ ໂດຍສະເພາະແມ່ນ ຂະແໜງສື່ມວນຊົນໄດ້ເອົາໃຈໃສ່ບຸກບືນສ້າງລາຍຮັບເພື່ອກຸ້ມຕົນເອງ ທ່າມກາງສະພາບການທີ່ສັງຄົມຫັນໄປນໍາໃຊ້ສື່ອອນລາຍ ແຕ່ພາກສ່ວນກ່ຽວຂ້ອງກໍສາມາດສ້າງລາຍຮັບວິຊາການໄດ້ໂດຍພື້ນຖານເພື່ອຫຼຸດຜ່ອນການນໍາໃຊ້ງົບປະມານຂອງລັດຖະບານເທື່ອລະກ້າວ.

ໄດ້ເອົາໃຈໃສ່ໃນການຄຸ້ມຄອງການນໍາໃຊ້ງົບປະມານຕາມແຜນທີ່ກໍານົດ, ມີຄວາມຮັດກຸມ, ປະຢັດມັດທະຍັດ, ຖືກຕາມລະບຽບຫຼັກການ. ເອົາໃຈໃສ່ໃນການປັບປຸງລະບົບການຄຸ້ມຄອງກວດກາຕິດຕາມການນໍາໃຊ້ງົບປະມານດ້ວຍການຫັນເປັນທັນສະໄໝ ເຊັ່ນ: ການນໍາໃຊ້ລະບົບບັນຊີອອນລາຍ, ການເບີກຈ່າຍ

ເງິນເດືອນ ເງິນອຸດໜູນ, ບັນຊີຊັບສິນບັດ ແລະ ທີ່ດິນຂອງກະຊວງ ລ້ວນແຕ່ມີໂປຣແກມສະເພາະ ແລະ ສາມາດກວດສອບໄດ້.

ໄດ້ຂົນຂວາຍລະດົມທຶນຈາກອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາວຽກງານ ຖວທ; ສ້າງພື້ນຖານໂຄງຮ່າງເພື່ອຮັບໃຊ້ວຽກງານ ວິຊາການ ຖວທ ໃນປະຈຸບັນ ແລະ ໃນຕໍ່ໜ້າເຊັ່ນ: ໂຄງການກໍ່ສ້າງສະຖານີວິທະຍຸ ແລະ ໂທລະພາບ ສົ່ງຕໍ່ ເປັນລະບົບດິຈິຕອນ 2 ແຫ່ງ ຄື: ແຂວງອຸດົມໄຊ ແລະ ສະຫວັນນະເຂດ, ໂຄງການກໍ່ສ້າງ ສະຖານີໂທລະພາບ ແລະ ວິທະຍຸ ຢູ່ແຂວງ ບໍ່ແກ້ວ ແລະ ໄຊສົມບູນ ດ້ວຍທຶນຊ່ວຍເຫຼືອລ້າຂອງ ສສ ຫວຽດນາມ, ໂຄງການສ້ອມແປງຫໍວັດທະນະທຳແຫ່ງຊາດ ດ້ວຍທຶນຊ່ວຍເຫຼືອລ້າຂອງ ສປ ຈີນ, ໂຄງການກໍ່ສ້າງຕຶກອາຄານຫໍພັກນັກສະແດງກາຍະສິນແຫ່ງຊາດ, ໂຄງການກໍ່ສ້າງຕຶກອາຄານຝຶກແອບ ສິລະກອນແຫ່ງຊາດ, ໂຄງການສ້ອມແປງໂຮງຮຽນສິລະປະແຫ່ງຊາດ ດ້ວຍທຶນຂອງລັດຖະບານ ສສ ຫວຽດນາມ, ໄດ້ມີການມອບ-ຮັບໂຄງການກໍ່ສ້າງຕຶກອາຄານໜັງສືພິມປະຊາຊົນ ແລະ ໜັງສືພິມພາສາ ຕ່າງປະເທດ, ຕຶກຫໍສະໝຸດແຫ່ງຊາດ, ຕຶກຫໍພິພິທະພັນແຫ່ງຊາດ, ຕຶກຂ່າວສານປະເທດລາວ ດ້ວຍ ການຫັນຊັບສິນເປັນທຶນ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ຊຶ່ງໄດ້ຊ່ວຍພັດທະນາໂຄງລ່າງພື້ນຖານ ການຮອງຮັບຂອງກະຊວງ ຖວທ ໃຫ້ດີຂຶ້ນ.

ໄດ້ມີການສ້າງ ແລະ ປັບປຸງຄະນະຮັບຜິດຊອບການລົງທຶນປະຕູດຽວຂອງກະຊວງ ຖວທ ໂດຍ ມີທ່ານຮອງລັດຖະມົນຕີເປັນຜູ້ຊີ້ນຳ ຊຶ່ງເຮັດໃຫ້ວຽກງານດັ່ງກ່າວ ເຂົ້າມາລວມສູນຜ່ານປະຕູດຽວເທື່ອ ລະກ້າວ, ເຮັດໃຫ້ການປະ ສານງານແຕ່ລະຂະແໜງການໄດ້ມີການເຊື່ອມຈອດ, ຂໍ້ມູນຂ່າວສານຕ່າງໆ ໄດ້ຖືກເປີດກວ້າງເຫັນວ່າບັນດາຂໍ້ຈຳກັດ ແລະ ຂໍ້ຄົງຄ້າງ ຢູ່ໃນແຜນແຕ່ລະປີທີ່ໄດ້ຈັດຕັ້ງປະຕິບັດຜ່ານ ມາ ໄດ້ຮັບການປັບປຸງແກ້ໄຂດີຂຶ້ນ, ສຸມໃສ່ຜັນຂະຫຍາຍວິໄສທັດ 2030, ຍຸດທະສາດ 10 ປີ 2016-2025 ແລະ ແຜນພັດທະນາວຽກງານ ຖວທ 5 ປີ 2016-2020 ທີ່ໄດ້ຖືກຮັບຮອງຈາກລັດຖະບານ ແລະ ໄດ້ມີດຳລັດຈັດຕັ້ງປະຕິບັດ ຊຶ່ງໄດ້ເປັນແນວທາງ ແລະ ບ່ອນອີງໃນການຈັດຕັ້ງປະຕິບັດແຜນ ພັດທະນາ, ແຜນການລົງທຶນຂອງລັດ ໃນວຽກງານ ຖວທ 5 ປີ ຄັ້ງທີ VIII ຜ່ານມາ. ໃນນີ້, ໄດ້ສຳເລັດ ການຄົ້ນ ຄວ້າເອກະສານກ່ຽວກັບການຂໍອະນຸຍາດລົງທຶນໃນຂະແໜງການ ຖວທ ແລະ ປະກອບຄຳ ຄິດເຫັນທາງດ້ານວິຊາການຈຳນວນ 45 ໂຄງການ; ສຳເລັດການຄົ້ນຄວ້າ ແລະ ອອກໜັງສືຮັບຮອງບົດ ວິພາກເສດຖະກິດເຕັກນິກຈຳນວນໜຶ່ງ.

**4. ວຽກງານຮ່ວມມືສາກົນ.**

❖ ຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ

- ໃນປີ 2018 ໄດ້ເປັນເຈົ້າພາບຮ່ວມກັບ ສປ ຈີນ ຈັດຕັ້ງກອງປະຊຸມສຸດຍອດສິ່ມອນຊິນແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ;
- ໃນປີ 2019 ເປັນເຈົ້າການຈັດຕັ້ງຂະບວນການປີທ່ອງທ່ຽວລາວ-ຈີນ ທີ່ໄດ້ເຮັດໃຫ້ວຽກງານພົວພັນການຕ່າງປະ ເທດ ສືບຕໍ່ເຄື່ອນໄຫວຢ່າງຕໍ່ເນື່ອງໄປຕາມທິດຊີ້ນຳຂອງພັກ-ລັດ ບົນຫຼັກການສັນຕິພາບ , ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ;
- ໄດ້ລົງນາມໃນບົດບັນທຶກການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ເຊັ່ນ: ສສ ຫວຽດນາມ, ສປ ຈີນ ແລະ ສປປ ເກົາຫຼີ. ນອກຈາກນັ້ນກໍ່ຍັງໄດ້ຈັດຕັ້ງປະຕິບັດວຽກງານຮ່ວມມືສອງຝ່າຍກັບບັນດາປະເທດເພື່ອນບ້ານ ອ້ອມຂ້າງ ແລະ ສາກົນ.
- ໄດ້ຊຸກຍູ້ບັນດາກົມກອງຕ່າງໆ ຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອເພື່ອການພັດທະນາເພື່ອກໍ່ສ້າງພື້ນຖານໂຄງລ່າງຈຳນວນໜຶ່ງທີ່ໄດ້ຮັບການສະໜັບສະໜູນຈາກປະເທດເພື່ອນມິດຍຸດທະສາດ;
- ໄດ້ເປັນເຈົ້າການໃນການປະສານງານກັບຂະແໜງ ການທີ່ກ່ຽວຂ້ອງທັງພາຍໃນ ແລະ ພາຍນອກ; ຄົ້ນຄວ້າບັນດາເອກະສານຕ່າງໆ ໃນຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ, ວຽກງານການຮ່ວມມືດ້ານການທ່ອງທ່ຽວ ໃນຂອບຮ່ວມມືກຳປູເຈຍ-ລາວ-ມຽນມາ-ຫວຽດນາມ (CLMV); ກຳປູເຈຍ-ລາວ-ຫວຽດນາມ (CLV), ການຮ່ວມມືດ້ານເສດຖະກິດພາຍໃຕ້ຂອບການຮ່ວມມື (ACMECS).

❖ ຂອບການຮ່ວມມື ອົງການຈັດຕັ້ງສາກົນ

- ໄດ້ຊຸກຍູ້ກົມກ່ຽວຂ້ອງໃນການປະສານງານກັບ ອົງການອຸຍແນສໂກ ເພື່ອຮັບຮອງເອົາສຽງແຄນເຊື້ອຊາດລາວ ເຂົ້າເປັນມໍຣະດົກໂລກທາງດ້ານວັດທະນະທຳນາມມະທຳ ແລະ ຮັບຮອງເອົາທົ່ງໄຫຫີນ ແຂວງຊຽງຂວາງ ເຂົ້າເປັນມໍຣະດົກໂລກທາງດ້ານວັດທະນະທຳແຫ່ງທີ 3 ຂອງສປປ ລາວ ;
- ອຳນວຍຄວາມສະດວກໃຫ້ແກ່ບັນດາຊ່ຽວຊານໂຄງການຊ່ວຍເຫຼືອເພື່ອການພັດທະນາໃນຂົງເຂດ ຖວທ;
- ໄດ້ມີການຮ່ວມມືໃນຂອບຂອງອົງການທ່ອງທ່ຽວໂລກ ດ້ວຍການເຂົ້າຮ່ວມກອງປະຊຸມ ແລະ ສາມະນາ;
- ໄດ້ເປັນເຈົ້າການໃນການປະສານງານກັບຂະແໜງການທີ່ກ່ຽວຂ້ອງທັງພາຍໃນ ແລະ ພາຍນອກ; ຄົ້ນຄວ້າບັນດາເອກະສານຕ່າງໆ ໃນຂອບການຮ່ວມມື ອົງການຈັດຕັ້ງສາກົນ;

❖ ຂອບການຮ່ວມມືອາຊຽນ

- ໃນໄລຍະ 5 ປີຜ່ານມາ ໄດ້ມີເຫດການທີ່ສຳຄັນຫຼາຍຢ່າງຈັດຕັ້ງຂຶ້ນ ທີ່ ສປປ ລາວ ເຊັ່ນ ໃນປີ 2016 ໄດ້ຮັບກຽດເປັນປະທານກອງປະຊຸມສະພາປະຊາຄົມວັດທະນະທຳ-ສັງຄົມອາຊຽນຕາມຮອບວຽນ;
- ໄດ້ເປັນເຈົ້າພາບຈັດຕັ້ງກອງປະຊຸມຕ່າງໆ ຢ່າງມີຜົນສຳເລັດ ເປັນຕົ້ນ: ກອງປະຊຸມ COCI (ກອງປະຊຸມຄະນະກຳມາທິການຖະແຫຼງຂ່າວ-ວັດທະນະທຳອາຊຽນ) ຄັ້ງທີ 51; ກອງປະຊຸມອະນຸກຳມະການດ້ານຖະແຫຼງຂ່າວ ຄັ້ງທີ 17 (SCI); ໂຄງການຖາມ-ຕອບຄວາມຮູ້ອາຊຽນ (ASEAN QUIZ) ລະດັບພາກພື້ນ ຄັ້ງທີ 7;
- ໄດ້ຈັດຕັ້ງປະຕິບັດໂຄງການຈຳນວນໜຶ່ງ ໂດຍການນຳໃຊ້ກອງທຶນວັດທະນະທຳອາຊຽນ (ACF);
- ໄດ້ເປັນເຈົ້າການຈັດຕັ້ງປະຕິບັດບັນດາສັນຍາຕ່າງໆ ໄດ້ຕົກລົງຮ່ວມກັນເປັນຕົ້ນແມ່ນວຽກງານມາດຕະຖານການ ທ່ອງທ່ຽວອາຊຽນ 9 ມາດຕະຖານ;
- ໄດ້ເປັນເຈົ້າການໃນການປະສານງານກັບຂະແໜງການທີ່ກ່ຽວຂ້ອງທັງພາຍໃນ ແລະ ພາຍນອກ; ຄົ້ນຄວ້າບັນດາເອກະສານຕ່າງໆ ວຽກງານການຮ່ວມມື ໃນຂອບອາຊຽນ;

**5. ວຽກງານນິຕິກຳ.**

ໄດ້ສ້າງ ແລະ ປັບປຸງນິຕິກຳເພື່ອຄຸ້ມຄອງວຽກງານ ຖວທ ໃນໄລຍະໃໝ່, ປັດຈຸບັນໄດ້ມີກົດໝາຍໃນຂົງເຂດ ຖວທ ທັງໝົດ 07 ສະບັບ, ນິຕິກຳໃຕ້ກົດໝາຍ 125 ສະບັບ;ໃນນີ້ ກົດໝາຍທີ່ສ້າງຂຶ້ນໃໝ່ມີກົດໝາຍວ່າ ດ້ວຍສິລະປະການສະແດງ ຖືກຮັບຮອງໃນປີ 2016, ກົດໝາຍວ່າດ້ວຍປ້າຍ ແລະ ກົດໝາຍວ່າດ້ວຍຮູບເງົາ ຖືກຮັບຮອງໃນປີ 2019. ໄດ້ຮ່າງມະຕິ ວຽກງານວັດທະນະທຳໄລຍະໃໝ່ຂອງພັກ ສົ່ງໃຫ້ຈັດຕັ້ງສູນກາງພັກ; ຄຽງຄູ່ກັນນີ້, ກໍໄດ້ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຈຳນວນໜຶ່ງເຊັ່ນ: ລັດຖະບັນຍັດ 2 ສະບັບ, ຄຳສັ່ງ 4 ສະບັບ, ມະຕິ 3 ສະບັບ, ດຳລັດ 12 ສະບັບ, ຂໍ້ຕົກລົງ 28 ສະບັບ, ຂໍ້ກຳນົດ 14 ສະບັບ, ກົດລະບຽບ 12 ສະບັບ, ແຈ້ງການ 29 ສະບັບ, ບົດແນະນຳ 1 ສະບັບ, ບົດບັນທຶກ 9 ສະບັບ, ສັນຍາ 10 ສະບັບ.

ໄດ້ສຳເລັດການປັບປຸງດຳລັດວ່າດ້ວຍການບັນເທີງ, ໄດ້ປັບປຸງຮ່າງດຳລັດວ່າດ້ວຍການທ່ອງທ່ຽວ, ຮ່າງມາດຕະຖານຮ້ານບັນເທີງ, ຮ່າງຂໍ້ກຳນົດຄຸ້ມຄອງທຸລະກິດບໍລິການໂຮງແຮມ, ຣີສອດ, ເຮືອນພັກ ແລະ ຮ່າງຂໍ້ຕົກລົງການຈັດລະດັບມາດຕະຖານຂັ້ນໂຮງແຮມ, ຣີສອດ, ເຮືອນພັກ ຢູ່ ສປປ ລາວ ແລະ ດຳລັດວ່າດ້ວຍກອງທຶນການທ່ອງທ່ຽວ, ໄດ້ປັບປຸງຂໍ້ຕົກລົງຄຸ້ມຄອງໂທລະພາບໃຊ້ສາຍ-ບໍ່ໃຊ້ສາຍ. ໄດ້ສ້າງຮ່າງດຳລັດວ່າດ້ວຍຄອບຄົວ-ບ້ານວັດທະນະທຳ, ຮ່າງດຳລັດວ່າດ້ວຍການຄຸ້ມຄອງສະໂມສອນວັດທະນະທຳ, ດຳລັດວ່າດ້ວຍການຄຸ້ມຄອງງານບຸນປະເພນີຕ່າງໆ.

ໄດ້ສືບຕໍ່ຈັດກອງປະຊຸມວິຊາການ ຄົ້ນຄວ້າປັບປຸງຮ່າງກົດໝາຍ ມໍຣະດົກແຫ່ງຊາດ ແລະ ດຳລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທຳ ເຊິ່ງສຳເລັດໂດຍພື້ນຖານ. ການປັບປຸງດັ່ງກ່າວແມ່ນອີງໃສ່

ມາດຕະຖານຂອງຄະນະພັດທະນາຊົນນະບົດ, ມາດຕະຖານຂອງຂະແໜງການອື່ນໆ ທີ່ກ່ຽວຂ້ອງ ແລະ ຄໍາຄິດເຫັນຂອງພະແນກ ຖວທ ທົ່ວປະເທດ. ມາເຖິງປັດຈຸບັນ ໄດ້ນໍາສົ່ງສອງເອກະສານດັ່ງກ່າວເຖິງກະຊວງ ຍຸຕິທໍາ ເພື່ອສະເໜີຂໍຄວາມສອດຄ່ອງທາງດ້ານກົດໝາຍຕາມລະບຽບການ; ພ້ອມນີ້ກໍໄດ້ສືບຕໍ່ເກັບກໍາຄໍາຄິດເຫັນຈາກບັນດາພະແນກ ຖວທ ແຂວງ, ບັນດາສະມາຄົມຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຂອບເຂດທົ່ວປະເທດ ເພື່ອປັບປຸງຮ່າງດໍາລັດວ່າດ້ວຍການນຸ່ງຖືແຕ່ງກາຍໃຫ້ຮັດກຸມສົມບູນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍນິຕິກໍາ.

**6. ວຽກງານກວດກາ.**

ໄດ້ເອົາໃຈໃສ່ເຄື່ອນໄຫວຕິດຕາມກວດກາ ຕາມພາລະບົດບາດ, ຂອບເຂດສິດໜ້າທີ່ຂອງຕົນຮັບຜິດຊອບ ເປັນຕົ້ນໄດ້ຈັດຕັ້ງ ການເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານກວດກາ ປະຈໍາປີ, ໄດ້ຈັດກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມເອກະສານ ແຈ້ງຊັບສິນຮອບ II ໃຫ້ພະນັກງານ-ລັດຖະກອນທີ່ຢູ່ໃນການຄຸ້ມຄອງຂອງກະຊວງ ຖວທ ເຊິ່ງມີຜູ້ເຂົ້າຮ່ວມ ຈໍານວນ 82 ສະຫາຍ, ຍິງ 40 ສະຫາຍ, ຕິດຕາມ - ກວດກາ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກກະຊວງ, ຕິດຕາມ ກວດກາ ການພັດທະນາວຽກງານ ຖວທ ຢູ່ພະແນກ ຖວທ ແຂວງ ຕາມພາລະບົດບາດໜ້າທີ່ ຂອບເຂດສິດຂອງກົມກວດກາ, ໄດ້ເຮັດວຽກຮ່ວມກັບຄະນະກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ ທີ່ມາກວດກາ ສະຖາບັນວິຈິດສິນ ແລະ ໂຄງການຫັນຊັບສິນເປັນທຶນ 4 ເປົ້າໝາຍ, ຕິດຕາມກວດກາດ້ານການເງິນຢູ່ບັນດາກົມ, ສະຖາບັນ, ກອງວິຊາການ ສົກປີ 2015-2016 ແລະ 3 ເດືອນຂ້າມຜ່ານ ປີ 2016 ໄດ້ 11 ເປົ້າໝາຍ, ສໍາເລັດການກວດກາ ການນໍາ ໃຊ້ລາຍຮັບວິຊາການ, ທຶນສົ່ງເສີມການທ່ອງທ່ຽວ, ບັນຊີຊັບສິນບັດຂອງລັດປະເພດຕ່າງໆ ແລະ ການນໍາໃຊ້ງົບປະມານຂອງລັດໃນໂຄງການຕ່າງໆ ໃຫ້ນໍາໃຊ້ຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍຂອງລັດ.

ໄດ້ເອົາໃຈໃສ່ປັບປຸງວຽກງານກວດກາໃຫ້ເປັນລະບົບຄົບຊຸດ ແລະ ມີການເຄື່ອນໄຫວຢ່າງເຂັ້ມແຂງສາມາດ ດໍາເນີນການກວດກາ ແລະ ປ້ອງກັນບໍ່ໃຫ້ມີສະພາບການຫຍໍ້ທໍ້ເກີດຂຶ້ນໃນຂົງເຂດວຽກງານ ຖວທ. ລົງກວດກາເກັບກໍາ ຂໍ້ມູນປະກົດການຫຍໍ້ທໍ້ ໃນຂະແໜງການ ຖວທ ແຕ່ສູນກາງ ແລະ ລົງຮອດທ້ອງຖິ່ນໃນຂອບເຂດທົ່ວປະເທດ 17 ຄັ້ງ, ກວດກາ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນການປະມູນ, ການຈັດຊື້-ຈັດຈ້າງ ຈໍານວນ 3 ຄັ້ງ ເພື່ອໃຫ້ຖືກຕ້ອງສອດຄ່ອງຕາມ ລະບຽບການ; ໄດ້ຮັບຄໍາຮ້ອງ-ຄໍາສະເໜີ ຈໍານວນ 38 ສະບັບ, ແຍກເປັນຄໍາຮ້ອງທຸກ 6 ສະບັບ, ຄໍາສະເໜີ 32 ສະບັບ ໃນນັ້ນສາມາດແກ້ໄຂໄດ້ 30 ສະບັບ ບົນພື້ນຖານປະຕິບັດຕາມລະບຽບຫຼັກການ, ຍັງສືບຕໍ່ແກ້ໄຂ 2 ສະບັບ. ພ້ອມນີ້ຊີ້ນໍາ-ນໍາພາການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນທີ່ຢູ່ໃນການຄຸ້ມຄອງຂອງກະຊວງທີ່ຍັງຄ້າງບໍ່ໄດ້ແຈ້ງໃນຮອບທີ I ຈໍານວນ 183 ທ່ານ, ແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນທີ່ຢູ່

ໃນຂັ້ນຄຸ້ມຄອງຂອງກະຊວງຮອບທີ II ຈຳນວນ 1.620 ທ່ານ, ຍິງ 686 ທ່ານ, ຂັ້ນສູນກາງຄຸ້ມຄອງ 37 ທ່ານ, ຍິງ 4 ທ່ານ. ຜ່ານການກວດກາແຕ່ລະເປົ້າໝາຍເຫັນວ່າ ແມ່ນໄດ້ປະຕິບັດຕາມພາລະບົດບາດ, ຂອບເຂດ, ສິດແລະໜ້າທີ່ຂອງຕົນໄດ້ເປັນຢ່າງດີ ແລະ ໄດ້ສຳເລັດຕາມແຜນການທີ່ວາງໄວ້.

**7. ວຽກງານພັດທະນາບຸກຄະລາກອນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ**

ໄດ້ມີຄວາມພະຍາຍາມສູງໃນການບຳລຸງສ້າງບຸກຄະລາກອນ ທາງດ້ານທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ 45 ວັນ ໃຫ້ແກ່ພະນັກງານຫຼັກແຫຼ່ງ ກະຊວງ ຖວທ ເປັນຈຳນວນ 4 ຊຸດ, ມີຜູ້ເຂົ້າຮ່ວມ 212 ຄົນ ແລະ ສ້າງບຸກຄະລາກາກອນໃນ 3 ຂົງເຂດ ດ້ວຍຮູບແບບ ບຳລຸງໄລຍະສັ້ນ ໂດຍນຳໃຊ້ ງົບປະມານຂອງລັດ, ສະມາຄົມຕ່າງໆ, ທຶນຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເຊັ່ນ: ສສ ຫວຽດນາມ, ສປ ຈີນ, ລູກຊຳບວກ, ຊູແອດ, ສະວິດເຊີແລນ ແລະ ອື່ນໆທັງພາຍໃນ ແລະ ຕ່າງປະເທດ. ໃນໄລຍະ 5 ປີ ຜ່ານມາ ໄດ້ສຳເລັດ ຝຶກອົບຮົມວິທີເກັບກຳຂ່າວສານ, ວິທີຂຽນບົດຂ່າວໃຫ້ແກ່ນັກຂ່າວແຂວງບໍລິຄຳໄຊ ມີຜູ້ເຂົ້າຮ່ວມ 52 ຄົນ, ເຂົ້າຮ່ວມຝຶກອົບຮົມ ວຽກຄຸ້ມຄອງສື່ມວນຊົນ ທີ່ ສສ ຫວຽດນາມ, ສຳເລັດຝຶກອົບຮົມ " ທັກສະການໂຄສະນາແນວທາງການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ " ໃຫ້ແກ່ສື່ມວນຊົນລາວ ຢູ່ສະຖາບັນມີຜູ້ເຂົ້າຮ່ວມ 40 ຄົນ, ສຳເລັດຝຶກອົບຮົມທັກສະການຂຽນຂ່າວສານ ຢູ່ສະຖາບັນ ມີຜູ້ເຂົ້າຮ່ວມ 45 ຄົນ, ສຳເລັດການຝຶກອົບຮົມການນຳໃຊ້ພາສາລາວໃນສື່ມວນຊົນ ມີຜູ້ເຂົ້າຮ່ວມ 31 ຄົນ, ສຳເລັດອົບຮົມ ທັກສະການເຮັດຂ່າວໃນເຫດການສຳຄັນ ໂດຍໄດ້ຮັບການຮ່ວມມືກັບກະຊວງຖະແຫຼງຂ່າວ ແລະ ສື່ສານ ຈາກ ສສ ຫວຽດນາມ ມີຜູ້ເຂົ້າຮ່ວມ 44 ຄົນ, ສຳເລັດການຝຶກອົບຮົມ ທັກສະການໂຄສະນາແນວທາງການເມືອງ, ເສດຖະກິດ, ວັດທະນະທຳສັງຄົມ ໃຫ້ແກ່ສື່ມວນຊົນລາວ ຢູ່ ສສ ຫວຽດນາມ ມີຜູ້ເຂົ້າຮ່ວມ 45 ຄົນ, ສຳເລັດການຝຶກອົບຮົມຫົວຂໍ້ ທັກສະການວິເຄາະ ແລະ ບັນນາທິການຂໍ້ມູນຂ່າວສານທາງອິນເຕີເນັດ; ການຖ່າຍຮູບ ແລະ ບັນນາທິການຮູບຂ່າວສານ ໃຫ້ແກ່ນັກຂ່າວລາວທົ່ວປະເທດ ລວມເຂົ້າຮ່ວມທັງໝົດ 90 ຄົນ, ລົງເກັບກຳຂໍ້ມູນວຽກງານຖະແຫຼງຂ່າວ 3 ແຂວງພາກໃຕ້; ສຳເລັດການຝຶກອົບຮົມ ທັກສະປະຊາສຳພັນ ລະຫວ່າງສື່ມວນຊົນ ກັບອົງການຈັດຕັ້ງໃນສັງຄົມ ໃຫ້ແກ່ນັກຂ່າວລາວທົ່ວປະເທດ, ໄດ້ສຳເລັດການເປັນວິທະຍາກອນສຳລັບການຝຶກອົບຮົມຫົວຂໍ້ ຄວາມຮູ້ພື້ນຖານກ່ຽວກັບການຂຽນຂ່າວ ວິທະຍຸ-ໂທລະພາບ ທີ່ເມືອງທ່າພະບາດ ແຂວງບໍລິຄຳໄຊ, ສຳເລັດການຝຶກອົບຮົມ ທັກສະການຖ່າຍຮູບຂ່າວໃຫ້ແກ່ສື່ເອເລັກໂຕຣນິກ ໃຫ້ແກ່ນັກຂ່າວລາວທົ່ວປະເທດ ມີຜູ້ເຂົ້າຮ່ວມ 40 ຄົນ, ນອກຈາກນັ້ນ ຍັງໄດ້ຈັດຊຸດຝຶກອົບຮົມວຽກງານພັດທະນາບຸກຄະລາກອນດ້ານວັດທະນະທຳ ຈຳນວນ 5 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 171 ຄົນ, ສຳເລັດການຝຶກອົບຮົມການເຄື່ອນໄຫວ ແລະ ຄຸ້ມຄອງ ວິຖີຊີວິດ ວັດທະນະທຳ ມີຜູ້ເຂົ້າຮ່ວມ 35 ຄົນ, ສຳເລັດຝຶກອົບຮົມການຄຸ້ມຄອງ ສິລະປະການສະແດງ ແລະ ສິ່ງເສີມວຽກງານ ວັນນະຄະດີ ມີຜູ້ເຂົ້າຮ່ວມ 36 ຄົນ, ສຳເລັດການຝຶກ

ອົບຮົມ ຄຸ້ມຄອງວັດທະນະທຳ ຈຳນວນ 2 ຄັ້ງ ມີຜູ້ເຂົ້າຮ່ວມ 68 ຄົນ, ສຳເລັດການຝຶກອົບຮົມ ຄຸ້ມຄອງມໍຣະດົກ ແລະ ຮີດຄອງປະເພນີ ມີຜູ້ເຂົ້າຮ່ວມ 46 ຄົນ, ສຳເລັດຝຶກອົບຮົມດ້ານ ການພັດທະນາບຸກຄະລາກອນການທ່ອງທ່ຽວ ຈຳນວນ 7 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 323 ຄົນ, ສຳເລັດການຈັດກອງປະຊຸມສຳມະນາ ຈຳນວນ 3 ຄັ້ງ ມີຜູ້ເຂົ້າຮ່ວມ 84 ຄົນ, ສຳເລັດການເຜີຍແຜ່ສັນຍາຮັບຮູ້ເຊິ່ງກັນແລະກັນ ກ່ຽວກັບວິຊາຊີບທ່ອງທ່ຽວອາຊຽນ ແກ່ສະຖາບັນການສຶກສາ 5 ແຫ່ງ ຢູ່ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ແຂວງ ຈຳປາສັກ ມີຜູ້ເຂົ້າຮ່ວມ 800 ຄົນ, ສຳເລັດການເຂົ້າຮ່ວມຝຶກອົບຮົມຄູຝຶກ ແລະ ຄູປະເມີນຜົນວິຊາຊີບທ່ອງທ່ຽວອາຊຽນສາຂາການທ່ອງທ່ຽວ ທີ່ປະເທດອິນໂດເນເຊຍ ແລະ ສສ ຫວຽດນາມ ຈຳນວນ 8 ຄົນ.

## 8. ການຈັດຕັ້ງປະຕິບັດແຜນການລົງທຶນໃນຂະແໜງເສນາທິການ

### 8.1 ການລົງທຶນຈາກງົບປະມານຂອງລັດ

ໃນໄລຍະເວລາ 5 ປີການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດແມ່ນຖືກຕ້ອງຕາມຂັ້ນຕອນລະບຽບກົດໝາຍ ແລະ ມີປະສິດທິພາບປະສິດທິຜົນໂດຍພື້ນຖານ, ແຕ່ມີບາງໂຄງການທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດໂດຍສະເພາະແມ່ນໂຄງການທີ່ຖືກເລື່ອນຈ່າຍແຕ່ສົກປີ 2015-2016 ເຖິງປະຈຸບັນພາກສ່ວນທີ່ກ່ຽວຂ້ອງກໍຍັງບໍ່ທັນເປັນເຈົ້າການໃນການປະສານງານ ແລະ ປະກອບເອກະສານເພື່ອຈະສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນ; ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນໄລຍະ 5 ປີ 2016-2020. ວຽກງານເສນາທິການມີຈຳນວນ 5 ໂຄງການມູນຄ່າທັງໝົດປະມານ 7.780 ລ້ານກີບ ເຊິ່ງບັນດາໂຄງການຈຳນວນໜຶ່ງແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແຕ່ ການຊຳລະງົບປະມານ ຍັງບໍ່ທັນສຳເລັດຕາມສັນຍາ ແລະ ໂຄງການຈຳນວນໜຶ່ງຈະສຳເລັດໃນແຜນການ 5 ປີຄັ້ງຕໍ່ໄປ.

### 8.2 ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA)

ທຶນຊ່ວຍເຫຼືອຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ, ສະມາຄົມຕ່າງໆ ເຊັ່ນ: ສສ ຫວຽດນາມ, ສປ ຈີນ , ລູກຊຳບວກ, ຊູແອດ, ສະວິດເຊີແລນ ແລະ ອົງການຈັດຕັ້ງອື່ນໆທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການຝຶກອົບຮົມ, ບຳລຸງພະນັກງານວຽກງານສື່ມວນຊົນ, ວຽກງານວັດທະນະທຳ ແລະ ວຽກງານທ່ອງທ່ຽວ ເຊິ່ງການຈັດຕັ້ງປະຕິບັດແມ່ນເປັນລັກສະນະ ເປັນຜູ້ຈັດຕັ້ງປະຕິບັດກິດຈະກຳໂຄງການບໍ່ໄດ້ເປັນເຈົ້າຂອງໂຄງການໂດຍກົງ.

ຈາກຜົນສຳເລັດໃນແຕ່ລະດ້ານທີ່ກ່າວມາຂ້າງເທິງນັ້ນ ຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຄືດັ່ງນີ້:

**9. ຈຸດອ່ອນ ແລະ ຂໍ້ຄົງຄ້າງ**

10. ການສ້າງພະນັກງານ-ບຸກຄະລາກອນໃຫ້ເປັນມືອາຊີບ ເພື່ອຮັບຮອງການປະຕິບັດໜ້າທີ່ວິຊາສະເພາະຍັງຈຳກັດ ແລະ ການນຳໃຊ້ວິຊາການທີ່ມີຄວາມຮູ້ຄວາມສາມາດຈຳນວນໜຶ່ງ ຍັງບໍ່ຖືກເປົ້າໝາຍ;
11. ການສ້າງ ແລະ ປັບປຸງກົດໝາຍ,ນິຕິກຳໃຕ້ກົດໝາຍຂອງ ຂະແໜງ ຖວທ ຍັງບໍ່ທັນຕອບສະໜອງໃນຄວາມຮຽກ ຮ້ອງຕ້ອງການຂອງວຽກງານ;
12. ການຈັດຕັ້ງປະຕິບັດແຜນພັດທະນາວຽກງານ ຖວທ ຍັງປະຕິບັດບໍ່ໄດ້ຄົບຖ້ວນ ແລະ ບໍ່ເປັນເອກະພາບ, ກິດຈະກຳການພັດທະນາຍັງບໍ່ຖືກຈັດຕັ້ງປະຕິບັດບໍ່ຄົບຖ້ວນ ແລະ ບໍ່ໄດ້ຕາມຈຸດປະສົງເປົ້າໝາຍ; ການຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ ລວມທັງເຕັກນິກວິຊາການ ແລະ ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ຍັງມີໜ້ອຍ;
13. ການຂຶ້ນແຜນໂຄງການລົງທຶນຂອງລັດບໍ່ທັນມີການຄົ້ນຄວ້າຢ່າງລະອຽດຖີ່ຖ້ວນ, ບາງໂຄງການທີ່ໄດ້ຈັດຕັ້ງໄປແລ້ວນັ້ນຍັງບໍ່ທັນມີຄຸນນະພາບ ແລະ ບໍ່ມີປະສິດທິຜົນດີເທົ່າທີ່ຄວນ;
14. ການປະກອບເອກະສານຖອນເງິນຍັງບໍ່ທັນລະອຽດ, ການສົ່ງເອກະສານຍັງຊັກຊ້າ, ເອກະສານທີ່ສົ່ງໄປກະຊວງແຜນການ ແລະ ການລົງທຶນ ເພື່ອຂໍຢັ້ງຢືນໄດ້ຜ່ານຫຼາຍຂັ້ນຕອນເຮັດໃຫ້ເອກະສານໃຊ້ເວລາດົນເຊິ່ງເຮັດໃຫ້ ການຊຳລະເງິນບໍ່ເປັນໄປຕາມແຜນ.
15. ການຄຸ້ມຄອງການລົງທຶນ ແລະ ການຊ່ວຍເຫຼືອເພື່ອການພັດທະນາໃນວຽກງານ ຖວທ ຍັງບໍ່ທັນເປັນລະບົບ,ການລົງທຶນຜ່ານປະຕູດຽວຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ;
16. ການຮ່ວມມືຍັງບໍ່ທັນໄດ້ເປັນເຈົ້າການໃນການຄົ້ນຄວ້າ ແລະ ຂະຫຍາຍການຮ່ວມມືໃຫ້ກວ້າງຂວາງເພື່ອດຶງດູດການຊ່ວຍເຫຼືອເພື່ອການພັດທະນາ ແລະ ການລົງທຶນໃນຂະແໜງ ຖວທ;
17. ການແກ້ໄຂບັນຫາຂໍ້ຂັດຄ້າງໃນໂຄງການທັນຊັບສິນເປັນທຶນຈຳນວນ 4 ໂຄງການທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວຍັງບໍ່ເປັນໄປຕາມຂັ້ນຕອນຂອງລະບຽບກົດໝາຍ;

## V. ສາເຫດທີ່ພາໃຫ້ມີຈຸດດີ, ຈຸດອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້

### 1. ສາເຫດທີ່ພາໃຫ້ມີຈຸດດີ

- ຍ້ອນມີມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີVIII, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກກະຊວງ ຖວທ ຄັ້ງທີ IV ແລະ ແຜນພັດທະນາວຽກງານຖວທ 5 ປີ (2016-2020)ໄດ້ກຳນົດທິດທາງລະອຽດຈະແຈ້ງ, ເປັນບ່ອນອີງພື້ນຖານໃຫ້ແກ່ວຽກງານ ຖວທ ພ້ອມທັງໄດ້ມີການຊີ້ນຳ-ນຳພາຢ່າງໃກ້ຊິດເລິກເຊິ່ງ ແລະ ຕໍ່ເນື່ອງ

ຂອງພັກ-ລັດຖະບານ ເວົ້າລວມ, ເວົ້າສະເພາະແມ່ນຄະນະນໍາຂອງກະຊວງ ຖວທ ຕໍ່ການຈັດຕັ້ງຜັນຂະຫຍາຍແຜນພັດທະນາດັ່ງກ່າວ.

- ຄະນະພັກຄະນະນໍາກະຊວງ ກໍ່ຄືການນໍາທຸກຂັ້ນ ເປັນແບບຢ່າງທີ່ດີໃນການປະຕິບັດວຽກງານ ແລະ ການດໍາລົງຊີວິດ,ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ໄດ້ປັບປຸງລະບົບກົງຈັກການຈັດຕັ້ງ, ສັບຊ້ອນພະນັກງານໃຫ້ສອດຄ່ອງເຂົ້າໃສ່ວຽກງານຕາມຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດຕົວຈິງຂອງພະນັກງານທຸກຂັ້ນ;
- ຍ້ອນຖັນແຖວພະນັກງານ-ລັດຖະກອນຂອງພວກເຮົາ ມີຄວາມສາມັກຄີເອກະພາບ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ລະບອບໃໝ່, ມີການຝຶກຝົນຫຼໍ່ຫຼອມທາງດ້ານການເມືອງ ແລະ ວິຊາສະເພາະ, ມີຄວາມຮັບຜິດຊອບສູງຕໍ່ວຽກງານ, ມີຫົວຄິດປະດິດສ້າງ ມີຄວາມຮັກວິຊາອາຊີບຂອງຕົນມີຄວາມເສຍສະລະອົດທົນ ແລະ ຜ່ານຜ່າອຸປະສັກນາໆປະການ ພ້ອມກັນແບກຫາບພາລະກິດ ຖວທ ໃຫ້ມີການພັດທະນາຂະຫຍາຍຕົວຢ່າງຕໍ່ເນື່ອງເທື່ອລະກ້າວ ແລະ ໜັກແໜ້ນ;
- ພະນັກງານວິຊາການຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ມີຄວາມເອົາໃຈໃສ່ເຄື່ອນໄຫວໂຄສະນາປຸກລະດົມຂະບວນການຂອງພໍ່ແມ່ປະຊາຊົນຢ່າງຕັ້ງໜ້າ;
- ຍ້ອນມີແບບແຜນວິທີເຮັດວຽກ ແລະ ມີການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນເປັນລະບົບດີ.

**2. ສາເຫດທີ່ພາໃຫ້ມີຈຸດອ່ອນ**

- ການພັດທະນາບຸກຄະລາກອນໃນຂະແໜງ ຖວທ ຍັງບໍ່ທັນເປັນລະບົບ ຕໍ່ເນື່ອງ ເຮັດໃຫ້ພະນັກງານ-ລັດຖະກອນ ທີ່ມີຄຸນນະພາບທາງດ້ານວິຊາການ ແລະ ການນໍາພາຂອງພວກເຮົາຍັງມີຈໍາກັດ ພ້ອມກັນນັ້ນພະນັກງານຈໍານວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມ ແລະ ກໍາແໜ້ນແນວທາງນະໂຍບາຍຂອງພັກ-ລັດ ໃນແຕ່ລະໄລຍະ, ຂາດຄວາມເປັນເຈົ້າການ, ຂາດການປະດິດສ້າງ, ມີແນວຄິດເອື່ອຍອີງ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ແລະ ທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃນບາງຄັ້ງຄາວ, ຍັງມີພະນັກງານວິຊາການຈານວນໜຶ່ງ ຍັງບໍ່ທັນກະຕືລືລົ້ນ ຕໍ່ການຍົກລະດັບທາງດ້ານວິຊາການ;
- ການບໍາລຸງ, ກໍ່ສ້າງພະນັກງານ-ບຸກຄະລາກອນ ປ່ຽນແທນຍັງບໍ່ທັນສາມາດຕອບສະໜອງໄດ້ຕໍ່ຄວາມຕ້ອງການຕົວຈິງຂອງຂະແໜງການ ແລະ ການກໍານົດເປົ້າໝາຍ ເງື່ອນໄຂພະນັກງານນໍາພາຮຸ່ນສືບທອດປ່ຽນແທນຍັງບໍ່ໄປຕາມທິດທີ່ກໍານົດໄວ້, ການບັນຈຸສັບຊ້ອນພະນັກງານໃສ່ຕໍາແໜ່ງ

ງານ ບໍ່ແທດເໝາະກັບຄວາມຮູ້ຄວາມສາມາດຂອງແຕ່ລະຄົນເຮັດໃຫ້ມີສະພາບພະນັກງານເຫຼືອບໍ່ພໍ;

- ການຜັດປ່ຽນສັບຊ້ອນບຸກຄະລາກອນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຈຳນວນໜຶ່ງ ບໍ່ທັນສອດຄ່ອງຕາມສະພາບຄວາມເປັນຈິງທາງດ້ານຄວາມສາມາດ, ປະສົບການດ້ານວິຊາສະເພາະຂອງພະນັກງານ;
- ການຄຸ້ມຄອງບໍລິຫານຍັງບໍ່ເປັນລະບົບເຂັ້ມແຂງທັນສະໄໝ, ຍັງກະແຈກກະຈາຍບໍ່ປະຕິບັດລະບົບຜ່ານປະຕູດຽວ, ບໍ່ມີປະສິດທິຜົນ ແລະ ປະສິດພາບເທົ່າທີ່ຄວນ ລວມທັງການຈັດຕັ້ງປະຕິບັດນິຕິກຳຕ່າງໆຂອງຂະແໜງການຍັງບໍ່ເຂັ້ມງວດ ແລະ ການນຳພາວຽກງານກວດກາພາຍໃນຍັງບໍ່ທັນເຂັ້ມແຂງ , ວິທີການ ແລະ ການກຳນົດມາດຕະການແກ້ໄຂຕໍ່ປະກົດການຫຍໍ້ທໍ້ບໍ່ທັນຊັດເຈນ ແລະ ບໍ່ເດັດຂາດ;
- ການຈັດຕັ້ງປະຕິບັດແຜນພັດທະນາວຽກງານ ຖວທ ຍັງບໍ່ທັນເປັນເອກະພາບ, ຄົບຖ້ວນ ແລະ ບໍ່ບັນລຸຕາມຈຸດປະສົງ ເປົ້າໝາຍເທົ່າທີຄວນ;
- ການຄົ້ນຄວ້າ, ສ້າງ ແລະ ປັບປຸງ ຜະລິດຕະພັນ ໃນຂະແໜງການ ຖວທ ຍັງບໍ່ທັນມີຄວາມຫຼາກຫຼາຍ ທາງດ້ານປະລິມານ ແລະ ຄຸນນະພາບ. ການຂຸດຄົ້ນຄວ້າທ່າແຮງຂອງຂະແໜງການເພື່ອຍາດແຍ່ງການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ຍັງມີໜ້ອຍ;
- ການຄົ້ນຄວ້າຊອກຫາຕະຫຼາດຜະລິດຕະພັນໃນຂະແໜງ ຖວທ ຍັງເຮັດບໍ່ທັນໄດ້ດີ ແລະ ຍັງບໍ່ທັນນຳໃຊ້ທຸກກຳລັງແຮງແຫຼ່ງລາຍຮັບວິຊາການເຂົ້າໃນການພັດທະນາວຽກງານ ຖວທ ຕາມນະໂຍບາຍຂອງລັດເທົ່າທີ່ຄວນ;
- ພື້ນຖານວັດຖຸ-ເຕັກນິກ, ບຸກຄະລາກອນ, ງົບປະມານທີ່ຕອບສະໜອງໃຫ້ແກ່ວຽກງານ ຖວທ ຍັງບໍ່ທັນສາມາດຕອບສະໜອງໄດ້ກັບຄວາມຕ້ອງການຂອງການພັດທະນາ ໃນໄລຍະໃໝ່;
- ວຽກງານຖະແຫຼ່ງຂ່າວ-ສື່ມວນຊົນ ຍັງບໍ່ທັນຮັບປະກັນດ້ານເນື້ອໃນ, ຂໍ້ມູນຂ່າວສານ ຍັງບໍ່ທັນສາມາດຕອບສະໜອງໄດ້ກັບຄວາມຕ້ອງການຕາມຍຸກສະໄໝ ແລະ ການເຊື່ອມໂຍງສາກົນຍັງບໍ່ທັນຮອບດ້ານ;
- ບາງອົງການສື່ມວນຊົນຍັງບໍ່ທັນມີການຊີ້ນຳ ແລະ ຈັດຕັ້ງປະຕິບັດໃນການໂຄສະນາເຜີຍແຜ່ດ້ານເນື້ອໃນ, ການຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງຍັງບໍ່ທັນເຂັ້ມງວດ.

### 3. ບົດຮຽນທີ່ຖອດຖອນໄດ້

1) ບາງບັນຫາທີ່ຄວນຈະສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃນຕໍ່ໜ້າ

- ຄະນະພັກຄະນະນຳກະຊວງ ແຕ່ລະຂັ້ນສືບຕໍ່ເປັນແບບຢ່າງໃນການປະຕິບັດວຽກງານຕາມຫຼັກການແບບແຜນວິທີເຮັດວຽກທີ່ມີວິທະຍາສາດທັນກັບຍຸກສະໄໝ;

- ຄະນະພັກຄະນະນຳກະຊວງ ສືບຕໍ່ສົ່ງເສີມການຫັນລົງສູ່ທ້ອງຖິ່ນຕິດພັນກັບຮາກຖານ, ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກໃຫ້ເລິກເຊິ່ງທົ່ວເຖິງ, ສະກັດກັ້ນ ແລະ ຕອບໂຕ້ຫາງສຽງທີ່ບໍ່ດີ, ພ້ອມກັນນັ້ນກໍ່ເປັນການກະຕຸ້ນໃຫ້ປະຊາຊົນມີການຜະລິດ ແລະ ສ້າງຂະບວນການຮັກຊາດພັດທະນາໃຫ້ຫຼາຍຂຶ້ນ;
- ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຕາມທິດນຳຂອງລັດຖະບານ, ສ້າງ ແລະ ບຳລຸງຍົກລະດັບພະນັກງານເພື່ອຮອງຮັບຄວາມເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງການ ແລະ ຮັບປະກັນການສືບທອດຕໍ່ເນື່ອງຂອງພະນັກງານໃນອະນາຄົດ ໂດຍເອົາໃຈໃສ່ຕໍ່ພະນັກງານເພດຍິງ ແລະ ຊົນເຜົ່າໃຫ້ເປັນບູລິມະສິດ;
- ສືບຕໍ່ສ້າງພະນັກງານໃນຂະແໜງ ຖວທ ໃຫ້ມີຄຸນທາດດ້ານການເມືອງ, ຄວາມສາມັກຄີເປັນເອກະພາບ,ມີຈັນຍາບັນກຳແໜ້ນ, ເຊື່ອມຊຶມ, ເຜີຍແຜ່ເຮັດໜ້າທີ່ການເມືອງ ໄປຕາມສີ່ລັກສະນະຂອງນະໂຍບາຍພັກ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງກຳລັງແຮງສັງລວມທົ່ວຂະແໜງການໃຫ້ສູງຂຶ້ນຕື່ມ;
- ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆເພື່ອຕອບສະໜອງໃຫ້ແກ່ການຄຸ້ມຄອງ ແລະ ສົ່ງເສີມວຽກງານ ຖວທ ໃນໄລຍະໃໝ່ໃຫ້ມີປະສິດທິພາບສູງ ແລະ ເປັນເອກະພາບໃນທົ່ວປະເທດ;
- ຕັ້ງໜ້າຄົ້ນຄວ້າຮໍ່າຮຽນວິຊາສະເພາະເຕັກນິກວິທະຍາສາດໃຫ້ສົມຄູ່ກັບໜ້າທີ່ວຽກງານ, ມີຫົວຄິດປະດິດສ້າງຕໍ່ວຽກງານຂອງຕົນຢ່າງມີຄວາມຮັບຜິດຊອບ;
- ສືບຕໍ່ຂຸດຄົ້ນທ່າແຮງບົ່ມຊ້ອນຂອງຂະແໜງ ຖວທ ເພື່ອສ້າງລາຍຮັບວິຊາການໃຫ້ເພີ່ມຂຶ້ນ, ປຸກລະດົມທຸກພາກສ່ວນທັງພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມໃນການພັດທະນາໃຫ້ມີຄວາມເຂັ້ມແຂງ;
- ອອກແຮງຍາດແຍ່ງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ ແລະ ບັນດາປະເທດເພື່ອນມິດປະກອບສ່ວນເຂົ້າໃນການພັດທະນາວຽກງານ ຖວທ;
- ການວາງແຜນ ແລະ ພັດທະນາວຽກງານ ຖວທ ຕ້ອງມີຈຸດສຸມ ແລະ ເປັນລະບົບຄົບຊຸດໄປຕາມວິໄສທັດ 2030, ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາວຽກງານຖວທ 5 ປີໂດຍມີການຄຸ້ມຄອງກວດກາ ແລະ ປະເມີນຜົນການປະຕິບັດວຽກງານດັ່ງກ່າວຢ່າງຕໍ່ເນື່ອງ;
- ສືບຕໍ່ປະຕິບັດວຽກງານຢ່າງມີຈຸດສຸມ, ມີການກຳນົດເວລາ, ມີງົບປະມານ ແລະ ມີການແບ່ງຄວາມຮັບຜິດຊອບໃຫ້ກົມກອງລະອຽດຈຶ່ງພາໃຫ້ພວກເຮົາສາມາດປະຕິບັດບັນດາວຽກງານຂອງໂຄງການຂອງລັດຖະບານມອບໝາຍໃຫ້ສຳເລັດຜົນເຊັ່ນ: ການນຳສະເໜີສຽງແຄນເຊື້ອຊາດລາວເປັນມໍລະດົກນາມມະທຳຂອງໂລກ, ການສະເໜີເອົາທົ່ງໄຫຫີນເປັນມໍລະດົກໂລກ; ການສະແດງ, ໂຄສະນາ

ໃນເຫດການສຳຄັນຕ່າງໆຂອງລັດຖະບານ, ໂຄງການປີທ່ອງທ່ຽວລາວປີ 2018,ໂຄງການປີທ່ອງທ່ຽວລາວ-ຈີນ 2019;

- ສືບຕໍ່ສົມທົບກັບຂະແໜງການກ່ຽວຂ້ອງ ສ້າງ ແລະ ພັດທະນາສີມືແຮງງານ ໃນຂະແໜງວິຊາຊີບ ທີ່ຕິດພັນກັບວຽກງານ ຖວທ ໃຫ້ດີ, ເຖິງແມ່ນວ່າຈະບໍ່ທັນຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມຢ່າງພຽງພໍແຕ່ພວກເຮົາກໍມີຄວາມພະຍາຍາມຢ່າງຕັ້ງໜ້າ;
- ຊຸກຍູ້ ແລະ ສົ່ງເສີມການມີສ່ວນຮ່ວມ ລະຫວ່າງສູນກາງ, ທ້ອງຖິ່ນ ແລະ ພາກທຸລະກິດທີ່ຕິດພັນກັບຂະແໜງ ຖວທ ໃຫ້ມີຄວາມເຂັ້ມແຂງເສີມຂະຫຍາຍທ່າແຮງບົ່ມຊ້ອນເພື່ອປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ;
- ເພີ່ມທະວີການຄຸ້ມຄອງ, ຊຸກຍູ້ , ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານ ຖວທ ໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ.

2) ບາງບັນຫາທີ່ຈະຕ້ອງຈະປັບປຸງແກ້ໄຂໃນຕໍ່ໜ້າ.

- ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຕ້ອງໃຫ້ແທດເໝາະກັບໂຄງປະກອບຂອງວຽກງານ ,ສ້າງຄວາມເຂັ້ມແຂງໃນລະດັບທ້ອງຖິ່ນເປັນປັດໄຈພື້ນຖານແກ່ຜົນສຳເລັດໃນການພັດທະນາ ແລະ ສົ່ງເສີມວຽກງານ ຖວທ ພະນັກງານຕ້ອງມີຈຳນວນພຽງພໍ, ມີຄຸນນະພາບດີ, ຮັບປະກັນລັກສະນະສືບທອດ, ດັ່ງນັ້ນ ການສ້າງບຸກຄະລາກອນໜຸ່ມທີ່ມີຄວາມສາມາດ, ມີປະສົບການມາຮັບຜິດຊອບຊີ້ນຳວຽກງານ ຖວທ ໃນຕໍ່ໜ້າ ຕ້ອງມີຈຸດສຸມ, ພ້ອມນີ້ກໍ່ຕ້ອງປັບປຸງແບບແຜນວິທີເຮັດວຽກໃຫ້ວ່ອງໄວ, ທັນສະໄໝ ແລະ ຜ່ານລະບົບປະຕູດຽວ;
- ປັບປຸງ ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ພາຫະນະ, ອຸປະກອນຮັບໃຊ້ ແລະ ຊັບສິນຂອງລັດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບ;
- ຊຸກຍູ້ສ້າງ, ປັບປຸງ ບາງກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍໃນຂະແໜງການ ຖວທ ໃຫ້ເປັນລະບົບຄົບຊຸດ, ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ສາມາດຈັດຕັ້ງປະຕິໃຫ້ມີປະສິດທິພາບ;
- ຄວນປັບປຸງໃນການຄົ້ນຄວ້າ ແລະ ປະສານສົມທົບກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ຢູ່ສູນກາງ ແລະທ້ອງຖິ່ນ ໃນການສ້າງ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາວຽກງານ ຖວທ ໃຫ້ໄປທິດທາງດຽວກັນ;
- ຄວນສຸມໃສ່ຄົ້ນຄວ້າ ກ່ຽວກັບວົງຈອນການພັດທະນາການບໍລິການໃນຂະແໜງ ຖວທ ໃຫ້ເກີດມີຜົນຕອບແທນທາງເສດຖະກິດ ເພື່ອສ້າງລາຍຮັບໃຫ້ເພີ່ມຂຶ້ນ;

- ປັບປຸງກົນໄກການປະສານງານ ແລະ ຄຸ້ມຄອງບໍລິການໂດຍທັນເປັນທັນສະໄໝເຮັດໃຫ້ການປະສານງານມີຄວາມວ່ອງໄວ ແລະ ທັນເວລາ ພ້ອມກັນນັ້ນກໍ່ຕ້ອງປັບປຸງແກ້ໄຂລະບົບ ແລະ ຂອດປະສານງານ ໃນການຍາດແຍ່ງເອົາການຊ່ວຍເຫຼືອ ແລະ ການລົງທຶນຈາກພາກລັດ ແລະ ທຸລະກິດທັງພາຍໃນ ແລະ ຕ່າງປະເທດໂດຍຜ່ານລະບົບປະຕູດຽວ;
- ຄວນປັບປຸງ ການມີສ່ວນຮ່ວມໃນການຄົ້ນຄວ້າ ແກ້ໄຂບັນຫາຕ່າງໆ ທາງດ້ານວິຊາການ ລະຫວ່າງພາກລັດ ແລະ ພາກທຸລະກິດໃນຂະແໜງ ຖວທ ໃຫ້ຫຼາຍຂຶ້ນ;
- ປັບປຸງໃນການສ້າງໂຄງລ່າງພື້ນຖານເພື່ອເປັນແຫຼ່ງບໍລິການທາງດ້ານວັດທະນະທຳໃຫ້ພຽງພໍເຊັ່ນ: ຫໍພິພິທະພັນ, ສູນວັດທະນະທຳເດັກ, ຫ້ອງວາງສະແດງ, ຫໍສະໝຸດ, ຫ້ອງອ່ານ ແລະ ອື່ນໆ;
- ເອົາໃຈໃສ່ ປັບປຸງບັນຫາທີ່ຍັງຄົງຄ້າງໃນການຈັດລະດັບມາດຕະຖານແຫຼ່ງທ່ອງທ່ຽວຂອງ ສປປ ລາວ ໃຫ້ສຳເລັດ ແລະ ປັບປຸງ ໂຄງລ່າງພື້ນຖານດ້ານການທ່ອງທ່ຽວ ໃຫ້ມີຄຸນນະພາບ, ສ້າງວົງຈອນການທ່ອງທ່ຽວໃຫ້ເປັນຜະລິດຕະພັນໃໝ່ເພື່ອດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວໃຫ້ຫຼາຍຂຶ້ນ.

# ພາກທີ III

# ແຜນພັດທະນາວຽກງານ ຖວທ 5 ປີ (2021-2025)

## I. ບ່ອນອີງ

- ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມຕ່າງໆຈາກກອງປະຊຸມຄົບຄະນະບໍລິຫານງານສູນກາງພັກສະໄໝທີ XI;
- ຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 05/ນຍ, ລົງວັນທີ 21 ພຶດສະພາ 2019 ວ່າດ້ວຍການສ້າງແຜນພັດ ທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX (2021-2025);
- ວິໄສທັດຮອດປີ 2030, ຍຸດທະສາດ 2025 ແລະແຜນພັດທະນາວຽກງານຖວທໄລຍະ 5 ປີ (2016-2020);
- ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## II. ການວິເຄາະຈຸດດີ, ຈຸດອ່ອນ, ກາລະໂອກາດ ແລະ ສິ່ງທ້າທາຍ

### 1. ຈຸດດີ:

- ມີລະບົບສາຍການຈັດຕັ້ງຂອງຂະແໜງ ຖວທ ແຕ່ສູນກາງ ຮອດທ້ອງຖິ່ນໄດ້ຮັບການປັບປຸງຢ່າງຕໍ່ເນື່ອງ;
- ຄະນະນຳແຕ່ລະຂັ້ນ ມີຄວາມຮັບຜິດຊອບສູງໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດາແຜນງານ,ໂຄງການຕ່າງໆຂອງກະຊວງ;
- ມີຖັນແຖວພະນັກງານ ແລະ ບຸກຄະລາກອນໜຸ່ມນ້ອຍ ມີລະດັບຄວາມຮູ້ຄວາມສາມາດທີ່ແນ່ນອນ , ມີຄຸນທາດການເມືອງ, ຈັນຍາບັນ ເຊິ່ງໄດ້ຜ່ານການກໍ່ສ້າງ, ສຶກສາຄົ້ນຄວ້າຢ່າງເປັນລະບົບທັງຢູ່ພາຍໃນ ແລະ ຕ່າງປະເທດ;
- ມີພະນັກງານ, ນັກວິຊາການທີ່ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າຕັດສິນໃຈ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວິຊາສະເພາະຂອງຕົນ ແລະ ຮັບປະກັນຄຸນນະພາບຂອງວຽກງານ ຖວທ;
- ມີບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ;
- ມີລາຍຮັບວິຊາການຈຳນວນໜຶ່ງທີ່ໄດ້ປະກອບສ່ວນນຳໃຊ້ເຂົ້າໃນການພັດທະນາ ວຽກງານ ຖວທ;
- ມີການຮ່ວມມື, ປະສານງານ ແລະ ເຊື່ອມໂຍງ ກັບບັນດາປະເທດຢູ່ໃນພາກພື້ນ ແລະ ສາກົນ;
- ເປັນກະບອກສຽງອັນແຫຼມຄົມໃຫ້ແກ່ພັກ-ລັດທັງລວງກວ້າງ ແລະ ລວງເລິກ;
- ໄດ້ມີຄວາມສາມັກຄີເປັນປຶກແຜ່ນເປັນກ້ອນກຳລັງແຮງສຸມໃສ່ໜ້າທີ່ວິຊາສະເພາະຂອງຕົນ;

- ມີພື້ນຖານໂຄງລ່າງດ້ານການຮັບ-ສົ່ງຂໍ້ມູນຂ່າວສານ, ມີອຸປະກອນເຕັກນິກທີ່ທັນສະໄໝຈຳນວນໜຶ່ງ ມີສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ ສາມາດນຳເອົາຂໍ້ມູນຂ່າວສານເຂົ້າເຖິງມວນຊົນທັງພາຍໃນ ແລະ ຕ່າງປະເທດ;
- ມີມູນເຊື້ອວັດທະນະທຳທີ່ຫຼາກຫຼາຍ, ມີວັດຖຸບູຮານທີ່ລ້ຳຄ່າ, ມີຮີດຄອງປະເພນີອັນດີງາມ, ມີວິຖີການດຳລົງຊີວິດທີ່ເປັນເອກະລັກສະເພາະ ແລະ ອະລິຍະທຳທາງດ້ານຈິດໃຈ ຊຶ່ງເປັນຈຸດເດັ່ນຂອງວັດທະນະທຳລາວ.

**2. ຈຸດອ່ອນ**:

- ບຸກຄະລາກອນ ທີ່ມີຄຸນນະພາບໃນຂະແໜງ ຖວທ ຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານວິຊາສະເພາະ ແລະ ການກໍ່ສ້າງພະນັກງານນຳພາຮຸ່ນສືບທອດປ່ຽນແທນຍັງບໍ່ໄປຕາມທິດທີ່ກຳນົດໄວ້;
- ຈັນຍາບັນຂອງພະນັກງານ, ນັກວິຊາການໃນຂະແໜງ ຖວທ ຈຳນວນໜຶ່ງຍັງບໍ່ທັນໜັກແໜ້ນ;
- ການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃນຂະແໜງ ຖວທ ຍັງບໍ່ສາມາດເຊື່ອມສານຢ່າງທົ່ວເຖິງ;
- ການຄົ້ນຄວ້າລະດົມແຫຼ່ງທຶນຈາກພາກສ່ວນທຸລະກິດ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດເພື່ອພັດທະນາຂະແໜງ ຖວທ ຍັງບໍ່ເຮັດໄດ້ດີເທົ່າທີ່ຄວນ;
- ການຄົ້ນຄວ້າ ແລະ ພັດທະນາຜະລິດຕະພັນໃນຂະແໜງ ຖວທ ເພື່ອສ້າງລາຍຮັບວິຊາການຍັງບໍ່ທັນເຂັ້ມແຂງ;
- ການຄຸ້ມຄອງບໍລິຫານລັດຂອງວຽກງານ ຖວທ ຍັງບໍ່ທັນເປັນລະບົບທັນສະໄໝ, ການຄຸ້ມຄອງ ແລະ ນຳໃຊ້ລາຍຮັບວິຊາການຂອງກົມ, ກອງທັງສູນກາງ ແລະ ທ້ອງຖິ່ນຍັງບໍ່ທັນຮັດກຸມ ແລະ ລະບົບຜ່ານປະຕູດຽວ ຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ;
- ການສ້າງປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂະແໜງ ຖວທ ຍັງບໍ່ທັນເປັນລະບົບ, ບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ການປະເມີນຍັງບໍ່ຕໍ່ເນື່ອງ ແລະ ການກວດກາຍັງບໍ່ທັນຮັດກຸມເທົ່າທີ່ຄວນ;
- ພື້ນຖານໂຄງລ່າງ, ວັດຖຸປະກອນ ແລະ ເຄື່ອງມືຮັບໃຊ້ໃນຂະແໜງ ຖວທ ຈານວນໜຶ່ງຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່;
- ການຕອບໂຕ້, ສະກັດກັ້ນຕໍ່ຂໍ້ມູນບິດເບືອນທີ່ເປັນພິດໄພ, ມີຜົນສະທ້ອນຕໍ່ສັງຄົມຍັງຊັກຊ້າ ແລະ ບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ, ການໃຊ້ສັບພາສາຢູ່ໃນສື່ຕ່າງໆ ຍັງບໍ່ທັນຊັດເຈນ ແລະ ບໍ່ເປັນເອກະພາບກັນ;

- ການກວດກາ, ຕິດຕາມ ແລະ ປະເມີນຜົນ ການສ້າງຄອບຄົວ ແລະ ບ້ານວັດທະນະທາ ທີ່ໄດ້ປະກາດຮັບຮອງແລ້ວນັ້ນ ຍັງບໍ່ທັນຕໍ່ເນື່ອງ;
- ການຟື້ນຟູ, ບູລະນະ, ປົກປັກຮັກສາ, ຄຸ້ມຄອງວັດຖຸບູຮານ, ສະຖານບູຮານ ແລະ ສະຖານທີ່ປະຫວັດສາດຕ່າງໆ ທີ່ເປັນມໍຣະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດລະດັບທ້ອງຖິ່ນ, ລະດັບຊາດຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;
- ການຄຸ້ມຄອງແຫຼ່ງທ່ອງທ່ຽວຍັງບໍ່ທັນທົ່ວເຖິງ ແລະ ການພັດທະນາຜະລິດຕະພັນທ່ອງທ່ຽວຍັງບໍ່ທັນມີຄວາມຫຼາກຫຼາຍ;
- ການໂຄສະນາເຜີຍແຜ່ດ້ານຂໍ້ມູນຂ່າວສານການທ່ອງທ່ຽວ ຍັງບໍ່ທັນເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍເທົ່າທີ່ຄວນ;
- ການສ້າງສີມືແຮງງານວິຊາຊີບໃນຂະແໜງ ຖວທ ຍັງມີຈຳນວນໜ້ອຍ ບໍ່ສາມາດຕອບສະໜອງກັບຄວາມຕ້ອງ ການ ຂອງສັງຄົມ;
- ການແກ້ໄຂບັນຫາຜົນການກວດກາ, ກວດສອບບັນຫາຕ່າງໆ ຍັງຊັກຊ້າມີລັກສະນະແກ່ຍາວ ແລະບໍ່ຮັດກຸມ.

**3. ກາລະໂອກາດ**

- ພັກ-ລັດຖະບານໄດ້ມີນະໂຍບາຍ ກຳນົດເອົາວຽກງານ ຖວທ ເປັນໃຈກາງໃນການໂຄສະນາເຜີຍແຜ່ ແລະ ເປັນກະບອກສຽງອັນແຫຼມຄົມ, ວັດທະນະທຳໄລຍະໃໝ່ເປັນໃຈກາງ ແລະ ພື້ນຖານແຫ່ງຄວາມຍືນຍົງຄົງຕົວຂອງຊາດ, ວຽກງານທ່ອງທ່ຽວເປັນບູລິມະສິດໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຄຸ້ມຄອງ-ບໍລິຫານລັດດ້ວຍກົດໝາຍ ຢ່າງມີປະສິດທິພາບ-ປະສິດທິຜົນສູງ;
- ປະເທດພວກເຮົາມີສັນຕິພາບ, ສະເຖຍລະພາບທາງດ້ານການເມືອງ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍດີ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ແລະ ປັບປຸງໃນລະດັບທີ່ດີ;
- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄດ້ເປີດກວ້າງການເຊື່ອມໂຍງ ແລະ ຮ່ວມມືກັບສາກົນ ເຊິ່ງໄດ້ສ້າງເງື່ອນໄຂໃນການໂຄສະນາຕໍ່ເວທີສາກົນຢ່າງກວ້າງຂວາງ ແລະ ທັງເປັນການດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດໃນຂະແໜງ ຖວທ;
- ແນວທາງນະໂຍບາຍຂອງພັກໄດ້ອຳນວຍຄວາມສະດວກໃຫ້ແກ່ການສ້າງແຫຼ່ງລາຍຮັບວິຊາການໃນຂະແໜງ ຖວທ ໃຫ້ສາມາດກຸ້ມຕົນເອງເທື່ອລະກ້າວໃນລະດັບໃດໜຶ່ງ;

- ການເຂົ້າເປັນສະມາຊິກອາຊຽນ ແລະ ອົງການຈັດຕັ້ງສາກົນອື່ນໆຂອງ ສປປ ລາວ ເຮັດໃຫ້ຂະແໜງ ຖວທ ມີໂອ ກາດພັດທະນາ, ຮຽນຮູ້ເອົາສິ່ງໃໝ່ໆ ໃນດ້ານວິຊາການຢ່າງກວ້າງຂວາງ;
- ສປປ ລາວ ມີຄວາມອຸດົມສູມບູນທາງດ້ານຊັບພະຍາກອນທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນທ່າແຮງໃຫ້ແກ່ການພັດທະນາວຽກງານ ຖວທ;

**4. ສິ່ງທ້າທ້າຍ**

- ຄວາມບໍ່ສະຖຽນລະພາບທາງດ້ານການເມືອງ, ການກໍ່ການຮ້າຍ,ບັນຫາຢາເສບຕິດ,ໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງພະຍາດ ແລະ ອື່ນໆ ໄດ້ສ້າງຜົນກະທົບຕໍ່ການພັດທະນາວຽກງານ ຖວທ;
- ວິກິດການທາງດ້ານເສດຖະກິດ, ສົງຄາມການຄ້າລະຫວ່າງປະເທດມະຫາອຳນາດໃນໂລກ ໄດ້ເຮັດໃຫ້ລາຄາສິນຄ້າຖີບໂຕສູງຂຶ້ນສົ່ງຜົນກະທົບໂດຍກົງຕໍ່ລາຄາການບໍລິການໃນຂະແໜງ ຖວທ ;
- ການພັດທະນາພື້ນຖານໂຄງລ່າງ, ເຕັກໂນໂລຊີ ໃນຂະແໜງ ຖວທ ຍັງບໍ່ທັນກັບການຂະຫຍາຍຕົວທາງດ້ານເຕັກໂນໂລຊີແຫ່ງຍຸກສະໄໝ;
- ສື່ສັງຄົມອອນລາຍ ມີບົດບາດ ແລະ ອິດທິພົນຢ່າງກວ້າງຂວາງ ຕໍ່ການດຳລົງຊີວິດຂອງປະຊາຊົນ ເຊິ່ງກາຍເປັນພາຫະນະໃນການໂຄສະນາຊວນເຊື່ອທາງດ້ານບວກ ແລະ ດ້ານລົບ;
- ຄວາມສາມາດໃນການແຂ່ງຂັນທາງດ້ານການຕະຫຼາດ, ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໃນຂະແໜງ ຖວທ ຍັງບໍ່ທັນເຂັ້ມແຂງ;
- ສະພາບການທົດຖອຍທາງດ້ານເສດຖະກິດ ແລະ ການເງິນ ຂອງປະເທດເຮົາໄດ້ສົ່ງຜົນກະທົບໂດຍກົງຕໍ່ ໂຄງການ ພັດທະນາວຽກງານ ຖວທ ຈຳນວນໜຶ່ງ ເຊິ່ງບໍ່ສາມາດຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນທີ່ວາງໄວ້;
- ການເປີດກວ້າງເຊື່ອມໂຍງທາງດ້ານວັດທະນະທຳ ກັບພາກພື້ນ ແລະ ສາກົນໃນຍຸກໂລກາພິວັດ ມີທັງດ້ານບວກ ແລະ ດ້ານລົບໄປຄຽງຄູ່ກັນ, ພ້ອມກັນນັ້ນ ກໍ່ຍັງມີອາຊະຍາກອນຂ້າມຊາດຈຳນວນໜຶ່ງ ລັກລອບຊື້-ຂາຍວັດຖຸບູຮານ ແລະ ທຳລາຍແຫຼ່ງບູຮານວິທະຍາບາງແຫ່ງ;
- ການພັດທະນາໃນບາງຂະແໜງການຍັງຂາດການສຶກສາຄົ້ນຄວ້າຢ່າງລະອຽດ ພາໃຫ້ເກີດຜົນກະທົບຕໍ່ການອານຸລັກຮັກສາວັດທະນະທຳ, ການຮຽນແບບວັດທະນະທາຕາເວັນຕົກ ຫຼື ວັດທະນະທາອື່ນໄດ້ເປັນສິ່ງທ້າທາຍຕໍ່ການປູກຈິດສຳນຶກໃຫ້ແກ່ຄົນຮຸ່ນໜຸ່ມໃນປັດຈຸບັນ;
- ຍຸດທະສາດໃນການໂຄສະນາສົ່ງເສີມການຕະຫຼາດການທ່ອງທ່ຽວຂອງປະເທດອ້ອມຂ້າງມີຄວາມເຂັ້ມແຂງ, ເປັນລະບົບ,ຜະລິດຕະພັນການທ່ອງທ່ຽວ, ການບໍລິການການທ່ອງທ່ຽວ ມີຄວາມຫຼາກຫຼາຍ ແລະມີຄຸນນະພາບສູງກວ່າ;

- ສປປ ລາວ ຍັງບໍ່ທັນເປັນຈຸດໝາຍປາຍທາງການທ່ອງທ່ຽວຫຼັກຂອງບັນດານັກທ່ອງທ່ຽວສາກົນ, ເປັນພຽງທາງຜ່ານເທົ່ານັ້ນ; ສະນັ້ນ ເຮັດໃຫ້ປະເທດເຮົາ ເສຍຜົນປະໂຫຍດໃນອັດຕາສູງພໍສົມຄວນ;

## III. ຈຸດໝາຍລວມ, ເປົ້າໝາຍ, ຄາດໝາຍຕົ້ນຕໍ ແລະ ແຜນວຽກຈຸດສຸມ

❖ **ຈຸດໝາຍລວມຂອງ ຖວທ**

*"ການນໍາພາ ເຂັ້ມແຂງ, ການຄຸ້ມຄອງ ສັກສິດ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໃຫ້ມີຄຸນນະພາບ, ທັນເປັນອຸດສາຫະກໍາ ທັນສະໄໝ, ປອດໄພ ແລະ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມ ເພື່ອຄວາມຍືນຍົງ"*

### 1. <u>ວຽກງານຖະແຫຼງຂ່າວ</u>

### 1.1 ຈຸດໝາຍລວມຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ

**ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ ທັງລວງເລິກ ແລະ ລວງກວ້າງ, ສ້າງຄວາມເຂັ້ມແຂງ ແລະທັນໄປສູ່ກຸ້ມຕົນເອງເທື່ອລະກ້າວ. ພົວພັນເຊື່ອມໂຍງກັບສື່ມວນຊົນສາກົນ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ສ້າງບຸກຄະລາກອນ ທີ່ໄດ້ມາດຕະຖານສື່ມວນຊົນລາວ ສົມຄູ່ກັບຍຸກສະໄໝ.**

### 1.2 ເປົ້າໝາຍຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ

**<u>ເປົ້າໝາຍທີ 1</u>**: ພັດທະນາບຸກຄະລາກອນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາການ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;

**<u>ເປົ້າໝາຍທີ 2</u>**: ພັດທະນາ ແລະ ຄຸ້ມຄອງສື່ມວນຊົນລາວໃຫ້ເປັນລະບົບທັນສະໄໝ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ, ມີຄຸນນະພາບ, ມີຄວາມຫຼາກຫຼາຍ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ;

**<u>ເປົ້າໝາຍທີ 3</u>**: ສ້າງ, ປັບປຸງ ແລະ ເຜີຍແຜ່ບັນດາກົດໝາຍແລະນິຕິກໍາຕ່າງໆໃນຂະແໜງສື່ມວນຊົນໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;

**<u>ເປົ້າໝາຍທີ 4</u>**: ສ້າງຄວາມເຂັ້ມແຂງ ໃນການພັດທະນາຜະລິດຕະພັນຂອງສື່ມວນຊົນ ໃຫ້ມີຄຸນນະພາບເພື່ອສ້າງ ເງື່ອນໄຂຊຸດຄົ້ນແຫຼ່ງລາຍຮັບວິຊາການສາມາດກຸ້ມຕົນເອງ ເທື່ອລະກ້າວ;

**ເປົ້າໝາຍທີ 5**: ເສີມຂະຫຍາຍການພົວພັນຮ່ວມມືວຽກງານຖະແຫຼງຂ່າວ-ສື່ມວນຊົນກັບສາກົນ; ຊຸກຍູ້ ແລະ ສົ່ງ ເສີມການລົງທຶນລະຫວ່າງພາກລັດ ແລະ ພາກເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດໃນວຽກງານຖະແຫຼງຂ່າວ-ສື່ມວນຊົນໃຫ້ກວ້າງຂວາງ.

**1.3 ຄາດໝາຍຕົ້ນຕໍຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ**

**1) ສູ້ຊົນພັດທະນາບຸກຄະລາກອນສື່ມວນຊົນໃຫ້ມີຄວາມຮູ້ຄວາມສາມາດທາງດ້ານທິດສະດີການເມືອງ, ດ້ານນິຕິກໍາແລະ ວິຊາການໃຫ້ໄດ້ 3.000 ເທື່ອຄົນ;**

**2) ສູ້ຊົນຊຸກຍູ້ໃຫ້ທ້ອງຖິ່ນກໍ່ສ້າງອາຄານຫ້ອງການບ່ອນທີ່ບໍ່ທັນມີ; ປັບປຸງ ແລະ ປະກອບອຸປະກອນ, ພາຫະນະສິ່ງຕ່າງໆ ທີ່ຈໍາເປັນໂດຍສຸມໃສ່ເມືອງທຸກຍາກ ແລະ ເມືອງຍຸດທະສາດທີ່ຫຼໍ່ແຫຼມຕາມເຂດຊາຍແດນ;**

**3) ສູ້ຊົນປະສານສົມທົບ ກັບທ້ອງຖິ່ນ ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງໃຫ້ໄດ້ 36 ຈຸດ , ລະບົບໂທລະໂຄ່ງຢູ່ຂັ້ນບ້ານໃຫ້ໄດ້ 2.800 ບ້ານ;**

**4) ສູ້ຊົນຂະຫຍາຍລະບົບເຕັກນິກໃຫ້ທັນສະໄໝຈາກລະບົບອານາລັອກໄປສູ່ລະບົບດິຈິຕອນໃຫ້ໄດ້ໃນຂອບເຂດທົ່ວປະເທດ 22 ຈຸດ;**

**5) ສູ້ຊົນສ້າງ, ປັບປຸງກົດໝາຍ ແລະ ບັນດານິຕິກໍາໃຕ້ກົດໝາຍຂອງຂະແໜງຖະແຫຼງຂ່າວ-ສື່ມວນຊົນ 5 ສະບັບ;**

**6) ສູ້ຊົນພັດທະນາຜະລິດຕະພັນສື່ມວນຊົນ ຄໍລໍາໜັງສືພິມ, ລາຍການວິທະຍຸ, ລາຍການໂທລະພາບ, ວິດີໂອ ຄລິບໃຫ້ມີຄວາມຫຼາກຫຼາຍຕາມກົນໄກການຕະຫຼາດ, ມີເນື້ອໃນຖືກຕ້ອງຄົບຖ້ວນ, ແຫຼມຄົມ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ, ເພື່ອສ້າງລາຍຮັບວິຊາການໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ;**

**7) ສູ້ຊົນສ້າງລາຍຮັບວິຊາການໃຫ້ໄດ້ 65.360.000.000 ກີບ;**

**8) ສູ້ຊົນລະດົມແຫຼ່ງທຶນຈາກພາກລັດ ແລະ ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດຕາມເງື່ອນໄຂເພື່ອພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ;**

**9) ສູ້ຊົນຂະຫຍາຍການຮ່ວມມືດ້ານວຽກງານຖະແຫຼງຂ່າວ-ສື່ມວນຊົນກັບບັນດາປະເທດເພື່ອນມິດຍຸດທະສາດ,ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມເຈລະຈາ ແລະບັນດາອົງການຈັດຕັ້ງສື່ມວນຊົນສາກົນ ເພື່ອຮັບປະກັນສະຖຽນລະພາບດ້ານຂໍ້ມູນຂ່າວສານ.**

**1.4 ວຽກງານຈຸດສຸມຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນ**

**<u>ເພື່ອບັນລຸເປົ້າໝາຍທີ 1:</u>** ພັດທະນາບຸກຄະລາກອນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນໃຫ້ມີຄວາມໜັກແໜ້ນທາງ ດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ມີ 2 ວຽກງານຈຸດສຸມຄືດັ່ງນີ້:

1) ສ້າງ ແລະ ຍົກລະດັບຄຸນທາດການເມືອງໃຫ້ບຸກຄະລາກອນສື່ມວນຊົນເວົ້າລວມ, ເວົ້າສະເພາະແມ່ນຫົວໜ້າອົງການສື່ມວນຊົນ, ຄະນະບັນນາທິການ ໃຫ້ໄດ້ຮຽນທິດສະດີການເມືອງ-ການປົກຄອງທັງພາຍໃນ ແລະ ຕ່າງປະເທດ;
2) ສ້າງ, ປັບປຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານວິຊາການ ແລະ ພາສາໃຫ້ແກ່ພະນັກງານໃນຂະ ແໜງຖະແຫຼງຂ່າວ-ສື່ມວນຊົນໃຫ້ໄດ້ ທັງດ້ານປະລິມານ ແລະ ຄຸນນະພາບ ແລະ ສາມາດເຊື່ອມສານກັບສາກົນ.

**<u>ເພື່ອບັນລຸເປົ້າໝາຍທີ 2:</u>** ພັດທະນາແລະຄຸ້ມຄອງສື່ມວນຊົນລາວໃຫ້ເປັນລະບົບທັນສະໄໝ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ, ມີຄຸນນະພາບ: ມີຄວາມຫຼາກຫຼາຍ, ວ່ອງໄວ, ຊັດເຈນ ແລະ ເຫດການ ມີ 4 ວຽກງານຈຸດສຸມຄືດັ່ງນີ້:

1) ປັບປຸງ ແລະ ຍົກລະດັບພື້ນຖານວັດຖຸອຸປະກອນ ເຕັກນິກ ຮັບໃຊ້ການຜະລິດຂ່າວທາງໂທລະພາບ , ວິທະຍຸກະຈ່າຍສຽງ, ໜັງສືພິມ ແລະ ສື່ແບບໃໝ່ໃຫ້ເປັນລະບົບຄົບຊຸດຫັນຈາກລະບົບອານາລັອກໄປສູ່ລະບົບດີຈີຕອນ ໃນຂອບເຂດທົ່ວປະເທດ;
2) ສ້າງສະຖານີ ແລະ ເຄືອຂ່າຍຮັບ-ສົ່ງສັນຍານຜ່ານລະບົບໂທລະພາບໃຊ້ສາຍ ແລະ ໂທລະພາບບໍ່ໃຊ້ສາຍ ໃຫ້ເປັນລະບົບເທື່ອລະກ້າວໃນຂອບເຂດທົ່ວປະເທດ;
3) ພັດທະນາລະບົບຊັອບແວຮັບ-ສົ່ງຂໍ້ມູນສື່ສິ່ງພິມ,ສື່ເອເລັກໂຕຣນິກລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ປອດໄພ;
4) ສ້າງສູນຖານຂໍ້ມູນຂ່າວສານສື່ມວນຊົນ (Media Centre) ເພື່ອຄຸ້ມຄອງ ແລະ ບໍລິການໃນຂອບເຂດທົ່ວປະເທດ.

**<u>ເພື່ອບັນລຸເປົ້າໝາຍທີ 3</u>:** ສ້າງ , ປັບປຸງ ແລະ ເຜີຍແຜ່ ບັນດາກົດໝາຍແລະນິຕິກາຕ່າງໆໃນຂະແໜງສື່ມວນຊົນໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ມີ 2 ວຽກງານຈຸດສຸມຄືດັ່ງນີ້:

1) ປັບປຸງກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຖະແຫຼງຂ່າວ-ສື່ມວນຊົນ ທີ່ມີແລ້ວໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ; ຄົ້ນຄວ້າສ້າງກົດໝາຍ ແລະ ນິຕິກຳ ທີ່ບໍ່ທັນມີໃນຂົງເຂດວຽກງານຖະແຫຼງຂ່າວ-ສື່ມວນຊົນ ໃຫ້ຄົບຖ້ວນ;
2) ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ໃນຂົງເຂດວຽກງານຖະແຫຼງຂ່າວ-ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ.

**<u>ເພື່ອບັນລຸເປົ້າໝາຍທີ 4</u>:** ສ້າງຄວາມເຂັ້ມແຂງ ໃນການພັດທະນາຜະລິດຕະພັນຂອງສື່ມວນຊົນໃຫ້ມີຄຸນນະພາບເພື່ອສ້າງເງື່ອນໄຂຂຸດຄົ້ນແຫຼ່ງລາຍຮັບວິຊາການສາມາດກຸ້ມຕົນເອງ ເທື່ອລະກ້າວ ມີ 5 ວຽກງານຈຸດສຸມຄືດັ່ງນີ້:

1) ການສຳຫຼວດຜູ້ບໍລິໂພກ ແລະ ການເຂົ້າເຖິງສື່ມວນຊົນ;
2) ພັດທະນາລາຍການໂທລະພາບ, ວິທະຍຸກະຈາຍສຽງ, ສື່ແບບໃໝ່ ແລະ ຄໍລຳໜັງສືພິມໃຫ້ມີຄຸນນະພາບ, ມີຄວາມຫຼາກຫຼາຍເພື່ອດຶງດູດຄວາມສົນໃຈຂອງມວນຊົນທັງພາຍໃນ ແລະ ຕ່າງປະເທດ;
3) ປັບປຸງກົນໄກການຮ່ວມມື, ປະສານງານກັບຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາຜະລິດ ຕະພັນສື່ມວນຊົນໃຫ້ມີຄຸນນະພາບ, ຫຼາກຫຼາຍ ແລະ ທັນສະໄໝ;
4) ສ້າງກິດຈະກຳຊຸກຍູ້ສົ່ງເສີມວຽກງານສື່ມວນຊົນ ດ້ວຍຫຼາຍຮູບແບບເພື່ອໂຄສະນາສື່ມວນຊົນລາວທັງພາຍໃນ ແລະ ຕ່າງປະເທດ;
5) ເພີ່ມທະວີການຂຸດຄົ້ນຊອກຫາແຫຼ່ງລາຍຮັບວິຊາການ ດ້ວຍການນຳໃຊ້ທຸກທ່າແຮງທີ່ມີໃຫ້ນັບມື້ຫຼາຍຂຶ້ນ ແລະ ປັບປຸງກົນໄກທາງດ້ານການຄຸ້ມຄອງ, ບໍລິຫານການເງິນ ແລະ ທາງດ້ານການຕະຫຼາດໃຫ້ສອດຄ່ອງກັບຄວາມຕ້ອງ ການໃນການຜະລິດ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

**<u>ເພື່ອບັນລຸເປົ້າໝາຍທີ 5</u>:** ເສີມຂະຫຍາຍການພົວພັນຮ່ວມມືວຽກງານສື່ມວນຊົນກັບສາກົນ; ຊຸກຍູ້ ແລະ ສົ່ງເສີມການລົງທຶນລະຫ່ວາງພາກລັດ ແລະ ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດໃນວຽກງານຖະແຫຼງຂ່າວ-ສື່ມວນຊົນໃຫ້ກວ້າງຂວາງ ມີ 1 ວຽກງານຈຸດສຸມຄືດັ່ງນີ້:

1) ຊຸກຍູ້ການຈັດຕັ້ງປະຕິບັດສັນຍາການຮ່ວມມື ສ້າງເຄືອຂ່າຍປະສານງານເພື່ອເຊື່ອມໂຍງ ດ້ານວຽກງານຖະແຫຼງຂ່າວ-ສື່ມວນຊົນ ບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດອາຊຽນ, ປະເທດຄູ່ເຈລະຈາ ແລະ ບັນດາອົງການຈັດຕັ້ງສື່ມວນຊົນສາກົນ ກ່ຽວກັບວຽກງານຖະແຫຼງຂາວ-ສື່ມວນຊົນ.

**1.5 ແຜນການຈັດຕັ້ງປະຕິບັດ ແລະ ເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນ 5 ປີ (2021-2025)**

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກຳນົດເອົາວຽກງານຖະແຫຼງຂ່າວ ເປັນຂະແໜງ ການບູລິມະສິດ ໂດຍສະເພາະແມ່ນຈະເລັ່ງໃສ່: (1) ປູກຈິດສຳນຶກ ແລະ ສົ່ງເສີມການເຕີບໂຕສີຂຽວຜ່ານລາຍການວິທະຍຸ, ໂທລະພາບ ແລະ ສື່ສິ່ງພິມຕ່າງໆ, (2)ປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າໃນການໂຄສະນາເຜີຍແຜ່ ແລະ ສົ່ງເສີມການຜະລິດ, ການຕະຫຼາດ, ການຂາຍ ແລະ ການບໍລິໂພກຜະລິດຕະພັນສະອາດເປັນມິດຕໍ່ສິ່ງແວດລ້ອມ, (3) ປະສານສົມທົບກັບຂະແໜງວັດທະນະທຳ ແລະ ທ່ອງທ່ຽວ ໂຄສະນາເຜີຍແຜ່ແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເພື່ອດຶງດູດນັກທ່ອງທ່ຽວມາດຳເນີນກິດຈະການທ່ອງທ່ຽວໃນ ສປປ ລາວ ແລະ (4)ໂຄສະນາເຜີຍແຜ່ບັນດານະໂຍບາຍ ແລະ ນິຕິກຳກ່ຽວກັບການເຕີບໂຕສີຂຽວໃຫ້ຂະແໜງການ ແລະ ປະຊາຊົນທ້ອງຖິ່ນໄດ້ຮັບຮູ້ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ.

**1.6 ແຜນການລົງທຶນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ**

1.6.1 ການລົງທຶນຈາກງົບປະມານຂອງລັດ

ສຳລັບແຜນການລົງທຶນຂອງລັດ ໃຫ້ແກ່ວຽກງານໃນຂະແໜງຖະແຫຼງຂ່າວ ໃນ 5 ປີຕໍ່ໜ້າ (2021-2025) ໃນນີ້ ບັນດາໂຄງການລົງທຶນ ລວມທັງໝົດມີ 28 ໂຄງການ, ລວມມູນຄ່າທັງໝົດ 211.765,00 ລ້ານກີບ.

1.6.2ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA)

ນອກຈາກການລົງທຶນຂອງລັດແລ້ວ ພວກເຮົາຍັງຈະຕ້ອງໄດ້ເພີ່ມທະວີການລະດົມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ, ບັນດາອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ການລົງທຶນຂອງຊຸມຊົນທ້ອງຖິ່ນ ເຂົ້າໃນການພັດທະນາວຽກງານ ຖວທ ໃຫ້ເພີ່ມຂຶ້ນ. ໃນນີ້ມີໂຄງການຊ່ວຍເຫຼືອເພື່ອການພັດທະນາຈຳນວນ 03 ໂຄງການຊຶ່ງເປັນໂຄງການສືບຕໍ່:

1) ໂຄງການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນຜ່ານວິທະຍຸຊຸມຊົນມູນຄ່າ 3.000.000 ໂດລາສະຫະລັດມີໄລຍະເວລາການຈັດຕັ້ງປະຕິບັດ 5 ປີ 2017-2021 ເຊິ່ງໄດ້ຮັບການຊ່ວຍເຫຼືອລ້າຈາກອົງການສະຫະປະຊາຊາດເພື່ອການພັດທະນາ (UNDP);
2) ໂຄງການກໍ່ສ້າງສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບແຂວງໄຊສົມບູນມູນຄ່າ 118.950.817.000 ກີບ ໃນນີ້ຈະມີທຶນສົມທົບຈາກລັດຖະບານລາວຈຳນວນ 3.865.817.012

ດົງ ມີໄລຍະເວລາຂອງການຈັດຕັ້ງປະຕິບັດ 4 ປີ 2018-2021 ເປັນໂຄງການຊ່ວຍເຫຼືອລ້າຈາກ ສສ ຫວຽດນາມ;

ໂຄງການກໍ່ສ້າງສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບແຂວງບໍ່ແກ້ວມູນຄ່າ 116.669.705.637 ດົງ ໃນນັ້ນ: ທຶນຊ່ວຍເຫຼືອລ້າ: 112.921.581.186 ດົງ ທຶນພາຍໃນ: 3.748.124.451 ດົງ ມີໄລຍະເວລາຂອງການຈັດຕັ້ງປະຕິບັດ 4 ປີ 2017-2020 ເປັນໂຄງການຊ່ວຍເຫຼືອລ້າຈາກ ສສ ຫວຽດນາມ.

## 2. ວຽກງານວັດທະນະທຳ

### 2.1 ຈຸດໝາຍລວມຂອງວຽກງານວັດທະນະທຳ

**ສືບຕໍ່ອານຸລັກ, ປົກປັກຮັກສາ, ສືບທອດ, ຟື້ນຟູ ແລະ ເສີມຂະຫຍາຍມູນເຊື້ອ, ຄຸນຄ່າມໍຣະດົກວັດທະນະທຳອັນດີງາມຂອງຊາດໃຫ້ມີຄວາມຍືນຍົງ, ພັດທະນາອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈໃນສັງຄົມພ້ອມທັງຮັບເອົາຄຸນຄ່າວັດທະນະທຳທີ່ກ້າວໜ້າຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ, ສາມາດເຊື່ອມໂຍງກັບສາກົນ; ສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະ ນະທຳທີ່ເປັນໄພຕໍ່ສັງຄົມ, ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ.**

### 2.2 ເປົ້າໝາຍຂອງວຽກງານວັດທະນະທຳ

**<u>ເປົ້າໝາຍທີ 1</u>**: ພັດທະນາບຸກຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;

**<u>ເປົ້າໝາຍທີ 2</u>**: ສ້າງ, ພັດທະນາພື້ນຖານໂຄງລ່າງໃນຂະແໜງວັດທະນະທຳໃຫ້ສົມຄູ່ກັບການຂະ ຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ;

**<u>ເປົ້າໝາຍທີ 3</u>**: ສ້າງ, ປັບປຸງ ບັນດາກົດໝາຍ ແລະ ນິຕິກຳໃນຂະແໜງການວັດທະນະທຳ ໃຫ້ຮັດກຸມ ແລະ ສ່ອດຄ່ອງ ກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ແລະ ເຜີຍແຜ່ໃຫ້ທົ່ວເຖິງ;

**<u>ເປົ້າໝາຍທີ 4</u>**: ຄຸ້ມຄອງ ແລະ ສົ່ງເສີມການອະນຸລັກ, ປົກປັກຮັກສາ, ຟື້ນຟູສືບທອດ ເສີມຂະຫຍາຍມູນເຊື້ອ ແລະຄຸນຄ່າມໍຣະດົກວັດທະນະທຳອັນດີງາມຂອງຊາດ ໃຫ້ມີຄວາມຍືນຍົງ;

**<u>ເປົ້າໝາຍທີ 5</u>**: ໂຄສະນາ, ເຜີຍແຜ່ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ ອອກສູ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ; ແລກປ່ຽນ ແລະ ຮ່ວມມືດ້ານວັດທະນະທາ ກັບສາກົນຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ;

<u>**ເປົ້າໝາຍທີ 6**</u>: ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳໃຫ້ມີຄວາມຫຼາກຫຼາຍ ທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສ້າງເງື່ອນໄຂຂຸດຄົ້ນແຫຼ່ງລາຍຮັບ ວິຊາການໃນຂະແໜງວັດທະນະທຳໃຫ້ເພີ່ມຂຶ້ນ;

**2.3 ຄາດໝາຍຕົ້ນຕໍຂອງວຽກງານວັດທະນະທຳ**

**ວຽກງານວັດທະນະທຳປະກອບມີ 12 ຄາດໝາຍຄືດັ່ງນີ້:**

**1) ສູ້ຊົນພັດທະນາບຸກຄະລາກອນໃນຂະແໜງວັດທະນະທຳ ໃຫ້ມີຄວາມຮູ້ຄວາມສາມາດທາງດ້ານ ວິຊາການໃຫ້ໄດ້ 500 ເທື່ອຄົນ;**

**2) ສູ້ຊົນສ້າງຄວາມເຂັ້ມແຂງເພື່ອສົ່ງເສີມກິດຈະກຳທາງດ້ານວັດທະນະທຳ:_ສ້າງຄູ່ມືການຮຽນ-ການສອນ ການຄຸ້ມຄອງບໍລິຫານ ແລະ ວິຊາການ ສະໂມສອນ ແລະ ວັດທະນະທຳເດັກ 10 ວິຊາ; ສ້າງຄູ່ມືການຈັດຕັ້ງປະຕິບັດວຽກງານວັດທະນະທຳມະຫາຊົນ ຈຳນວນ 5 ຫົວເລື່ອງ; ສ້າງແຜ່ນພັບ ແລະ ປຶ້ມຄູ່ມືກ່ຽວກັບ ມໍຣະດົກວັດທະນະທຳ; ສ້າງປຶ້ມຄູ່ມືກ່ຽວກັບງານສິລະປະລວດລາຍລາວ; ສ້າງປຶ້ມບັນຊີສິນບັດມິ່ງເມືອງ; ແລະ ປັບປຸງຄູ່ມື ກ່ຽວກັບລະບຽບການຕ່າງໆໃນຂົງເຂດວັດທະນະທຳ;**

**3) ສູ້ຊົນສ້າງ, ປັບປຸງ ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍໃນຂະແໜງການວັດທະນະທຳ ໃຫ້ໄດ້ 10 ສະບັບ**

**ແລະ ເຜີຍແຜ່ໃຫ້ທົ່ວເຖິງ;**

**4) ຊຸກຍູ້ການສ້າງຄອບຄົວວັດທະນະທຳໃຫ້ໄດ້ 130.000 ຄອບຄົວ, ບ້ານວັດທະນະທຳໃຫ້ໄດ້ 750 ບ້ານ;**

**5) ສູ້ຊົນສະເໜີມໍຣະດົກແຫ່ງຊາດທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃຫ້ເປັນມໍຣະດົກໂລກ ແລະ ມໍຣະດົກວັດທະນະທຳຂອງມວນມະນຸດ ແລະ ຄວາມຊົງຈຳເປັນຂອງໂລກ:**

- **ມໍຣະດົກທາງທຳມະຊາດ 1 ແຫ່ງ: ອຸທິຍານແຫ່ງຊາດຫີນໜາມໜໍ່ ແຂວງຄຳມ່ວນ;**
- **ມໍຣະດົກວັດທະນະທຳ ນາມມະທຳ** 4 **ລາຍການ: ພູມປັນຍາຫັດຖະກຳພື້ນເມືອງການຕຳລາຍນາກຂອງຊຸມຊົນເຊື້ອຊາດລາວ; ຟ້ອນລຳວົງລາວ; ພິທີບາສີສູ່ຂັວນ ແລະ ການຜະດຸງຄັນແບບພື້ນບ້ານ (ໝໍຕາແຍ) ຮ່ວມກັບຄະນະກາມາທິການແຫ່ງຊາດເຢຍລະມັນເພື່ອອຸຍແນດສະໂກຄະນະກາມາທິການລຸກຊໍາບວກເພື່ອການຮ່ວມມືກັບອຸຍແນດສະໂກແລະປະເທດໂກລົມເບຍ;**
- **ມໍຣະດົກປະຫວັດສາດ ໃຫ້ເປັນມໍຣະດົກແຫ່ງຄວາມຊົງຈຳຂອງໂລກ (MoW) 3 ລາຍການ: ຮູບພາບ ປະຫວັດສາດ ແລະ ວັດທະນະທຳ; ໜັງສືຜູກໃບລານ ແລະ ງານພຸດທະສິນ (ໂຮງຜາສາດ);**

**6) ສູ້ຊົນປັບປຸງ ແລະ ພັດທະນາ ເຄື່ອງອຸປະກອນຮັບໃຊ້ດ້ານເຕັກນິກ (ພະຫະນະ) ແລະວິຊາການຂອງຂະແໜງ ການວັດທະນະທຳໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ;**

- ສູ້ຊົນປັບປຸງ ແລະຍົກລະດັບເຄື່ອງມືການຜະລິດຮູບເງົາທັນສະໄໝໃນລະບົບ HD ໃຫ້ໄດ້ 20%;

7) ສູ້ຊົນສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ໃຫ້ໄດ້ມາດຕະຖານ ເປັນລະບົບຄົບຊຸດເພື່ອອຳນວຍຄວາມສະ ດວກໃຫ້ແກ່ຂະແໜງວັດທະນະທຳທຸກປະເພດ, ທຸກລະດັບ ໃນທົ່ວປະເທດໃຫ້ໄດ້: ຊຸກຍູ້ສົ່ງເສີມ ແລະ ປັບປຸງໂຄງລ່າງສະໂມສອນວັດທະນະທຳຂັ້ນບ້ານ, ເມືອງ ແລະ ສູນວັດ ທະນະທຳເດັກໃຫ້ໄດ້ 15 ແຫ່ງ ໃນຂອບເຂດທົ່ວປະເທດ; ຊຸກຍູ້ສົ່ງເສີມໃນການສ້າງ ແລະ ປັບປຸງຫໍພິພິທະພັນວັດທະນະທຳ, ປະຫວັດສາດລະດັບຊາດໃຫ້ເປັນລະບົບດີຈີຕອນ (E-ticket) ໃຫ້ເປັນຕົວແບບ 1 ແຫ່ງ ແລະ ສ້າງຫໍພັກນັກຮຽນສິລະປະແຫ່ງຊາດໃຫ້ໄດ້ 1 ແຫ່ງ (ທຶນຊ່ວຍເຫຼືອຈາກ ສສ ຫວຽດນາມ).

8) ສູ້ຊົນສຳຫຼວດ, ເກັບກຳຂໍ້ມູນ, ຂຶ້ນທະບຽນ ໃນຂະແໜງວັດທະນະທຳ: ສຳຫຼວດ ເກັບກຳຂໍ້ມູນ, ສ້າງ ແລະ ປັບປຸງສວນສາທາລະນະລະດັບແຂວງ 18 ແຫ່ງ ແລະ ລະດັບຊາດ 3 ແຫ່ງ; ສຳຫຼວດແຫຼ່ງບູຮານວິທະຍາໃຫ້ໄດ້ 35 ແຫຼ່ງ ແລະ ຂຸດຄົ້ນ ທາງບູຮານວິທະຍາໃຫ້ໄດ້ 5 ແຫຼ່ງ ໃນຂອບເຂດທົ່ວປະເທດ; ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພຣະພຸດທະຮູບ ໃຫ້ທ່ວງທັນກັບການພົບເຫັນ ແລະ ລາຍງານໃຫ້ໄດ້ 5 ແຫ່ງ; ຂຶ້ນທະບຽນ ຈັດປະເພດຫົວໜ່ວຍປະກອບການທາງດ້ານວັດທະນະທຳຈາກຂະແໜງຕ່າງໆ ທີ່ເປັນຂອງລັດ, ລວມໝູ່ ແລະ ເອກະຊົນ ໃນທົ່ວປະເທດໃຫ້ສຳເລັດ; ຂຶ້ນບັນຊີມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກລະດັບທ້ອງຖິ່ນ ໃຫ້ເປັນລະດັບຊາດໃຫ້ໄດ້ 20 ແຫ່ງ ໂດຍປະຕິບັດຕາມດຳລັດ ແລະ ຂໍ້ຕົກລົງຂອງກະຊວງ ຖວທ; ຂຶ້ນທະບຽນ ບັນຊີສິມບັດມີ່ງເມືອງ; ຂຶ້ນທະບຽນບັນຊີ ວັດຖຸບູຮານງານພຸດທະສິນໃຫ້ໄດ້ 5 ແຫ່ງ; ຂຶ້ນບັນຊີມໍຣະດົກວັດທະນະທຳນາມມະທຳລະດັບຊາດ ແຕ່ລະປະເພດ; ເກັບກຳຂໍ້ມູນຂຶ້ນທະບຽນຈັດປະເພດລະດັບການພິມ, ໂຮງພິມ, ສານັກພິມ, ຫໍສະໝຸດ ແລະ ການຂະຫຍາຍຮ້ານຈຳໜ່າຍປຶ້ມຂອງພາກລັດ ແລະ ເອກະຊົນໃຫ້ໄດ້ 70% ແລະ ໃນຂອບເຂດທົ່ວປະເທດ; ເກັບກາຂໍ້ມູນຂຶ້ນທະບຽນ, ຄົ້ນຄວ້າ, ຮຽບຮຽງ, ປະດິດແຕ່ງ ແລະ ການຈັດພິມປຶ້ມ, ວາລະສານ ແລະ ຈຳໜ່າຍປຶ້ມວັດທະນະທາໃຫ້ໄດ້ 70% ໃນຂອບເຂດທົ່ວປະເທດ ແລະ ສູ້ຊົນສ້າງຜະລິດຕະພັນສິລະປະການສະແດງ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບໃຫ້ໄດ້ປະມານ 275 ລາຍການ;

9) ສູ້ຊົນສ້າງກິດຈະກຳຕ່າງໆ ແລະ ເຜີຍແຜ່ວຽກງານວັດທະນະທຳ: ຈັດງານມະຫາກຳວຽກງານວັດທະນະທຳມະຫາຊົນ 3 ພາກ (3ຄັ້ງ) ແລະ ງານມະໂຫລານວຽກງານວັດທະນະທາມະຫາຊົນທົ່ວປະເທດ 1 ຄັ້ງ; ຈັດງານບຸນມະໂຫລານຕຸກກະຕາອາຊຽນໃຫ້ໄດ້ 1 ຄັ້ງ; ງານມະຫາກຳວັດທະນະທຳເດັກ ລະດັບຊາດ 1 ຄັ້ງ; ຈັດການແຂ່ງຂັນຜະລິດຕະພັນສິລະປະວັດທະນະທຳ ບັນດາເຜົ່າໃນຂອບເຂດທົ່ວປະເທດໃຫ້ໄດ້ປີລະ 1 ຄັ້ງ ແລະ ຈັດການແຂ່ງຂັນສິລະປະບັນດາເຜົ່າໃນຂອບເຂດທົ່ວ

**ປະເທດໃຫ້ໄດ້ປີ 2 ຄັ້ງ; ຊຸກຍູ້ການສ້າງສະມາຄົມວິຊາຊີບ, ສູນຄົ້ນຄວ້າ, ກຳນົດລາງວັນລະດັບພູມີພາກຂອງຂະແໜງວັດທະນະທຳໃຫ້ສຳເລັດ ແລະ ເຄື່ອນໄຫວສະແດງສີລະປະວັດທະນະທາ ຈຳນວນ 1.200 ຄັ້ງ;**

**10) ສູ້ຊົນຟື້ນຟູ, ອະນຸລັກ ແລະ ສົ່ງເສີມມໍຣະດົກວັດທະນະທຳ ທີ່ເປັນວັດຖຸ ແລະ ບໍ່ເປັນວັດຖຸ ແຕ່ລະປະເພດ ທີ່ໄດ້ສຳຫຼວດແລ້ວໃຫ້ໄດ້ 80%;**

**11) ສູ້ຊົນສ້າງລາຍການຖ່າຍທຳບົດຟ້ອນ, ບົດຂັບລຳ, ລະຄອນ, ກາຍະສິນ ແລະ ບົດຮ້ອງ ເປັນແຜ່ນພາບ ແລະ ສຽງ (DVD, VCD, CD)ໃຫ້ໄດ້ 2 ຊຸດ;**

**12) ສູ້ຊົນ ສ້າງລາຍຮັບວິຊາການພາຍໃນ 5 ປີໃຫ້ໄດ້ 5.875.000.000 ກີບ; ໃນນີ້ມີ: ຫໍວັດທະນະທຳແຫ່ງຊາດ 4.675.000.000 ກີບ; ໂຮງຮຽນສີລະປະແຫ່ງຊາດ 600.000.000 ກີບ; ກອງສີລະປະກອນແຫ່ງຊາດ 600.000.000 ກີບ ແລະ ກົມວັດທະນະທາມະຫາຊົນ 250.000.000;**

**13) ສູ້ຊົນໃຫ້ການບໍລິການຜະລິດຕະພັນວັດທະນະທຳ: ຫໍພິພິທະພັນແຫ່ງຊາດບໍລິການຜູ້ເຂົ້າຊົມໃຫ້ໄດ້ 45.000 ເທື່ອຄົນ; ໃນນີ້ ຄົນພາຍໃນ 10.000 ເທື່ອຄົນ ແລະ ຕ່າງປະເທດ 35.000 ເທື່ອຄົນ ແລະ ຫໍວັດທະນະທຳແຫ່ງຊາດ ຮັບໃຊ້ບໍລິການ ໃຫ້ໄດ້ 475 ງານ, ຜູ້ມາຊົມໃຊ້ໃຫ້ໄດ້ 237.500 ເທື່ອຄົນ;**

### 2.4 ວຽກງານຈຸດສຸມຂອງວຽກງານວັດທະນະທຳ

ວຽກງານວັດທະນະທຳ ປະກອບມີ 6 ເປົ້າໝາຍ ແລະ 16 ວຽກງານຈຸດສຸມດັ່ງນີ້:

**<u>ເພື່ອບັນລຸເປົ້າໝາຍທີ 1</u>:** ພັດທະນາບຸກຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງມີຄວາມສາມາດທາງດ້ານວິຊາການ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບປະກອບມີ 4 ວຽກງານຈຸດສຸມ:

1) ສ້າງຄວາມເຂັ້ມແຂງທາງດ້ານທິດສະດີການເມືອງ ແລະ ເຕັກນິກວິຊາການ ໃຫ້ແກ່ພະນັກງານໃນຂະແໜງການວັດທະນະທຳ;
2) ສົມທົບກັບກະຊວງສຶກສາທິການ ແລະ ກິລາ ປັບປຸງຫຼັກສູດ ການຮຽນ-ການສອນລະດັບວິຊາຊີບ, ປະລິນຍາຕີ ແລະ ປະລິນຍາໂທ;
3) ສ້າງສະມາຄົມວິຊາຊີບ, ສູນຄົ້ນຄວ້າຂອງຂະແໜງວັດທະນະທຳດ້ານຕ່າງໆ;
4) ສ້າງກິດຈະກຳສົ່ງເສີມການອ່ານ ໃຫ້ປະຊາຊົນໃນຂອບເຂດທົ່ວປະເທດ;

**<u>ເພື່ອບັນລຸເປົ້າໝາຍທີ 2</u>:** ສ້າງ, ພັດທະນາພື້ນຖານໂຄງລ່າງ ໃນຂະແໜງວັດທະນະທຳ ໃຫ້ສົມຄູ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ປະກອບມີ 2 ວຽກງານຈຸດສຸມ:

1) ປະກອບເຄື່ອງອຸປະກອນຮັບໃຊ້ດ້ານເຕັກນິກ ແລະ ວິຊາການທີ່ທັນສະໄໝ ໃຫ້ແກ່ຂະແໜງການວັດທະນະທຳໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ;

2) ປັບປຸງ, ກໍ່ສ້າງ ແລະ ພັດທະນາຫໍພິພິທະພັນ, ສວນອຸທິຍານ , ໂຮງຮຽນວິຊາຊີບຊັ້ນກາງ ແລະ ຫໍພັກນັກຮຽນສິລະປະແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

**<u>ເພື່ອບັນລຸເປົ້າໝາຍທີ 3</u>**: ສ້າງ , ປັບປຸງ ບັນດາກົດໝາຍ ແລະ ນິຕິກາໃນຂະແໜງວັດທະນະທາໃຫ້ຮັດກຸມແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ພ້ອມທັງເຜີຍແຜ່ຢ່າງກວ້າງຂວາງ ປະກອບມີ 3 ວຽກງານຈຸດສຸມ:

1) ຄົ້ນຄວ້າ, ສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ບໍ່ທັນມີໃນຂົງເຂດວຽກງານວັດທະນະທຳ ໃຫ້ຄົບຖ້ວນ. ປັບປຸງບັນດາກົດໝາຍແລະນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານວັດທະນະທຳ ທີ່ມີແລ້ວໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;
2) ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານວັດທະນະທຳໃຫ້ທັງພາຍໃນ ແລະ ຕ່າງປະເທດ;
3) ສ້າງນິຕິກຳ ເພື່ອກຳນົດລາງວັນ,ນາມມະຍົດລະດັບຕ່າງໆຂອງຂະແໜງການວັດທະນະທຳ;

**<u>ເພື່ອບັນລຸເປົ້າໝາຍທີ 4</u>:** ຄຸ້ມຄອງ ແລະ ສົ່ງເສີມການອະນຸລັກ, ປົກປັກຮັກສາ, ຟື້ນຟູ ສືບທອດ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍຣະດົກວັດທະນະທຳອັນດີງາມຂອງຊາດ ໃຫ້ມີຄວາມຍືນຍົງປະກອບມີ 6 ວຽກງານຈຸດສຸມ:

1) ບູລະນະປະຕິສັງຂອນ ມໍຣະດົກ ວັດທະນະທຳໃນຂອບເຂດທົ່ວປະເທດ;
2) ປັບປຸງການຂໍ້ມູນໃນຫໍສະໝຸດແຫ່ງຊາດ ແລະ ສຳຫຼວດ,ເກັບກຳທ້ອນໂຮມວັດຖຸພັນ ເພື່ອນາມາຈັດວາງສະແດງໃນຫໍພິພິທະພັນແຫ່ງຊາດ;
3) ຊຸກຍູ້ ແລະປະສານສົມທົບ ກັບທ້ອງຖິ່ນໃນການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ;
4) ສົມທົບກັບຂະແໜງການທີ່ກ່ຽວຂ້ອງສ້າງແຜນແມ່ບົດຄຸ້ມຄອງສຽງແຄນເຊື້ອຊາດລາວ;
5) ສູ້ຊົນ ສະເໜີ ມໍຣະດົກວັດທະນະທຳລະດັບຊາດທີ່ເປັນວັດຖຸ ແລະ ບໍ່ເປັນວັດຖຸໃຫ້ເປັນລະດັບພາກພື້ນ ຫຼື ໂລກ ຕາມຄຸນຄ່າຂອງມໍຣະດົກແຫ່ງຊາດ;
6) ຂຶ້ນທະບຽນ ຈັດປະເພດຫົວໜ່ວຍປະກອບການທາງດ້ານວັດທະນະທຳ ແລະ ເກັບກຳຜົນງານ ດ້ານການຄົ້ນຄວ້າວຽກງານວັດທະນະທຳ; ສັງລວມຂໍ້ມູນດ້ານບູຮານວິທະຍາໃຫ້ລວມສູນທົ່ວປະເທດ;

**<u>ເພື່ອບັນລຸເປົ້າໝາຍທີ 5</u>:** ໂຄສະນາ, ເຜີຍແຜ່ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ ອອກສູ່ສັງຄົມ ທັງພາຍໃນ ແລະຕ່າງປະເທດ; ແລກປ່ຽນ ແລະ ຮ່ວມມື ດ້ານວັດທະນະທຳ ກັບ ສາກົນ ຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝປະກອບມີ 2 ວຽກງານຈຸດສຸມ:

1) ໂຄສະນາ, ເຜີຍແຜ່ ແລະ ສົ່ງເສີມກິດຈະກຳວັດທະນະທຳ ຢູ່ພາຍໃນ ແລະ ຕ່າງປະເທດເປັນປົກກະຕິ;
2) ຊຸກຍູ້ການຈັດຕັ້ງປະຕິບັດສັນຍາການຮ່ວມມື ກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມເຈລະຈາ ແລະ ບັນດາອົງການຈັດຕັ້ງສາກົນກ່ຽວກັບວຽກງານວັດທະນະທຳ;

**<u>ເພື່ອບັນລຸເປົ້າໝາຍທີ 6</u>:** ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳໃຫ້ມີຄວາມຫຼາກຫຼາຍທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສ້າງເງື່ອນໄຂຂຸດຄົ້ນແຫຼ່ງລາຍຮັບ ວິຊາການໃນຂະແໜງວັດທະນະທຳ ໃຫ້ເພີ່ມຂຶ້ນ; ປະກອບມີ 1 ວຽກງານຈຸດສຸມຄື:

1) ປະສານສົມທົບລະຫວ່າງພາກລັດ ແລະ ເອກະຊົນ ສ້າງຜະລິດຕະພັນວັດທະນະທຳ ໃຫ້ມີເອກະລັກ, ມີຄວາມຫຼາກຫຼາຍ ຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ມີຄວາມຍືນຍົງ.

## 2.5 ແຜນການຈັດຕັ້ງປະຕິບັດ ແລະ ເຊື່ອມສານເປົ້າໝາຍ ການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025)

ເປັນຂະແໜງການຍ່ອຍໜຶ່ງທີສຳຄັນໃນການປົກປັກຮັກສາ ແລະ ສ້າງຄວາມເປັນເອກະລັກຂອງຊາດ. ວັດທະນະທຳທີ່ຕິດພັນກັບຫຼາຍຂະແໜງການບູລິມະສິດຂອງການເຕີບໂຕສີຂຽວ ເປັນຕົ້ນແມ່ນ: ຂະແໜງການທ່ອງທ່ຽວ, ຖະແຫຼງຂ່າວ ແລະ ເຄຫາຜັງເມືອງ. ສະນັ້ນ, ຍຸດສະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ, ວັດທະນະທຳເປັນຂະແໜງການໜຶ່ງທີ່ສຳຄັນ ໂດຍສະເພາະຈຸດສຸມໃສ່: (1) ປະສານສົມທົບກັບຂະແໜງການທ່ອງທ່ຽວເພື່ອສ້າງກິດຈະກຳ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງປະຫວັດສາດ ແລະ ວັດທະນະທຳຂອງຊາດໃຫ້ມີຄວາມຫຼາກຫຼາຍ ແລະ ຈັບງາມ ເພື່ອດຶງດູດນັກທ່ອງທ່ຽວມາທ່ອງທ່ຽວໃນ ສປປ ລາວ ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ສ້າງວຽກເຮັດງານທຳ ແລະ ຫຼຸດຜ່ອນຄວາມທຸກຍາກ; (2) ປະສານສົມທົບກັບວຽກງານຖະແຫຼງຂ່າວ ເພື່ອເຜີຍແຜ່ວັດທະນະທຳ ແລະ ວິຖີການດຳລົງຊີວິດທີ່ເປັນເອກະລັກຂອງຊາດ, ສຶກສາອົບຮົມໃຫ້ປະຊາຊົນລາວມີຊີວິດແບບລຽບງ່າຍ, ປະຢັດມັດທະຍັດ, ຖະໜອມຖ່ອມຕົນ, ມີຈິດໃຈເອື້ອເຟື້ອເພື່ອແຜ່ ແລະ ຊ່ວຍເຫຼືອຜູ້ອື່ນ, ເຄົາລົບ ແລະ ໃຫ້ກຽດແຂກທີ່ມາຢ້ຽມຢາມ ແລະ (3) ປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ໃນການອອກແບບຕົວເມືອງ, ອາຄານສະຖານທີ່ ແລະ ປະດັບປະດາຕົວເມືອງໃຫ້ມີຄຸນຄ່າທາງດ້ານສິລະປະວັດທະນະທຳທີ່ເປັນເອກະລັກຂອງຊາດລາວ.

**2.6 ແຜນການລົງທຶນໃນຂະແໜງວັດທະນະທຳ**

2. 6.1 ການລົງທຶນຈາກງົບປະມານຂອງລັດ

ສຳລັບແຜນການລົງທຶນຂອງລັດ ກໍຄືຄວາມຕ້ອງການດ້ານງົບປະມານ ເພື່ອສະໜັບສະໜູນໃຫ້ແກ່ວຽກງານໃນຂະແໜງ ວັດທະນະທຳ ໃນ 5 ປີຕໍ່ໜ້າ (2021-2025) ໃນນີ້ ບັນດາໂຄງການລົງທຶນຂອງລັດ ຂອງຂະແໜງວັດທະນະທຳ ລວມທັງໝົດມີ 29 ໂຄງການ, ລວມມູນຄ່າທັງໝົດ 143.595,00 ລ້ານກີບ.

2.6.2 ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພຫຼື ODA)

ນອກຈາກການລົງທຶນຂອງລັດແລ້ວພວກເຮົາຍັງຈະຕ້ອງໄດ້ເພີ່ມທະວີການລະດົມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ, ບັນດາອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ການລົງທຶນຂອງຊຸມຊົນທ້ອງຖິ່ນ ເຂົ້າໃນການພັດທະນາ ວຽກງານ ຖວທ ໃຫ້ເພີ່ມຂຶ້ນ. ສາລັບໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຫຼື ODA ປະກອບມີ:

1) ສືບຕໍ່ໂຄງການສ້າງສາລະຄະດີເປັນວິດີໂອກ່ຽວກັບວັດທະນະທຳນາມມະທຳຈຳນວນ 10 ເລື່ອງ ເພື່ອນຳສະເໜີເຂົ້າເປັນມໍຣະດົກວັດທະນະທຳຂອງມວນມະນຸດມູນຄ່າ 42.000 ໂດລາສະຫະລັດ ໄລຍະປະຕິບັດ 1 ປີ ເປັນໂຄງການຊ່ວຍເຫຼືອລ້າຂອງ ອົງການອິສແຄບ (ICHCAP) ແລະ ສືບຕໍ່ລະດົມແຫຼ່ງທຶນຈາກຜູ້ໃຫ້ທຶນອື່ນໆ;

2) ໂຄງການບູລະນະປະຕິສັງຂອນ ໂຮງນາງສີດາ ວັດພູຈຳປາສັກ ມໍຣະດົກ (ໂຄງການສືບຕໍ່ ໄລຍະສອງຂອງລັດຖະບານ ສ. ເກົາຫຼີ ມູນຄ່າທັງໝົດ 5.000.000 ໂດລາສະຫະລັດ);

3) ໂຄງການບູລະນະປະຕິສັງຂອນ ໂຮງຊາວ, ວັດພູ ຈາປະສັກ ມໍຣະດົກໂລກ (ໂຄງການສືບຕໍ່ ໄລຍະສອງຂອງລັດຖະບານອິນເດຍ ກຳນົດເວລາ 10 ປີ; ມູນຄ່າລວມທັງໝົດ 3.500.000 ໂດລາສະຫະລັດ).

**3. <u>ວຽກງານທ່ອງທ່ຽວ</u>**

**3.1 ຈຸດໝາຍລວມຂອງວຽກງານທ່ອງທ່ຽວ**

**ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະການທ່ອງທ່ຽວກະສິກຳ ໃຫ້ມີຄຸນນະພາບຕາມທິດສີຂຽວ-ຍືນຍົງ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະສາກົນ, ກາຍ ເປັນຂະແໜງເສດຖະກິດນຳໜ້າ ແລະ ປະກອບສ່ວນຊ່ວຍໃຫ້ປະຊາຊົນຫຼຸດພົ້ນ ຈາກຄວາມທຸກຍາກຕາມນະໂຍ ບາຍຂອງລັດຖະບານ.**

**3.2 ເປົ້າໝາຍຂອງວຽກງານທ່ອງທ່ຽວ**

**<u>ເປົ້າໝາຍທີ 1:</u>** ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;

**<u>ເປົ້າໝາຍທີ 2:</u>** ພັດທະນາແລະປັບປຸງໂຄງລ່າງພື້ນຖານແລະສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວຮັບປະກັນທາງດ້ານປະລິມານແລະຄຸນນະພາບ;

**<u>ເປົ້າໝາຍທີ 3:</u>** ສ້າງ,ປັບປຸງແລະເຜີຍແຜ່ບັນດາກົດໝາຍ,ນິຕິກຳໃນຂະແໜງການທ່ອງທ່ຽວໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;

**<u>ເປົ້າໝາຍທີ 4:</u>** ພັດທະນາແລະປັບປຸງສະຖານທີ່ທ່ອງທ່ຽວ, ຜະລິດຕະພັນ ແລະ ການບໍລິການທ່ອງທ່ຽວໃຫ້ມີຄຸນນະ ພາບ, ມີຄວາມຍືນຍົງ;

**<u>ເປົ້າໝາຍທີ 5:</u>** ສົ່ງເສີມ ແລະ ໂຄສະນາການທ່ອງທ່ຽວລາວໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍໃຫ້ໄດ້ທັງປະລິມານ ແລະຄຸນນະພາບ;

**<u>ເປົ້າໝາຍທີ 6:</u>** ປະສານສົມທົບ ແລະ ຮ່ວມມືກັບບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດແລະພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດໃນການພັດທະນາ, ໂຄສະນາ ແລະ ຄຸ້ມຄອງການທ່ອງທ່ຽວໃຫ້ມີປະສິດທິພາບ;

**3.3 ຄາດໝາຍຕົ້ນຕໍຂອງວຽກງານທ່ອງທ່ຽວ**

**ວຽກງານທ່ອງທ່ຽວ ປະກອບມີ 15 ຄາດໝາຍຕົ້ນຕໍຄືດັ່ງນີ້:**

**1) ສູ້ຊົນດຶງດູດນັກທ່ອງທ່ຽວເຂົ້າມາລາວໃຫ້ໄດ້ປະມານ 15.116.154 ເທື່ອຄົນ, ສ້າງລາຍຮັບໃຫ້ໄດ້ 3.813.772.389 ໂດລາສະຫະລັດ, ສະເລ່ຍໄລຍະການຢູ່ພັກເຊົາແມ່ນ 7 ວັນ/ຄົນ (ໃນເງື່ອນໄຂ ທີ່ສາມາດເປີດປະເທດປົກກະຕິ);**

2) ສູ້ຊົນສ້າງແຜນພັດທະນາແຫຼ່ງທ່ອງທ່ຽວບູລິມະສິດໂດຍພາກລັດ ແລະ ພາກທຸລະກິດໃຫ້ໄດ້ 15 ແຫ່ງ; ສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນໃນການສຳຫຼວດ,ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວໃຫ້ໄດ້ 30 ແຫ່ງ; ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວທີ່ໂດດເດັ່ນສາມາດເຊື່ອມໂຍງກັບພາກພື້ນໃຫ້ມີຄຸນນະພາບ, ໄດ້ມາດຕະຖານຂອງ ສປປລາວ ແລະໄດ້ຮັບຜົນຕອບແທນທາງເສດຖະກິດໄວ ໃຫ້ໄດ້ຈຳນວນ 15 ແຫ່ງ;

3) ສູ້ຊົນຕິດປ້າຍດາວສະຖານທີ່ທ່ອງທ່ຽວລະດັບຊາດ ແລະ ລະດັບທ້ອງຖິ່ນໃຫ້ໄດ້ຫຼາຍກວ່າ 10% ຂອງຈຳນວນສະຖານທີ່ທ່ອງທ່ຽວທີ່ເປີດບໍລິການແລ້ວ. ນຳໃຊ້ລະບົບການຊື້ປີ້ເຂົ້າຊົມ ແລະ ແຈ້ງປີ້ເຂົ້າຊົມແບບທັນສະໄໝຢູ່ສະຖານທີ່ທ່ອງທ່ຽວລະດັບຊາດໃຫ້ສຳເລັດຫຼາຍກວ່າ 15 ແຫ່ງ;

4) ປັບປຸງບັນດາເມືອງທ່ອງທ່ຽວໃຫ້ໄດ້ມາດຕະຖານ ເມືອງທ່ອງທ່ຽວສະອາດ ສປປ ລາວ ແລະ ອາຊຽນໃຫ້ໄດ້ຫຼາຍກວ່າ 10 ແຫ່ງ;

5) ປັບປຸງ ແລະ ກໍ່ສ້າງຫ້ອງນ້ຳສາທາລະນະໃຫ້ໄດ້ມາດຕະຖານຫ້ອງນ້ຳສາທາລະນະສະອາດ ສປປ ລາວ ແລະ ອາຊຽນໃຫ້ໄດ້ ຫຼາຍກວ່າ 20 ແຫ່ງ;

6) ປັບປຸງຄຸນນະພາບເຮືອນພັກແຮມປະຊາຊົນ ແລະ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ມາດຕະ ຖານ ສປປ ລາວ ແລະມາດຕະຖານອາຊຽນ, ໃນນີ້ ເຮືອນພັກແຮມປະຊາຊົນໃຫ້ໄດ້ຫຼາຍກວ່າ 10 ບ້ານ (50ຫຼັງຄາເຮືອນ), ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ຫຼາຍກວ່າ 15 ແຫ່ງ;

7) ສ້າງແລະປັບປຸງນິຕິກຳໃນວຽກງານການຄຸ້ມຄອງຫົວໜ່ວຍທຸລະກິດການທ່ອງທ່ຽວໃຫ້ສອດຄອງ ແລະ ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນໃຫ້ສຳເລັດ 7 ເອກະສານພ້ອມທັງລົງເຜີຍແຜ່ໃນຂອບເຂດທົ່ວປະເທດ.

8) ສ້າງແຜນຍຸດທະສາດການທ່ອງທ່ຽວ ຂອງ ສປປລາວ ໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງປະເທດ ແລະ ສາມາດເຊື່ອມໂຍງກັບສາກົນໄດ້. ສ້າງມາດຕະຖານການການທ່ອງທ່ຽວຂອງສປປລາວໃຫ້ສອດຄ່ອງກັບມາດຕະ ຖານອາຊຽນໃຫ້ສຳເລັດ; ເຜີຍແຜ່ບັນດານິຕິກຳດັ່ງກ່າວ ໃນຂອບເຂດທົ່ວປະເທດ.

9) ສູ້ຊົນປັບປຸງ ແລະ ປະກອບອຸປະກອນຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ຢູ່ແຕ່ລະແຂວງ, ຕາມຕົວເມືອງທ່ອງທ່ຽວ ແລະ ດ່ານສາກົນໃຫ້ເປັນລະບົບ;

10) ສູ້ຊົນຈັດງານປີທ່ອງທ່ຽວລາວຄັ້ງທີ IV ໃນປີ 2024 ໃຫ້ປະກົດຜົນເປັນຈິງ;

11) ສູ້ຊົນຂະຫຍາຍຫ້ອງການຕາງໜ້າການທ່ອງທ່ຽວລາວຢູ່ຕ່າງປະເທດທີ່ເປັນຕະຫຼາດເປົ້າໝາຍຂອງ ສປປ ລາວ ໃຫ້ໄດ້ 1-3 ປະເທດ;

12) ສູ້ຊົນຜະລິດອຸປະກອນການໂຄສະນາການທ່ອງທ່ຽວລາວໃຫ້ໄດ້ຫຼາຍພາສາເຊັ່ນ: ພາສາລາວ, ອັງກິດ, ຈີນ... ເພື່ອສະໜອງໃຫ້ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;

**13) ປັງປຸງ ແລະ ອອກແບບເວັບໄຊການທ່ອງທ່ຽວຄືນໃໝ່ໃຫ້ມີຫຼາຍພາສາ ເພື່ອເຮັດໃຫ້ເປັນທີ່ໜ້າສົນໃຈ ແລະ ສະໜອງຂໍ້ມູນການທ່ອງທ່ຽວທີ່ຫຼາກຫຼາຍໃຫ້ແກ່ນັກທ່ອງທ່ຽວ;**

**14) ສ້າງຖານຂໍ້ມູນໂຄສະນາການທ່ອງທ່ຽວລາວຜ່ານມືຖື (Tourism Mobile Application) ແລະມີຫຼາຍພາສາເຊັ່ນ: ພາສາລາວ, ໄທ, ຈີນ, ອັງກິດ ແລະ ພາສາອື່ນໆ.**

**15) ສູ້ຊົນໃຫ້ພະນັກງານພາກລັດ ແລະ ພາກທຸລະກິດໃນຂະແໜງການທ່ອງທ່ຽວໄດ້ເຂົ້າຮັບການຝຶກອົບຮົມຍົກລະດັບຂີດຄວາມສາມາດດ້ານວິຊາການໃຫ້ໄດ້ 6.000 ເທື່ອຄົນ.**

### 3.4 ວຽກງານຈຸດສຸມຂອງວຽກງານທ່ອງທ່ຽວ

ວຽກງານທ່ອງທ່ຽວປະກອບມີ 6 ເປົ້າໝາຍ ແລະ 26 ວຽກງານຈຸດສຸມດັ່ງນີ້:

**<u>ເພື່ອບັນລຸເປົ້າໝາຍທີ 1</u>:** ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານແລະຄຸນນະພາບປະກອບມີ 5 ວຽກງານຈຸດສູມ:

1) ຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ໃນຂະແໜງການການທ່ອງທ່ຽວໃຫ້ມີຄຸນນະພາບສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ;
2) ສ້າງ ແລະ ປັບປຸງຫຼັກສູດຝຶກອົບຮົມໄຍະສັ້ນແລະຝຶກອົບຮົມຄູຝຶກໃນຂະແໜງການທ່ອງທ່ຽວ;
3) ຈັດຕັ້ງຝຶກອົບຮົມ ແລະ ສໍາມະນາປູກຈິດສໍານຶກ ໃຫ້ປະຊາຊົນທ້ອງຖິ່ນ ກ່ຽວກັບວຽກງານທ່ອງທ່ຽວຢ່າງກວ້າງຂວາງ;
4) ສ້າງເຄືອຂ່າຍປະສານງານລະຫວ່າງພາກລັດ ແລະ ພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດດ້ານວຽກງານພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ;
5) ຈັດຕັ້ງຜັນຂະຫຍາຍສັນຍາຮັບຮູ້ເຊິ່ງກັນແລະກັນກ່ຽວກັບວິຊາຊີບທ່ອງທ່ຽວອາຊຽນ.

**<u>ເພື່ອບັນລຸເປົ້າໝາຍທີ 2</u>:** ພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານແລະສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ປະກອບມີ 4 ວຽກງານຈຸດສຸມຄື:

1) ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ສິ່ງອໍານວຍຄວາມສະດວກ ດ້ານການທ່ອງທ່ຽວ ທັງດ້ານປະລິມານ ແລະ ຄຸນນະພາບ ໃຫ້ໄດ້ຕາມມາດຕະຖານຂອງພາກພື້ນ ແລະ ສາກົນ;
2) ພັດທະນາ ແລະ ປັບປຸງລະບົບການບໍລິການຂົນສົ່ງນັກທ່ອງທ່ຽວທາງອາກາດ, ທາງບົກ ແລະ ທາງນໍ້າ (ໂດຍສົມທົບກັບກະຊວງ ຍທຂ);
3) ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງສິ່ງອໍານວຍຄວາມສະດວກໃນການເດີນທາງທ່ອງທ່ຽວພາຍໃນປະເທດ;

4) ກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງສະຖາບັນການທ່ອງທ່ຽວ/ສູນຝຶກອົບຮົມການທ່ອງທ່ຽວຢູ່ນະຄອນຫຼວງວຽງຈັນ.

**<u>ເພື່ອບັນລຸເປົ້າໝາຍທີ 3</u>:** ສ້າງ, ປັບປຸງ ແລະ ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃນຂະແໜງການທ່ອງທ່ຽວໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະປະກອບມີ 03 ວຽກງານຈຸດສຸມ:

1) ສ້າງ ແລະ ປັບປຸງບັນດານິຕິກຳທີ່ກ່ຽວຂ້ອງໃນຂະແໜງການທ່ອງທ່ຽວ, ພ້ອມທັງເຜີຍແຜ່ໃຫ້ແກ່ພາກລັດ, ພາກທຸລະກິດ ແລະ ປະຊາຊົນທ້ອງຖິ່ນ;
2) ສ້າງ,ປັບປຸງ,ເຜີຍແຜ່ ແລະຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວໃນຂອບເຂດທົ່ວປະເທດ;
3) ຄຸ້ມຄອງ, ຕິດຕາມ ແລະ ກວດກາບັນດາທຸລະກິດໃນຂະແໜງການທ່ອງທ່ຽວໃຫ້ມີການເຄື່ອນໄຫວຢ່າງມີຄຸນນະພາບ ແລະ ໄດ້ມາດຕະຖານລະດັບຊາດ ແລະ ສາກົນ;

**<u>ເພື່ອບັນລຸເປົ້າໝາຍທີ 4</u>:** ພັດທະນາ ແລະ ປັບປຸງ ຜະລິດຕະພັນການທ່ອງທ່ຽວ ແລະ ການບໍລິການໃຫ້ມີຄຸນນະພາບ, ໄປຕາມທິດສີຂຽວ ແລະ ຍືນຍົງປະກອບມີ 06 ວຽກງານຈຸດສຸມ:

1) ຈັດລະດັບສະຖານທີ່ທ່ອງທ່ຽວລະດັບຊາດ ແລະລະດັບທ້ອງຖິ່ນໃນຂອບເຂດທົ່ວປະເທດ;
2) ພັດທະນາວົງຈອນການທ່ອງທ່ຽວເຊື່ອມຕໍ່ລະດັບພາກ ແລະ ການເຊື່ອມຕໍ່ກັບປະເທດໃກ້ຄຽງ;
3) ວາງແຜນພັດທະນາຊັບພະຍາກອນການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ການທ່ອງ ທ່ຽວກະສິກຳໃຫ້ມີຄວາມຍືນຍົງ;
4) ພັດທະນາແລະປັບປຸງຜະລິດຕະພັນການທ່ອງທ່ຽວແບບອະນຸລັກ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ທັງປະລິມານ, ຄຸນນະພາບ ໃຫ້ໄດ້ມາດຕະຖານລະດັບຊາດ ແລະ ພາກພື້ນ, ໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ;
5) ສົ່ງເສີມ ແລະ ຍາດແຍ່ງການເປັນເຈົ້າພາບໃນການຈັດກອງປະຊຸມສຳມະນາ, ງານວາງສະແດງລະດັບຊາດ ແລະລະດັບພາກພື້ນ (MICE) ຢູ່ບັນດາຕົວເມືອງໃຫຍ່ໃນ ສປປ ລາວ;
6) ພັດທະນາລະບົບເກັບກຳ, ວິເຄາະຂໍ້ມູນ ແລະ ລາຍງານສະຖິຕິການທ່ອງທ່ຽວໃຫ້ທັນຕາມການົດເວລາ;

**<u>ເພື່ອບັນລຸເປົ້າໝາຍທີ 5</u>:** ສົ່ງເສີມ ແລະໂຄສະນາການທ່ອງທ່ຽວລາວໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍໃຫ້ໄດ້ທັງປະລິ ມານ ແລະ ຄຸນນະພາບປະກອບມີ 4 ວຽກງານຈຸດສຸມ:

1) ໂຄສະນາໃຫ້ ສປປ ລາວ ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວແບບອະນຸລັກ ແລະ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທີ່ມີຄຸນນະພາບ ແລະ ມີປອດໄພ ໃນອາຊຽນ;

2) ໃຊ້ຍຸດທະສາດການຕະຫຼາດ ເພື່ອດຶງດູດນັກທ່ອງທ່ຽວຕະຫຼາດເປົ້າໝາຍດ້ວຍການສ້າງກິດຈະກຳຕ່າງໆ;

3) ໂຄສະນາການທ່ອງທ່ຽວພາຍໃນ "ລາວທ່ຽວລາວ" ໃນຂອບເຂດທົ່ວປະເທດ;

4) ເພີ່ມທະວີການນຳໃຊ້ພາຫະນະສື່ມວນຊົນລາວ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອໂຄສະນາໃຫ້ເຂົ້າເຖິງນັກທ່ອງທ່ຽວເປົ້າໝາຍ.

**<u>ເພື່ອບັນລຸເປົ້າໝາຍທີ 6</u>:** ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດແລະພາກທຸລະກິດໃນການພັດທະນາ, ໂຄສະນາ ແລະ ຄຸ້ມຄອງການທ່ອງທ່ຽວໃຫ້ມີປະສິດທິພາບພ້ອມທັງລະດົມຂົນຂວາຍການຮ່ວມມືກັບຕ່າງ ປະເທດປະກອບມີ 4 ວຽກງານຈຸດສຸມ:

1) ເພີ່ມທະວີຂອດການປະສານງານຂອງພາກລັດທີ່ກ່ຽວຂ້ອງໃຫ້ມີຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ພັດທະນາການທ່ອງທ່ຽວໃຫ້ມີການດຳເນີນການເຄື່ອນໄຫວຢ່າງມີປະສິດທິພາບ;

2) ສົ່ງເສີມໃຫ້ສະມາຄົມ/ກຸ່ມທຸລະກິດທ່ອງທ່ຽວ,ສະມາຄົມ/ກຸ່ມໂຮງແຮມ ແລະ ຮ້ານອາຫານ, ສະມາຄົມ/ກຸ່ມພະນັກງານນຳທ່ຽວໃຫ້ມີຄວາມເຂັ້ມແຂງທາງດ້ານການບໍລິຫານ ແລະ ຊຸກຍູ້ໃຫ້ມີການສ້າງຕັ້ງກຸ່ມໃນບັນດາແຂວງທີ່ຍັງບໍ່ທັນໄດ້ຮັບການສ້າງຕັ້ງ;

3) ຊຸກຍູ້ ແລະ ສົ່ງເສີມ ການລົງທຶນຂອງພາກລັດ, ການມີສ່ວນຮ່ວມຂອງປະຊາຊົນ, ພາກທຸລະກິດ ທັງພາຍໃນ ແລະຕ່າງປະເທດໃນການພັດທະນາການທ່ອງທ່ຽວ;

4) ເພີ່ມທະວີການຮ່ວມມືກັບພາກພື້ນ ແລະ ສາກົນໃນການພັດທະນາ ແລະຄຸ້ມຄອງການທ່ອງທ່ຽວ.

### 3.5 ແຜນການຈັດຕັ້ງປະຕິບັດ ແລະເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ການເຕີບໂຕສີຂຽວ (Green Growth) ເຂົ້າແຜນ 5 ປີຄັ້ງທີ IX

ເພື່ອຈັດຕັ້ງປະຕິບັດແລະເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງແລະການເຕີບໂຕສີຂຽວໃນຂະແໜງທ່ອງທ່ຽວປະກອບມີ 2 ເປົ້າໝາຍຫຼັກດັ່ງນີ້:

**ເປົ້າໝາຍທີ 1:** ການທ່ອງທ່ຽວຂອງ ສປປ ລາວມີຄຸນນະພາບ ແລະ ໄດ້ມາດຕະຖານປະກອບມີ 1 ແຜນງານຄື:

1) ສ້າງ ແລະ ຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວຂອງລາວແລະຂອງອາຊຽນ ປະກອບມີ 9 ມາດຕຖານຄື: ມາດຕະຖານເມືອງທ່ອງທ່ຽວສະອາດສປປລາວ; ມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວ; ມາດຕະຖານໂຮງແຮມຂຽວອາຊຽນ; ມາດຕະຖານເຮືອນພັກແຮມປະຊາຊົນສປປລາວ; ມາດຕະຖານການທ່ອງ ທ່ຽວແບບປະຊາຊົນມີສ່ວນຮ່ວມ ສປປ ລາວ; ມາດຕະຖານຫ້ອງນ້ຳສາທາລະນະສະອາດ ສປປ ລາວ; ມາດຕະຖານນວດແຜນບູຮານອາຊຽນ;

ມາດຕະຖານຫ້ອງປະຊຸມ ສປປ ລາວ ແລະ ມາດຕະຖານບໍລິສັດທ່ອງທ່ຽວ (ນຳໃຊ້ເງື່ອນໄຂຂອງ GSTC).

**ເປົ້າໝາຍທີ 2:** ເຄືອຂ່າຍການທ່ອງທ່ຽວສີຂຽວມີຄຸນນະພາບ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນກັບພາກພື້ນປະກອບ ມີ 3 ແຜນງານຄື:

1) ປັບປຸງຄຸນນະພາບຂອງເຄືອຂ່າຍການທ່ອງທ່ຽວສີຂຽວ: ພັດທະນາເຄືອຂ່າຍໂດຍສະເພາະຂົງເຂດຈຸດສຸມ: ສະຖານທີ່ທ່ອງທ່ຽວ, ທຸລະກິດທ່ອງທ່ຽວ ແລະ ກິດຈະກຳການທ່ອງທ່ຽວ; ການຫຼຸດຜ່ອນສິ່ງເສດເຫຼືອ; ການນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນ ແລະ ພະລັງງານແບບປະຢັດ.

2) ສ້າງ ແລະ ປັບປຸງນິຕິກຳໃນຂະແໜງການທ່ອງທ່ຽວໃຫ້ສອດຄ່ອງທິດຂຽວ ແລະ ຍືນຍົງປະກອບມີ: ສ້າງນິຕິກຳ ແລະ ກຳນົດນະໂຍບາຍເພື່ອອຳນວຍຄວາມສະດວກໃນການພັດທະນາການທ່ອງທ່ຽວໃນເຂດທຳມະຊາດ;

ການຫຼຸດຜ່ອນມົດລະພິດ, ສິ່ງເສດເຫຼືອ, ນຳໃຊ້ຊັບພະຍາກອນ ແລະ ພະລັງງານແບບປະຢັດ; ນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມໃນຂະແໜງການທ່ອງທ່ຽວ;

3) ຊຸກຍູ້ການຜະລິດ ແລະ ນຳໃຊ້ຜະລິດຕະພັນການທ່ອງທ່ຽວແບບຍືນຍົງ: ປູກຈິດສຳນຶກໃຫ້ພາກທຸລະກິດໃນຂະແໜງການທ່ອງທ່ຽວກ່ຽວກັບການນຳໃຊ້ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ ແລະ ຈັດການສຳມະນາ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ງານວາງສະແດງແນວທາງການພັດທະນາການທ່ອງທ່ຽວແບບຍືນຍົງໂດຍການຮ່ວມມືລະຫວ່າງພາກລັດ, ພາກເອກະຊົນ ແລະ ອົງການຈັດຕັ້ງສາກົນ.

## 3.6 ແຜນການລົງທຶນໃນຂະແໜງການທ່ອງທ່ຽວ

3.6.1 ການລົງທຶນຈາກງົບປະມານຂອງລັດ

ບັນດາໂຄງການລົງທຶນຂອງລັດໃນ 5 ປີຕໍ່ໜ້າ (2021-2025) ຂອງວຽກງານທ່ອງທ່ຽວ ລວມທັງໝົດມີ 39 ໂຄງການ, ລວມມູນຄ່າທັງໝົດ 46.862,00 ລ້ານກີບ.

3.6.2 ການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ ຫຼື ODA)

ນອກຈາກສືບຕໍ່ຈັດຕັ້ງປະຕິບັດ ໂຄງການພັດທະນາ ໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວແບບຍືນຍົງ (ADB) ທຶນຊ່ວຍເຫຼືອລ້າ ໄລຍະ 2 ໃນມູນຄ່າ 47 ລ້ານໂດລາສະຫະລັດ.

4. <u>ວຽກງານເສນາທິການ</u>

**4.1 ຈຸດໝາຍລວມຂອງວຽກງານເສນາທິການ**

**ພັດທະນາລະບົບການຄຸ້ມຄອງບໍລິຫານ, ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ ແລະ ທັນສະໄໝ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລະກອນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ; ເປີດກວ້າງການຮ່ວມມືກັບສາກົນ; ສຶກສາຄົ້ນຄວ້າ ລະດົມແຫຼ່ງທຶນ, ນໍາໃຊ້ງົບປະມານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ວາງແຜນ ແລະ ຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາວຽກງານ ຖວທ ຢ່າງເປັນລະບົບຕໍ່ເນື່ອງ.**

**4.2 ເປົ້າໝາຍຂອງວຽກງານເສນາທິການ**

<u>**ເປົ້າໝາຍທີ 1:**</u> ປັບປຸງກົງຈັກການຈັດຕັ້ງຂອງກະຊວງໃຫ້ເປັນລະບົບກະທັດຮັດ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;

<u>**ເປົ້າໝາຍທີ 2:**</u> ສ້າງ , ປັບປຸງ ບັນດາກົດໝາຍ ແລະ ນິຕິກໍາໃນຂະແໜງ ຖວທ ໃຫ້ຮັດກຸມ ແລະ ສອດຄ່ອງກັບສະ ພາບຄວາມເປັນຈິງໃນແຕ່ລະໄລຍະ ແລະ ເຜີຍແຜ່ໃຫ້ທົ່ວເຖິງ;

<u>**ເປົ້າໝາຍທີ 3:**</u> ພັດທະນາໂຄງລ່າງ ພື້ນຖານ ແລະ ຄຸ້ມຄອງບໍລິຫານວຽກງານ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວໃຫ້ເປັນລະບົບທັນສະໄໝ;

<u>**ເປົ້າໝາຍທີ 4**</u>**:** ເປີດກວ້າງການຮ່ວມມືກັບສາກົນ ແລະ ຍາດແຍ່ງແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາວຽກງານ ຖວທ ໂດຍຜ່ານລະບົບປະຕູດຽວ.

<u>**ເປົ້າໝາຍທີ 5**</u>**:** ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາ ແລະ ການນໍາໃຊ້ງົບປະມານໃນທົ່ວຂະແໜງການຖວທ.

**4.3. ຄາດໝາຍຕົ້ນຕໍຂອງວຽກງານເສນາທິການ**

1) **ສູ້ຊົນຍົກລະດັບວິຊາສະເພາະ ແລະ ທິດສະດີການເມືອງ ໃຫ້ແກ່ພະນັກງານຫຼັກແຫຼ່ງທົ່ວຂະ ແໜງການ ຖວທໃຫ້ ໄດ້ 5 ຊຸດ 250 ຄົນ, ໄປຮຽນພາຍໃນ 257 ຄົນ ແລະ ຮຽນຕ່າງປະເທດບໍ່ຫຼຸດ 175 ຄົນ;**
2) **ສູ້ຊົນສ້າງພະນັກງານນໍາພາ-ຄຸ້ມຄອງ ແລະ ສືບທອດປ່ຽນແທນ ຂັ້ນສູນກາງໃຫ້ໄດ້ 120 ຄົນ;**
3) **ສູ້ຊົນສ້າງຖານຂໍ້ມູນ ແລະ ສໍານົວເອກະສານ ຂອງຂະແໜງ ຖວທ ໃຫ້ເຂົ້າສູ່ລະບົບ ແລະ ທັນສະ ໄໝ ໃຫ້ໄດ້ 70%; ສູ້ຊົນສ້າງໂຄງລ່າງ ພື້ນຖານ ແລະ ປະກອບວັດຖຸອຸປະກອນຮັບໃຊ້ວຽກງານເສນາທິການ ໃຫ້ມີປະລິມານ ແລະ ຄຸນນພາບສູງຂຶ້ນກວ່າເກົ່າ;**

4) **ສູ້ຊົນຍົກລະດັບສ້າງ, ປັບປຸງຫຼັກສູດການຮຽນ-ການສອນ ໃຫ້ມີຄຸນນະພາບດ້ານຕ່າງໆນັບແຕ່ລະດັບພື້ນຖານຮອດລະດັບຊັ້ນສູງ, ປະລິນຍາຕີ ແລະ ປະລິນຍາໂທ ໃນຂະແໜງ ຖວທ ໃຫ້ສຳເລັດ 70%;**
5) **ສູ້ຊົນສ້າງ, ປັບປຸງກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍຂອງຂະແໜງການ ຖວທ 20 ສະບັບ;**
6) **ສູ້ຊົນສ້າງແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສຳລັບ 2025-2030 ໃຫ້ສຳເລັດ;**
7) **ສູ້ຊົນຄົ້ນຄວ້າ ແລະ ສ້າງຕົວຊີ້ບອກສະຖິຕິຂອງຂະແໜງ ຖວທ ທີ່ຕິດພັນກັບການເຕີບໂຕສີຂຽວໃຫ້ໄດ້ຢ່າງໜ້ອຍ 0.5% ຂອງຕົວຊີ້ບອກທັງໝົດຂະແໜງ ຖວທ;**
8) **ສູ້ຊົນຈັດຕັ້ງປະຕິບັດໃຫ້ໄດ້ 4 ການສຳຫຼວດຕົວແທນໃນຂົງເຂດວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ;**
9) **ສູ້ຊົນຍົກລະດັບບົດບາດແມ່ຍິງເຂົ້າໃນຕຳແໜ່ງນຳພາ ແລະ ເຂົ້າເຖິງແຫຼ່ງການສຶກສາໃຫ້ໄດ້ມາດຖານ ໃຫ້ໄດ້ 15% ແລະ 10% ຕາມລາດັບ;**

**4.4 ວຽກງານຈຸດສຸມຂອງວຽກງານເສນາທິການ**

ວຽກງານເສນາທິການ ປະກອບມີ 5 ເປົ້າໝາຍແລະລວມມີ 20 ວຽກງານຈຸດສຸມດັ່ງນີ້:

**<u>ເພື່ອບັນລຸເປົ້າໝາຍທີ 1:</u>** ປັບປຸງກົງຈັກການຈັດຕັ້ງຂອງກະຊວງ ໃຫ້ເປັນລະບົບກະທັດຮັດ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ມີ 7 ວຽກງານຈຸດສຸມຄືດັ່ງນີ້:

1) ປັບປຸງກົງຈັກການຈັດຕັ້ງຂອງຂະແໜງການ ຖວທ ໃຫ້ຄົບຊຸດ, ກະທັດຮັດ, ມີຄວາມເຂັ້ມແຂງ ແລະ ເປັນລະບົບ;
2) ຄົ້ນຄວ້າຈັດວາງຕຳແໜ່ງງານໃຫ້ແທດເໝາະກັບຄວາມຮູ້, ຄວາມສາມາດ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ;
3) ຍົກສູງ, ປັບປຸງວຽກພັກ ແລະ ອົງການຈັດຕັ້ງມະຫາຊົນໃຫ້ມີຄວາມເຂັ້ມແຂງ;
4) ປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນຂອງຂະແໜງການ ຖວທ ຕາມລະບຽບຫຼັກການ;
5) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນໃນຂະແໜງການ ຖວທ ທັງສູນກາງ ແລະ ທ້ອງຖິ່ນຢ່າງເປັນລະບົບຕໍ່ເນື່ອງ;
6) ພັດທະນາຊັບພະຍາກອນມະນຸດໃນຂະແໜງ ຖວທ ໃຫ້ມີຄວາມສາມາດ, ປັບປຸງຫຼັກສູດການຮຽນການສອນໃຫ້ເຊື່ອມໂຍງກັບສາກົນເທື່ອລະກ້າວ, ສ້າງເຄືອຂ່າຍການປະສານງານພາກລັດ, ເອກະຊົນ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາ ໃນຂະແໜງ ຖວທ;

7) ສົ່ງເສີມ, ໂຄສະນາ ແລະ ເຜີຍແຜ່ຄວາມເຂົ້າໃຈບົດບາດຍິງ-ຊາຍໃນ ຂົງເຂດວຽກງານ ຖວທ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ.

**<u>ເພື່ອບັນລຸເປົ້າໝາຍທີ 2</u>:** ສ້າງ , ປັບປຸງ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂະແໜງການ ຖວທ ໃຫ້ຮັດກຸມ ແລະສອດຄ່ອງ ກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ແລະ ເຜີຍແຜ່ໃຫ້ທົ່ວເຖິງ; ຈະຕ້ອງປະຕິບັດ 2 ວຽກງານຈຸດສຸມຄືດັ່ງນີ້

1) ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂະແໜງການ ຖວທ;
2) ປະສານສົມທົບ ແລະ ຊຸກຍູ້ການຈັດຕັ້ງປະຕິບັດເຜີຍແຜ່ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍຂອງຂະແໜງ ການ ຖວທ;

**<u>ເພື່ອບັນລຸເປົ້າໝາຍທີ 3</u>:** ພັດທະນາພື້ນຖານໂຄງລ່າງ ແລະ ຄຸ້ມຄອງບໍລິຫານວຽກງານ ຖວທ ໃຫ້ເປັນລະບົບທັນສະໄໝ; ຈະຕ້ອງປະຕິບັດ 2 ວຽກງານຈຸດສຸມທີຄືດັ່ງນີ້:

1) ສ້າງ ແລະ ປັບປຸງຖານຂໍ້ມູນ(ລະບົບເຄືອຂ່າຍແນັດເວີກ) ຂອງຂະແໜງ ຖວທ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ມີຄຸນນະພາບ;
2) ຄຸ້ມຄອງ ແລະ ປົກປັກຮັກສາຊັບສິນ-ທີ່ດິນ, ພື້ນຖານໂຄງລ່າງຂອງກະຊວງ ຖວທ.

**<u>ເພື່ອບັນລຸເປົ້າໝາຍທີ 4</u>:** ເປີດກວ້າງການຮ່ວມມືກັບສາກົນ ແລະ ຍາດແຍ່ງແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາວຽກງານຖວທ ໂດຍຜ່ານລະບົບປະຕູດຽວ ມີ 5 ວຽກງານຈຸດສຸມຄືດັ່ງນີ້:

1) ຜັນຂະຫຍາຍນະໂຍບາຍການຕ່າງປະເທດຂອງພັກ-ລັດ, ບັນດາສັນຍາຮ່ວມມືໃນພາກພື້ນ ແລະ ສາກົນໃຫ້ຂະແໜງການ ຖວທ.
2) ສົ່ງເສີມການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ; ປະເທດອ້ອມຂ້າງ; ພາກພື້ນ ແລະ ອົງການຈັດຕັ້ງສາກົນ; ຄົ້ນຄວ້າຍາດແຍ່ງ ແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາວຽກງານ ຖວທ;
3) ເສີມຂະຫຍາຍການຮ່ວມມືແລກປ່ຽນບົດຮຽນສອງຝ່າຍ,ຫຼາຍຝ່າຍ ແລະ ເຊື່ອມໂຍງກັບສາກົນໃນວຽກງານຖວທ;
4) ປະຕິບັດພັນທະໃນການເປັນສະມາຊິກຂອງອາຊຽນ, ພາກພື້ນ ແລະ ອົງການຈັດຕັ້ງສາກົນ;

5) ປັບປຸງກົນໄກ, ຂອດປະສານງານວຽກງານຮ່ວມມືສາກົນໃນຂະແໜງ ຖອທ ໃຫ້ເຂົ້າສູ່ລະບົບປະຕູດຽວ.

**<u>ເພື່ອບັນລຸເປົ້າໝາຍທີ 5:</u>** ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາ ແລະ ການນຳໃຊ້ງົບປະມານໃນທົ່ວຂະແໜງການ ຖອທ ໃຫ້ມີປະສິດທິຜົນ, ໂປ່ງໃສ, ຖືກຕ້ອງຕາມລະບຽບກົດໝາຍ ແລະ ສາມາດກວດສອບໄດ້;ຈະຕ້ອງປະຕິບັດ 4 ວຽກງານຈຸດສຸມຄືດັ່ງນີ້:

1) ສ້າງຍຸດທະສາດ, ແຜນພັດທະນາວຽກງານຖອທ 2025-2030;
2) ພັດທະນາ ແລະ ປັບປຸງລະບົບບັນຊີອົງການຈັດຕັ້ງລັດ, ບັນຊີຊັບສິນ-ທີ່ດິນ ໃຫ້ສົມບູນ ແລະ ເຊື່ອມຕໍ່ຂໍ້ມູນດ້ານບັນຊີລະຫວ່າງ ກົມການເງິນ ກັບ ແຕ່ລະກົມກອງຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ເປັນລະບົບ, ທັນສະໄໝວ່ອງໄວ;
3) ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ, ວຽກງານຈຸດສຸມ ແລະການພັດທະນາວຽກງານຖອທ;
4) ພັດທະນາແລະປັບປຸງການເກັບກຳ, ສັງລວມ, ວິໄຈຂໍ້ມູນສະຖິຕິຂະແໜງ ຖອທ ໃຫ້ເປັນລະບົບ ແລະ ສູ້ຊົນສ້າງເອກະສານສະຖິຕິ ຖອທ ຂອງບັນດາແຂວງໃຫ້ສຳເລັດໃນທົ່ວປະເທດ.

## 4.5 ແຜນການລົງທຶນໃນຂະແໜງການເສນາທິການ

### 4.5.1 ການລົງທຶນຈາກງົບປະມານຂອງລັດ

ໂຄງສ້າງການລົງທຶນຂອງລັດໃນຂະແໜງເສນາທິການແມ່ນແນ່ໃສ່ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ 5 ປີຄັ້ງທີ VIII (2016-2020)ໃຫ້ສຳເລັດເພື່ອບັນລຸຕາມຄາດໝາຍ, ເປົ້າໝາຍ, ຄາດໝາຍຕົ້ນຕໍຂອງວຽກເສນາທິການໃຫ້ສຳເລັດຂອງວຽກງານເສນາທິການປະກອບມີທັງໝົດມີ 11 ໂຄງການລວມມູນຄ່າປະມານ 17.542,00 ລ້ານກີບ.

# ພາກທີ IV
# ກົນໄກ, ມາດຕະການ ແລະການຕິດຕາມກວດກາ-ປະເມີນຜົນ

## 1. ກົນໄກໃນການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ຖວທ 5 ປີ 2021-2025 ມີຜົນສຳເລັດເປັນຢ່າງດີນັ້ນແມ່ນໜ້າທີ່ຂອງທຸກພາກສ່ວນພາຍໃນຂະແໜງການ ຖວທ ແລະ ການປະສານສົມທົບຂອງຂະແໜງການອື່ນໆ ທີ່ກ່ຽວຂ້ອງນັບແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ມີຄວາມເປັນເອກະພາບກັນ. ພ້ອມກັນຮັບຮູ້, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດການຫັນເປັນແຜນການຢ່າງຕັ້ງໜ້າໂດຍຕິດພັນກັບການສ້າງແຜນວຽກ, ແຜນຄົນ ແລະ ແຜນງົບປະມານຂອງຕົນ, ກົນໄກການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ຖວທ ສະບັບນີ້ສັງລວມໄດ້ດັ່ງນີ້:

- ກະຊວງ ຖວທ ເຜີຍແຜ່ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການຖວທ 2021-2025 ເພື່ອໃຫ້ແຕ່ລະພາກ ສ່ວນທີ່ກ່ຽວຂ້ອງລວມທັງພະແນກ ຖວທ ຂອງບັນດາແຂວງ, ນະຄອນຫຼວງ, ບັນດາຫົວໜ່ວຍທຸລະກິດໃນຂະແໜງການ ຖວທ ຈັດຕັ້ງຜັນຂະຫຍາຍແຜນການນີ້ໃຫ້ເປັນອັນລະອຽດ, ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ;
- ເພື່ອຮັບປະກັນການບັນລຸຈຸດໝາຍລວມ, ເປົ້າໝາຍ ແລະ ຄາດໝາຍຕົ້ນຕໍຂອງການພັດທະນາວຽກງານ ຖວທ ທີ່ກຳນົດໄວ້ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນໂດຍນຳໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງແຕ່ຂັ້ນສູນກາງຫາທ້ອງຖິ່ນເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ;
- ບັນດາພາກສ່ວນຕ່າງໆຕ້ອງໄດ້ຫັນບັນດາວຽກງານຈຸດສຸມ ອອກເປັນໂຄງການລະອຽດຕາມພາລະບົດບາດຂອງຕົນໂດຍໃຫ້ສອດຄ່ອງລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ, ການສ້າງແຜນງານຍ່ອຍແລະໂຄງການລະອຽດຕ້ອງມີການດຸ່ນດ່ຽງຮອບດ້ານເຊັ່ນ: ການດຸ່ນດ່ຽງລະຫວ່າງຄວາມຕ້ອງການດ້ານງົບປະມານກັບຄວາມສາມາດຂອງການສະໜອງດ້ານງົບປະມານ, ໝາຍຄວາມວ່າມີແຜນການມີໂຄງການແລ້ວຕ້ອງມີທຶນຕົວຈິງເພື່ອຄ້ຳປະກັນການປະຕິບັດໂຄງການໃຫ້ສຳເລັດຕາມຄາດໝາຍ; ຕ້ອງໄດ້ຄຳນຶງເຖິງທ່າແຮງ ແລະ ຄວາມສາມາດຂອງຂະແໜງການ, ສຳລັບບັນດາແຂວງທີ່ຍັງບໍ່ທັນມີຄວາມເຂັ້ມແຂງທາງດ້ານການຂຶ້ນແຜນນຳໃຊ້ງົບປະມານ ແລະ ຄຸ້ມຄອງໂຄງການ, ກະຊວງ ຖວທ ໄດ້ມີນະໂຍບາຍຊຸກຍູ້ ແລະ ປະສານສົມທົບເພື່ອຊ່ວຍເຫຼືອທາງດ້ານວິຊາການ;
- ນຳໃຊ້ທຸກແຫຼ່ງທຶນທີ່ມີຈຳກັດໃຫ້ລວມສູນເປັນເອກະພາບປະຕິບັດການດຸ່ນດ່ຽນຢ່າງເຂັ້ມງວດ, ທຸກໂຄງການຕ້ອງມີຜູ້ຮັບຜິດຊອບ, ຜ່ານການເຮັດບົດວິພາກເສດຖະກິດຢ່າງຄົບຖ້ວນ ແລະ

ຖືກຕ້ອງຕາມວິໄນແຜນການ-ການເງິນໃນເວລາການຈັດຕັ້ງປະຕິບັດຕ້ອງມີການຄຸ້ມຄອງ, ກວດກາ, ປະເມີນຜົນຕາມຂັ້ນຕອນ ແລະ ລະບຽບການ;

- ກຳນົດໃຫ້ຈະແຈ້ງກ່ຽວກັບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບລະຫວ່າງອົງການຄຸ້ມຄອງຂັ້ນສູນກາງກັບທ້ອງຖິ່ນ, ເພີ່ມທະວີການປະສານງານຢ່າງກົມກຽວລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບພາກເອກະຊົນກ່ຽວກັບການຈັດຕັ້ງປະຕິບັດ ແລະ ການຕິດຕາມແຜນພັດທະນາຂອງຂະແໜງການໂດຍມີການປຶກສາຫາລືຢ່າງເປັນປະຈຳກ່ຽວກັບບັນຫາການພັດທະນາຕ່າງໆຢ່າງເປັນເຈົ້າການ;
- ສ້າງຂອບການປະສານງານລະຫວ່າງພາກລັດ ແລະ ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນ, ການຮ່ວມມືກັບຕ່າງປະເທດຄຽງຄູ່ກັບການຍາດແຍ່ງທຶນກູ້ຢືມແລະຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ບໍ່ມີເງື່ອນໄຂຜູກມັດ, ຍາດແຍ່ງການລົງທຶນໂດຍກົງຈາກຕ່າງປະເທດເພື່ອປະຕິບັດໂຄງການໂດຍຮູບແບບຕ່າງໆ ໂດຍຜ່ານກົນໄກການລົງທຶນປະຕູດຽວທີ່ກຳນົດໃນກົດໝາຍ;
- ຈັດວາງພະນັກງານໃຫ້ສອດຄ່ອງຕາມທິດສັບຊ້ອນຄືນໃຫ້ເໝາະກັບວຽກ, ເອົາໃຈໃສ່ການປະຕິບັດນະໂຍບາຍ ແລະສົ່ງເສີມຄວາມກ້າວໜ້າຂອງພະນັກງານໄປຄຽງຄູ່ກັບການປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ປະພຶດບໍ່ດີ, ລະ ເມີດລະບຽບຫຼັກການ ແລະ ຂໍ້ຫ້າມຕ່າງໆ.

## 2. ມາດຕະການໃນການຈັດຕັ້ງປະຕິບັດ

- ເອົາໃຈໃສ່ປັບປຸງອຸປະກອນ ແລະ ພາຫະນະໃນຂະແໜງສື່ມວນຊົນໃຫ້ມີຄວາມທັນສະໄໝສືບຕໍ່ຫັນຈາກອານາລັອກໄປສູ່ດີຈິຕອນໃຫ້ສຳເລັດໃນທົ່ວປະເທດ. ເອົາໃຈໃສ່ນຳໃຊ້ທ່າແຮງຂອງພາກທຸລະກິດເພື່ອໃຫ້ມີການແຂ່ງຂັນດ້ານການຕະຫຼາດໃນຂະແໜງສື່ມວນຊົນ;
- ສືບຕໍ່ອະນຸລັກຮັກສາ ແລະ ສົ່ງເສີມຮີດຄອງປະເພນີວັດທະນະທຳອັນດີງາມຂອງຊາດໃຫ້ມີຄວາມຍືນຍົງໄປຄຽງຄູ່ກັບການປັບປຸງ, ສ້າງ ແລະ ພັດທະນາຜະລິດຕະພັນດ້ານວັດທະນະທາໃຫ້ເປັນເສດຖະກິດຄວາມຫຼາກຫຼາຍທັງດ້ານປະລິມານ ແລະ ຄຸນນະພາບ, ຕິດພັນກັບການທ່ອງທ່ຽວ ແລະ ບັນດາຂະແໜງການປິ່ນອ້ອມ;
- ປັບປຸງການບໍລິການດ້ານການທ່ອງທ່ຽວໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບໂດຍການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດເຮັດໃຫ້ຫານທ່ອງທ່ຽວໄດ້ເປັນທ່າແຮງເປັນເສົາຄ້ຳເສດຖະກິດຂອງປະເທດເພື່ອຊ່ວຍຊຸກຍູ້ການເຕີບໂຕຂອງເສດຖະກິດ ແລະ ເປັນພື້ນຖານໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ;
- ລະດົມທຸກພາກສ່ວນໃນຂະແໜງການ ຖວທ ທັງພາກລັດ ແລະ ພາກທຸລະກິດເຂົ້າໃນການຂຸດຄົ້ນ ແລະ ລະດົມແຫຼ່ງທຶນ:

❖ ຊຸດຄົ້ນແຫຼ່ງທຶນພາຍໃນ

- ຄົ້ນຄວ້າຖານລາຍຮັບໃຫ້ເພີ່ມຂຶ້ນຈາກທີ່ມີຢູ່ໃນປັດຈຸບັນກ້າວໄປເຖິງການສ້າງລາຍຮັບວິຊາການກຸ້ມຕົນເອງເທື່ອລະກ້າວ;
- ລະດົມພາກສ່ວນເອກະຊົນໃຫ້ມີສ່ວນຮ່ວມໃນການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ພັດທະນາຜະລິດຕະພັນຂອງຂະແໜງການ ຖວທ ໃນຮູບແບບຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ.

❖ ລະດົມການຊ່ວຍເຫຼືອທາງການເພື່ອການພັດທະນາ (ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ)

ໂດຍນຳໃຊ້ກົນໄກຕ່າງໆເປັນຕົ້ນກົນໄກກອງປະຊຸມໂຕະມົນໃນການລະດົມທຶນ; ການລະດົມຈາກເພື່ອນມິດຍຸດທະສາດ, ປະເທດພາກພື້ນ ແລະ ສາກົນເພື່ອມາພັດທະນາຂະແໜງການ ຖວທ

- ປັບປຸງກົນໄກ ແລະ ເຄື່ອງມືຄຸ້ມຄອງລາຍຮັບ-ລາຍຈ່າຍຂອງຂະແໜງການ ຖວທ ໃຫ້ຮັດກຸມ ແລະປະສິດທິຜົນສູງ.ຮັບປະກັນການຄຸ້ມຄອງລາຍຈ່າຍໃຫ້ໄປຕາມແຜນທີ່ສະພາແຫ່ງຊາດໄດ້ຮັບຮອງ. ນຳໃຊ້ທຶນໃຫ້ມີປະສິດທິຜົນສູງສຸດ. ລາຍຈ່າຍປົກກະຕິກໍຕ້ອງຂຶ້ນແຜນລະອຽດ ແລະ ກວດກາການໃຊ້ຈ່າຍຢ່າງເປັນລະບົບ;
- ສົ່ງເສີມການລົງທຶນຂອງພາກທຸລະກິດໃສ່ການພັດທະນາວຽກງານ ຖວທ ຕາມເຕັກໂນໂລຊີ ແລະວິທະຍາການໃໝ່ຕ່າງໆທີ່ທັນສະໄໝ ແລະ ສອດຄ່ອງກັບສະພາບຕົວຈິງຂອງວຽກງານຂະແໜງການເພື່ອການພັດທະນາແບບຍືນຍົງ.
- ສົ່ງເສີມການມີສ່ວນຮ່ວມຂອງພາກທຸລະກິດ ແລະ ຜູ້ປະກອບການຂອງຂະແໜງການ ຖວທ ກ່ຽວກັບການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ກຳນົດມາດຕະຖານການພັດທະນາການບໍລິການ, ບັນດານະວັດຕະກຳໃໝ່ ແລະ ການນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ທັນສະໄໝ.

**3. ການຕິດຕາມ, ກວດກາ ແລະ ປະເມີນຜົນ**

- ທຸກພາກສ່ວນຕ້ອງເອົາໃຈໃສ່ຮັບຜິດຊອບໃນການຄຸ້ມຄອງຕິດຕາມ, ກວດກາແລະປະເມີນຜົນຄວາມຄືບໜ້າຂອງການປະຕິບັດບັນດາຄາດໝາຍຕົ້ນຕໍ ແລະ ວຽກງານຈຸດສຸມຂອງຕົນພ້ອມທັງລາຍງານເປັນລາຍລັກອັກສອນໃຫ້ການນຳກະຊວງຢ່າງເປັນປົກກະຕິ ແລະ ເປັນລະບົບ, ຖ້າຫາກມີບັນຫາເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດຕ້ອງໄດ້ມີການປັບປຸງໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບດັ່ງກ່າວ;
- ໃນການຊີ້ນຳລວມການຕິດຕາມ, ກວດກາ ແລະ ປະເມີນຜົນທຸກພາກສ່ວນຕ້ອງເຮັດໜ້າທີ່ໃນການຄົ້ນຄວ້າ, ສ້າງບັນດາຕົວຊີ້ບອກແລະຄາດໝາຍຕົ້ນຕໍຂອງແຕ່ລະວຽກຈຸດສຸມທີ່ກຳນົດໄວ້ຢູ່ໃນແຜນການ. ການຕິດຕາມ, ກວດກາປະເມີນຜົນແລະລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ

ໃຫ້ເປັນປົກກະຕິ; ນຳໃຊ້ຜົນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນເຂົ້າໃນການສ້າງແຜນໃນແຕ່ລະໄລຍະ;

- ໃນການຄຸ້ມຄອງຮັກສາລະບົບຕິດຕາມ, ກວດກາ ແລະ ປະເມີນຜົນຈະຕ້ອງມີການປັບຕົວຊີ້ບອກ ແລະຄາດໝາຍຂອງແຜນ 5 ປີໃຫ້ທັນສະພາບການແຕ່ລະໄລຍະຕາມສະພາບຕົວຈິງ ຫຼື ສາມາດປັບຄາດໝາຍໂດຍອີງໃສ່ຜົນການປະເມີນຄວາມຄືບໜ້າຫຼ້າສຸດ (ເຊິ່ງສາມາດປັບໄດ້ໄລຍະທີ່ມີການປະເມີນສຳເລັດຈາກການຈັດຕັ້ງປະຕິບັດຫຼືໃນໄລຍະທີ່ກະຊວງສ້າງແຜນປະຈຳປີ);
- ລະບົບການຕິດຕາມ, ກວດກາ ແລະ ປະເມີນຜົນດັ່ງກ່າວນີ້ຈະຕ້ອງແທດເໝາະກັບຕົວຈິງ ແລະ ຄາດໝາຍຖືກຕ້ອງຕາມຕົວຈິງເຊິ່ງແຫຼ່ງຂໍ້ມູນສາມາດກວດສອບໄດ້;
- ມອບໃຫ້ຄະນະກວດກາຂັ້ນກະຊວງ, ກົມກວດກາ, ຂະແໜງການກວດກາຂອງພະແນກ ຖວທ ປະຈຳບັນດາແຂວງ,ນະຄອນຫຼວງ ສົມທົບກັບກົມວິຊາການທີ່ກ່ຽວຂ້ອງໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິ ບັດແຜນຂອງພາກສ່ວນຕົນໃນແຕ່ລະໄລຍະຕາມພາລະບົດບາດຢ່າງຕັ້ງໜ້າ ແລະ ທັນການ.

ລັດຖະມົນຕີ

ສຈ.ປອ. ກິແກ້ວ ໄຊຄຳພິທູນ